# ຊາດລາວ

ສະບັບວິຈານ
ຣາຍເດືອນ




ສາມດາວ ★★★
SAM DAO
U.S.A. BLEND
CIGARETTES
★★★ CIGARETTE
★ກິ່ນຫອມຊວນສູບ!
★ຄຸນພາບດີເດັ່ນ!
★ລາຄາຖືກ!....
"ສູບແລ້ວ ຈິດໃຈແຈ່ມ
ໃສ ສະບາຍອຸຣາ"
ກອກຢາກົ້ນກອງ
ຜລິຕພັນຂອງໂຮງງານຢາສູບ
ສຣີວຽງຄຳ
ບໍຣິສັທ ລາວວຽງພານິຊ. ເລຂທີ 30.32 (ສີຫອມ) ຈັດຈຳໜ່າຍ. ໂທຣ. 2016

## ປະສົພການຂອງນັກຂ່າວ

●

ມາອີກແລ້ວປ.ນ້ອຍປ.ໃຫຍ່.... ຫລັງຈາກນັ່ງຂຽນຫນັງສືປື້ນຫນ້າໃສ່ກັນ ມາໄດ້ຫລາຍປີແລ້ວ ຕ່າງຄົນຕ່າງກົ້ມຫນ້າຂຽນຂອງໃຜຂອງລາວ ມີເຣື່ອງກໍຄຸຍກັນເຫລັ້ນແດ່ອີຫລີແດ່.... ບາງໂອກາດມີຂວດວິສກີ້ຂອງສມາຊິກຝາກມາ ກໍນັ່ງແກ້ມກັນເລີຍ ວຽກການແລ້ວໆກໍບໍ່ຍອມລຸກຫນີ ນັ່ງດວດກັນຢູ່ຈົນຄ່ຳຈົນມືດ.... ແລະກໍມີຫວັງຕ້ອງຍາມໃດຕ້ອງມີຣາຍການໃຫຍ່ໆ ຄ່ອຍໄປໄດ້ ບັນນາທິການຫນຸ່ມວ່າ

"ແລ້ວຂ່າວເດຈັ້ນ ຫາເອົາແນວໃດ?" ປ.ຈຸນລະມຸນຕຣີ ຖາມ

"ຂ່າວຄົນກາງຄືນກັບຂ່າວສັງສັນ ກໍມີພວກໄຕຂອງຄົນແລ້ວເດ ເຮົາບໍ່ມີເຫດຜົນພໍຈະອອກກາງຄືນໄດ້ຄືພວກໄຕໄດ້ "ພອນ ຈັນທະຣາຊວ່າ ເນັ້ຽໂຕເດສ່ຽວ? " ປ ຕຣີຈັນຖາມ ມ. ມະລາວັນ

"ເນັ້ຽເຮົາໄດແດ່ ເພາະກຳລັງເຂົ້າໃຫມ່ປານັ້ນ

"ມັ້ນແຫລະແມ່ເສືອກຳລັງຈະອາດລອດລາຍແລ້ວຈັ່ງຣະວັງ" ວິຊຽນຣະວົວັນ ລອງບັນນາທິການຜູ້ສຸຂຸມກ່າວຍິ້ມໆ

"ເນັ້ຽອ້າຍເດຈັ້ນ ເຂົາວ່າແນວໃດແດ່ ? ມ.ມະລາວັນ ຖາມຄືນ

"ເຈົ້າໆ....ເຂົາບໍ່ໄດ້ວ່າຫຍັງດອກ....ເນັ້ຽສັ່ງຄວາມມາວ່າ ຂໍເງິນຈັກ 30.000 ມັນໄປຕໍ່ນ້ຳປະປາເຂົ້າເຮືອນຍັງບໍ່ມີປັນຍາຫາໃຫ້ເຂົາປານນີ້ ກາຍມາສອງເດືອນລະ"

"ອ້າຍກະດຽວວ່າເງິນ ເດືອນສີ່ສິບກວ່າຫ້າສິບພັນໄປເຮັດຫຍັງຫມົດ" ປ. ຈຸນລະມຸນຕຣີ ຖາມ

"ເຈົ້າໆ....ສູຢາ....ຖຸຍ ກິນຢູ່ກັບປາກແຫ້ງຍັງມາ....ຖາມເອົາສູຄິດເບິ່ງຄ່າເຫລົ້າເດືອນນຶ່ງຫມົດເທົ່າໃດຄ່າຢາສູບແດ່ຢາສີດແດ່ ຄ່າກິນເຂົ້າແດ່ຄ່າທ່ຽວແດ່ແລະສຸກຣູ້ຕົວ

# ເນັ້ຽຄົນຫນັງສືພິມພ໌

▲ ໂດຍ ▲ ລາວກະທິບໄມ້

ຕລຸບຣາຕຣີອີກໃນຄືນນັ້ນ ... ກວ່າຈະກັບເມື່ອບ້ານເມືອເຮືອນປະຊາຣາສ ກໍພາກັນນອນຝັນເກືອບຫມົດແລ້ວ....

ມັ້ນກໍດີກັນຫລັງຈາກແທ່ນພິມຫນັງສືພິມດັງຕຸມຕ່າມໆຢູ່ຫ້ອງຕະລ່າງມິດລົງ ກໍມີພະນັກງານໃຈດີຖືຫນັງສືພິມຂຶ້ນມາໃຫ້ກອງບັນນາທິການໄດ້ຊົມຜົນງານ ຂອງຕົວເອງອີກຄັ້ງນຶ່ງ.... ເມື່ອວິພາກວິຈານເຣື່ອງການບ້ານການເມືອງໄປດົນແລ້ວ ກໍອ່ວາຍມາຫາເຣື່ອງການມຸ້ງຫັນທີ....

"ເນັ້ຽເຮົາບໍ່ມັກໃຫ້.ຮ້າໄປທ່ຽວເດັກນະ ຖ້າຈະໄປ

ເມັຽເຮົາບໍ່ຢູ່ວຽງນະຄິດເຫັນໃຈກັນແດ່ແມ້....ເອົາບໍ້" ສຽງຫົວຂຶ້ນຟົດສນັ່ນ

"ຣິຫົວຫຍັງທ້າວ ປ ທັງສອງເດຊັ້ນເມັຽເຮັດຫຍັງແດ່" ວິຊຽນຖາມຄືນ

"ເມັຽຂ້ອຍເຂົາຮູ້ຈັກໃຈຜົວດີດອກວ່າ ຜົວມັກໜັງສືພິມເຂົາປ່ອຍໃຫ້ໄປຕາມໃຈ " ປ ຈຸລມຸນຕຣີວ່າ

"ໂທ່ໆ....ຢ່າມາຫລອກລວງອ້າຍນ້ອງຊາຍເຮົາເຫັນເມັຽໂຕນອນຮ້ອງໃຫ້ເກືອບທຸກຄືນ " ມ ມະລາວັນວ່າ

"ໂອຍ ເຂົາຮ້ອງໃຫ້ຍ້ອນຄິດຮອດແມ່ເຂົາດອກ" ປ ແກ້ຕົວໄປແບບນ້ຳອຸ່ນໆພາໃຫ້ທຸກຄົນຍິ້ມ

ເມັຽໜໍ່ ປ ເດເຂົາວ່າເປັນແມ່ເສືອແມ່ນແທ້ບໍ່ ? ພອນຈັນທະຣາຊບັນນາທິການສີຕາຖາມ

ເມັຽເຮົານະເຂົາເປັນຂ້າຣາຊການຜູ້ ນຶ່ງທີ່ມີຄວາມຮອບຄອບຮູ້ຈັກຜິດຮູ້ຈັກຖືກ....ເຂົາຮູ້ວ່າເຮົາເປັນຄົນຂຽນຂ່າວກ່ຽວກັບຣາຕຣີເຂົາຈຶ່ງປ່ອຍເຮົາຕາມສບາຍ....ເຮົາເສັຽຢ່າງດຽວທ່ຽວເອົາຂ່າວກາງຄືນຫລາຍເປືອງເງິນທອະ" ປ ຕຣີຈັນທຣ໌ຕອບ

ໄດ້ຍິນຂ່າວວ່າແຕ່ກ່ອນເຄີຽອອກອາລະວາດຈີມ ປ ຂອງເຮົາຫມູບຕູບຟູບແມ່ນບໍ່ລະ ? " ປ ຈຸລມຸນຕຣີວ່າ

"ບໍ່ມີຢ່າມາຫາເຣື່ອງ" ປ ຕຣີຈັນທຣ໌ ແກ້ຕົວຄໍເປັນເອັນ

"ອ້າວກໍຄືນນັ້ນຢູ່ຊັ້ນສອງລີໂດທັ້ນເດກະດຽວວ່າຜູ້ນຶ່ງນັ້ງຮ້ອງໃຫ້ຊິກໆໃນຫ້ອງອີກຜູ້ນຶ່ງເກືອບໂດດຜູ້ ນຶ່ງຫນີກໍບໍ່ແມ່ນເສືອທອງບໍ້"

"ເອີ....ນັ້ນ .... ນັ້ນເຣື່ອງຫລາຍປີມາແລ້ວ.... ແຕ່ດຽວນີ້ຕ່າງຄົນກໍຮູ້ຈັກໃຈກັນດີແລ້ວເຖົ້າແກ່ມາກັນເວີຽ" ປ ຕຣີຈັນຕົວປາກົດວ່າຄຶນມິດຽວນີ້ຕ້ອນຫມູ່ຄູ່ ທີ່ໄປກິນເຫລົ້າຢາໄດ້ດີ ຫນ້າຍິ້ມແຍ້ມແຈ່ມໃສຈັ່ງຊີແຫລະແມ່ບ້ານທີ່ດີນະວິຊຽນໃຫ້ຢ່າຫອ່ມ

ຮ້ວາຍກະຈັ້ງຊັ້ນແລ້ວ ຂ້ອຍຄ່ອຍຮັກລາວຫລາຍ" ສຽງຄົນຫົວຂຶ້ນໂດຍສເພາະປຈຸລມຸນຕຣີ ຕົບຕີນຕົບມືທັງເວົ້າຂຶ້ນພ້ອມ

"ໂທ....ພໍ່ຫມູ່ຍົກທາງໃຫ້ຂີ້ຈາກໂລດນໍ່ບັກຊຽງ

" ເວົ້າຕາມຄວາມຈິງ ເມັຽເຮົາດຽວນັ້ນກັບເຮົາປານຫົວໃຈດຽວກັນເຮົາເຮັດຫຍັງ ເຂົາກໍບໍ່ເວົ້າບໍ່ວ່າຢູ່ເຮືອນເຮັດວຽກບ້ານວຽກເຮືອນເບິ່ງແຍງລູກເຕົ້າ... ເຮົາໄປທ່ຽວເດິກຕີສອງຕີສາມກໍບໍ່ວ່າຫຍັງ "

" ມາຊ່າງໄດ້ເມັຽຈົບເມັຽດີແທ້...ແບບນີ້ ຄົບ ຫນັງສືພິມຮັກຕາຍເລີຍ ເພາະເຂົາຄວນຮູ້ວ່າວຽກຂອງຜົວນະມັນວຽກທ່ຽວສລອກໄປບ່ອນນັ້ນບ່ອນນີ້ " ພອນ ຈັນທະຣາຊ ເວົ້າ....ປ.ຕຣີຈັນທຣ໌ ແແຫງນຫນ້າຂຶ້ນເບິ່ງຫມູ່ແລ້ວຍິ້ມກ່ອນຕອບ

" ໃຫ້ຕາຍແມ້ສ່ຽວ ເມັຽເຮົາເປັນຈັ້ງຊັ້ນແທ້ໃດ໋"

ຫລັງຈາກນັ້ນຕ່າງຄົນກໍຄຸຍເຣື່ອງດຸນນະພາບຂອງຕົວເອງແດ່ເມັຽແດ່ລູກແດ່ ຢ່າງສນຸກສນານ....ບາດຈະໄດ້ເລີກລາກັນໄປຍ້ອນໃຜບໍ່ຊາບປ່ອຍໃອລະເຫີຍອອກມາ ຜ່າວົງຖາມໃຜກໍປະຕິເສດຫມົດພາກັນປ້ອຍດ່າຕາມ ທັນ ນຽນແລ້ວກໍລຸກຫນີໄປໃຜໄປມັນຕາມວົງການເລີກປະຊຸມຂອງປະຊຸມຂອງປະເພນີລາວ

ປ.ນ້ອຍຊື່ໃຫຍ່ປ.ໃຫຍ່ຊື່ ນ້ອຍກໍອອກຈາກ ໂຮງພິມໄປຕາມເຣື່ອງຕາມຣາວຜ່ານຖນົນຫລວງພຣະບາງໄປທາງສີໄຄຕັ້ງໃຈຈະໄປຢັຽມຢາມສົມຈິນພີໃຊ ຍະວົາສະຫາຍເກີແຕ່ບັງເອີນ ບໍ່ພົບເພາະ ສະຫາຍຄຸມນັກກີລາຍິງ ໄປແອບບາສແກດບານຫມົ່ນນີ້ກໍຫາຄວາມສຸກໄປແບບນຶ່ງໄດ້ຢ່າງ"ຜິດກິດ

■ ອ່ານຕໍ່ໜ້າ 50 ■



# ບຸຄຄົລສຳຄັນ

ຮູ້ສຶກແປກໃຈເມື່ອໄດ້ອ່ານປະວັດຂອງທ່ານມະຫາຕະມະຄານທີ ເພາະທ່ານຜູ້ນີ້ມີແນວທາງສູ້ບໍ່ຄືໃຜໆ ການຕໍ່ສູ້ໃນເບື້ອງຕໍາອິດຂອງທ່ານນັ້ນ ເປັນເລື່ອງທີ່ປະທັບໃຈຢູ່ຫລາຍຕອນ ທີ່ທ່ານມີຄວາມພຍາຍາມເປັນຍອດຄົນກໍອາດວ່າໄດ້ ຂນະດຽວກັນກໍເຮັດໃຫ້ເຫັນວ່າ ບຸກຄົນຜູ້ພົບພໍ້ຄວາມຮຸ່ງເຮືອງໃນຊີວິດນັ້ນ ລ້ວນແຕ່ເປັນຜູ້ທີ່ໄດ້ອຸທິດສ່ວນໃຫຍ່ໃນຊີວິດຂອງຕົນ ເຫື່ອແຮງແລະກໍາລັງໃຈລົງໄປເພື່ອສິ່ງທີ່ຕົນປາຖນາ

ແມ່ນວ່າຈະທຸກຍາກພຽງໃດກໍຕາມ ເຂົາກໍບໍ່ໄດ້ຖິ້ມຄວາມພຍາຍາມ ເຖິງວ່າຈະພາດຫວັງເທື່ອແລ້ວເທື່ອອີກກໍຕາມ ກໍບໍ່ໄດ້ເຮັດໃຫ້ເຂົາຕ້ອງຖອຍຫລັງ ແຕ່ເຂົາຈະປຸກຢ້ຳເອົາຄວາມມີໄຊຈາກການພ່າຍແພ້ນັ້ນໃຫ້ໄດ້ ຄົນຢ່າງນີ້ຈະເຊື່ອໝັ້ນໃນຕົວເອງ ແມ່ນວ່າພາດຫວັງລົງໃນມື້ນີ້ ເຂົາກໍເຊື່ອໝັ້ນວ່າ ເຂົາຈະຕ້ອງບັນລຸຜົນສໍາເຣັດໃນວັນຂ້າງໜ້າຈົນໄດ້ ........

ທ່ານມຫາຕມະຄານທີນາມເດີມຊື່ວ່າໂມຫັສທັສກະຣາມຈັນຄານທີເກີດໃນຣັຖປຣະພັນດອນ ໃນແຫລມກະເຕັຽວ ເມື່ອວັນທີ່ 2 ຕຸລາ ພ ສ 2912 ທັງປູ່ແລະພໍ່ເຄີຍເປັນນາຍົກຣັຖມົນຕຣີແຫ່ງຣັຖດັ່ງກ່າວມັນບໍ່ວ່າຖານະຂອງຄານທີຢູ່ໃນຂັ້ນສູງມີຄວາມຮັ່ງມີແຕ່ຕອນປາຍມາກໍສລະຊັບສົມບັດຈົນກ້ຽງ

•

ຕົວຂມາດລົງທືນຕໍ່າທຸກເຮັດຝ້າຍ ເພື່ອເປັນເຄື່ອງນຸ່ງ ຫົ່ມຂອງຕົວເອງ

ສມັຍຍັງນ້ອຍນັ້ນຄານທີ່ສັງເກດເຫັນທານພວກອັງກິດວ່າເປັນຊາດທີ່ເຂັ້ມແຂງ ເພາະພາກັນກິນຊີ້ນສັດຄານທີກໍມາລອງກິນແຕ່ຍ້ອນບໍ່ເຄີຍກິນມາກ່ອນກໍ ເກີດເຈັບທ້ອງຈຶ່ງເລີກກິນຊີ້ນສັດແຕ່ນັ້ນມາ ເມື່ອອາຍຸໄດ້ 13 ປີຈຶ່ງໄດ້ແຕ່ງດອງຄວາມຈິງຄານທີມີຄູ່ໝັ້ນໝາຍມາແລ້ວສາມຄົນແຕ່ຍິງສາວຄູ່ໝັ້ນກໍພາກັນຕາຍຈາກໝົດກໍຫາແຕ່ງດອງກັບຄູ່ໝັ້ນສາວຄົນທີສີ່ຊຶ່ງມີອາຍຸພຽງ 10 ປີເທົ່ານັ້ນເອງ ເມັຽຂອງຄານທີອ່ານໜັງສືບໍ່ໄດ້ຄານທີພຍາຍາມທີ່ສອນເມັຽແຕ່ບໍ່ມີເວລາຈົນເຖິງ 50 ປີເມັຽກໍອ່ານແລະຂຽນໄດ້ພຽງແຕ່ນ້ອຍ....

ພໍອາຍຸໄດ້ 15 ປີ ຄານທີມີລູກຊາຍຄົນນຶ່ງແຕ່ມີຊີວິດຢູ່ບໍ່ເທົ່າໃດກໍຕາຍຂນະ ດຽວກັນ ພໍ່ກໍຕາຍໃນ ເວລາໃກ້ໆນັ້ນເອງຄານທີໄດ້ຮັບການສຶກສາສໍາເຣັດໃນມຫາວິທຍາລັຍອາເມດາບັດແລ້ວຈຶ່ງຕັດສິນໃຈໄປຮຽນວິຊາກົດໝາຍຢູ່ທີ່ອັງ

# ມຫາຕະມະຄັນທີ

□ ໂດຍ □ ລູກຄໍາມ່ວນ

ກິດໃນປີ,ພ.ສ.2451ເວລານັ້ນມີອາຍຸ19 ປີຄານທີສຶກສາຢູ່3ປີ ຈຶ່ງໃດ້ເດີນທາງມາຕັ້ງສຳນັກງານທນາຍຄວາມຂຶ້ນທີ່ບອມເບ ແຕ່ບໍ່ຄ່ອຍໃດ້ຜົນຄານທີຈຶ່ງເດີນທາງອອ ກຈາກອິນເດັຽໄປ ສູ່ອາຟຣິກາໃຕ້ ຊຶ່ງມີຄົນຊາວອິນເດັຽຢູ່ເປັນຈຳນວນຫລວງ ຫລາຍຢູ່ໃນທີ່ນັ້ນເອງຄານທີທີ່ ໃດ້ພົບຫມູ່ມານຢ່າງ ມຫາສານ ແລະຂົມຂື່ນທີ່ສຸດໃນວິຊີວິດຖືກ ເຕະຖືກປະທຸສຮ້າຍນາໆປະ ການ ຕລອດເຖິງການ ຢຽດຢາມດູຫມິ່ນຫລັ່ງໄຫລເຂົ້າມາ ປານທ່າ ຜົນແຕ່ຄານທີກໍເປັນຍອດ ຄົນ ແຫ່ງຄວາມອົດທົນ ແລະຕັ້ງຕົວໄດ້ ດ້ວຍການເປັນທນາຍ ທີ່ມີຊື່ສຽງໃດ້ ຮັບ ຄວາມນິຍົມໄດ້ຢ່າງງົດງາມ

ບົດຮຽນຂອງຄົນສູ້ທີ່ເກັ່ງໄດ້ບອກໃຫ້ເຮົາຮູ້ວ່າ ເປັນ ໂລກແຫ່ງການຕໍ່ສູ້ເປັນໂລກແຫ່ງ ການດິ້ງຢູ່ຜູ່ເຂັ້ມແຂງທຸກ ເສັ້ນທາງຂອງຊີວິດເຮົາຈະ ໄດ້ພົບພໍ້ອຸປສັກ ຂວາງຢູ່ຢ່າງ ຫລວງຫລາຍຈົນຫລີກພົ້ນໄປບໍ່ໃດ້ ຄົນທີ່ມີຄວາມມຸ່ງມາດ ປາຖນາສູງຈະຕ້ອງເຮັດໃຈໃຫ້ເຂັ້ມແຂງຢ່າງທີ່ຈະຕີໃຫ້ແຕກ ບໍ່ໄດ້ເຂົາຈະຕ້ອງມີຫນັງອັນຫນາ ຢ່າງແທງບໍ່ຊອດການນີ້ຈະ ຕ້ອງໃຊ້ເວລາແອບເຝິກເປັນເວລານານຢູ່ແດ່ ແຕ່ກໍເປັນສິ່ງ ຈຳເປັນຈະຫລີກບໍ່ໄດ້ຄວາມຣຸ່ງເຮືອງ ເກີດຈາກຄວາມມັກງ່າຍ ນັ້ນບໍ່ມີເມື່ອເຮົາພົບຫມູ່ມານເຮົາຕ້ອງພຍາມເຮັດຕົນ ໃຫ້ແຂງ ແລະຫນຽວແຫນ້ນກວ່າອຸປສັກເຮົາຈະຕ້ອງກາຍເປັນເຫລັກ ກ້າຊຶ່ງອາວຸດທັນດາບໍ່ອາດຈະແທງໃຫ້ຊອດໄດ້ ຄວາມເຂັ້ມ ແຂງດັ່ງກ່າວນີ້ມີຢູ່ໃນຕົວຂອງທ່ານມຫາຕມະຄານທີ ຖ້າທ່ານ ເລີກລົ້ມຄວາມຕັ້ງໃຈເມື່ອຖືກຣົບກວນຢ່າງນັ້ນແລ້ວ ກໍເຂົ້າ ໃຈໄດ້ວ່າທ່ານຈະເປັນນັກທນາຍຄວາມຢູ່ ໃນຄວາມນິຍົມບໍ່ ໄດ້ແຕ່ທ່ານເປັນນັກຕໍ່ສູ້ຈິງກ້າຢືນຫນ້າສູ້ກັບສະພາບຊີວິດອັນ ແທ້ຈິງດ້ວຍຫົວໃຈອັນເຂັ້ມແຂງທ່ານຈຶ່ງກາຍເປັນ ຄົນສູ້ຈິງ ແລະຍາກຍິ່ງຊາວອິນເດັຽແລະຊາວໂລກຈະລືມການຕໍ່ສູ້ຂອງ ທ່ານໄດ້

ຢູ່ໃນອາຟຣິກາໃຕ້ນີ້ເອງ ຄານທີມີຄວາມຄິດເຫັນ ໃຫມ່ໆຂຶ້ນ ແລະເປັນບ່ອນຕັ້ງຕົ້ນຊີວິດໃຫມ່ທີ່ຈະເຮັດໃຫ້ ຄານທີມີຊື່ບໍ່ຕາຍມາຈົນເຖິງປັຈຈຸບັນນີ້ ເງິນທີ່ເຂົາຫາໄດ້ ຈາກການເປັນທນາຍຄວາມນັ້ນເຂົາໄດ້ຈັດຕັ້ງນິຄົມກະເສດ ຂຶ້ນເພື່ອຊ່ວຍຊາວອິນເດັຽທີ່ທຸກຍາກແລະໄດ້ຕັ້ງຫນັງສືພິມ ສະບັບນຶ່ງຂຶ້ນຊື່ວ່າ " Indian Opinion " ແລະແຕ່ງ ຫນັງສືເຣື່ອງ "ອິສຣະພາບຂອງຊາວອິນເດັຽ" ເຜີຍແຜ່ ລັດທິຊາດນິຍົມແລະເລີ້ມໃຊ້ວິທີ "Non–Violence" ຕັ້ງແຕ່ນັ້ນໃນຣະຫວ່າງນີ້ຄານທີຖືກຈັບສາມເທື່ອ ຄານທີຢູ່ ໃນອາຟຣິກາໃຕ້ເຖິງ 21 ປີກັບມາອິນເດັຽໃນ ພ.ສ. 2457 ຊຶ່ງເປັນປີຕໍ່າອິດແຫ່ງສົງຄາມໂລກຄັ້ງທີ 1 ຄານທີມີອາຍຸ 45 ປີ

ຄຸນສົມບັດຢ່າງນຶ່ງຢູ່ໃນຕົວຂອງຄານທີກໍຄື ເປັນຄົນ ຕື່ນເດິກ.....ເມື່ອຕື່ນແລ້ວກໍນັ່ງສວດມົນພາວະນາຊຶ່ງຄານທີຖື ເປັນຂອງສຳຄັນທີ່ຈະຂາດເສັຽບໍ່ໄດ້ ນັ້ນຄືຕ້ອງສວດມົນຢູ່ ສອງເວລາຄືເວລາເຊົ້າຕອນຕະເວັນຂຶ້ນແລະຕອນ ຕະເວັນ ຕົກມີຄັ້ງນຶ່ງທີ່ຄານທີໄປປະຊູມຢູ່ກຸງລອນດອນຂນະທີ່ກຳລັງ ນັ່ງປະຊູມຢູ່ກັບຄົນສຳຄັນຂອງອັງກິດພໍເຖິງເວລາຕະ ເວັນ ຕົກຄານທີກໍອອກຈາກຕັ້ງອີ້ມານັ່ງສວດມົນຢູ່ກັບພື້ນຈົນເຮັດ ໃຫ້ກອງປະຊູມນັ້ນຕ້ອງຢຸດຢູ່ຊົ່ວຄາວຈົນກວ່າການ ສວດ ມົນຂອງຄານທີເສັດແລ້ວຈຶ່ງໄດ້ມີການປະຊູມຕໍ່ ໄປນອກ ຈາກນີ້ຄານທີຍັງເປັນຄົນທີ່ມີຄວາມພິສດານຢູ່ໃນຕົວຫລາຍ ຢ່າງເປັນຕົ້ນວ່າໃນວັນຈັນນັ້ນຖືເປັນວັນສງົບຄາມ ທີຈະບໍ່ ຍອມເວົ້າເປັນອັນຂາດບໍ່ວ່າຈະມີເຫດການຮ້າຍ ແຮງປານ ໃດກໍຕາມໃນມື້ວັນຈັນນັ້ນຈະບໍ່ມີໃຜສາມາດເຮັດ ໃຫ້ຄານທີເວົ້າເລີຍ

● ອ່ານຕໍ່ຫນ້າ 49

# ຄ່າປະເພນີ

ໂດຍ....... ນ້ອງໃໝ່

ໂຕະອາຫານ ທີ່ຄຶກຈັດໄວ້ຢ່າງສວຍງາມ ນັ້ນບໍ່ໄດ້ພາສີໜ້າຂອງຍິງສາວຜູ້ດຽວ ທີ່ນັ່ງຢູ່ຕັ້ງອີ້ຕໍ່ໜ້າໂຕະອາຫານນັ້ນດີຂຶ້ນເລີຍ ຍິງສາວເບິ່ງອາຫານທີ່ວາງຢູ່ບົນໂຕະນັ້ນ ຢ່າງບໍ່ພໍໃຈ ຈົນສຽງບາດຕີນຄົນຍ່າງດັງໃກ້ເຂົ້າມາ ນາງຈຶ່ງມີສີໜ້າຍິ້ມໆ ຄືຈັ່ງວ່າລໍຄອຍຜູ້ທີ່ກຳລັງມາ

"ອ້າວ ສົມພອນ ລູກຄືແລ້ວໄວແທ້ລະ" ສຽງຫ້າວຂອງຊາຍສູງອາຍຸ ທ່າທາງໃຈດີ ຜູ້ນຶ່ງຮ້ອງຖາມ ເມື່ອຍ່າງຜ່ານປະຕູຫ້ອງອາຫານ ຍິງສາວຫັນໄປຍິ້ມໃຫ້ຜູ້ກຳເນີດຢ່າງອ່ອນຫວານ

"ອ້າ ຂນ້ອຍນົວງກໄປ ຂນ້ອຍ !"

"ຫັ້ນຕີ້.... ພໍ່ວ່າແລ້ວ.... ໄປກິນລ້ຽງແມ່ນບໍ່ !" ເພິ່ນເວົ້າພ້ອມກັບຫົວ ຮຶ ຮຶ ເມື່ອເຫັນສີໜ້າລູກສາວ

"ເອ໋ະ.... ຍາພໍ່ຮູ້ແລ້ວຫວະຊັ້ນ.... ຂນ້ອຍຍັງບໍ່ທັນໄດ້ຄອບ" ຍິງສາວເວົ້າສຽງອ່ອນ

"ເອິະ.... ເຫີ.... ລູກຫາກຄອຍພໍ່ແຕ່ບໍ່ຟັງສຽງອະນຸຍາດ.... ເທື່ອນີ້ພໍ່...." ທ່ານຢຸດເວົ້າຊື່ໆ ເຮັດໃຫ້ສົມພອນຕົກໃຈຍິ່ງນັກ ຢ້ານເພິ່ນອອກປາກຫ້າມ

"ອະນຸຍາດໃຫ້ໄປ.... ໄປຕີ້.... ແຕ່ງໂຕຊະ.... ເຂົາໄປຖ້າຢູ່ຣົຖແລ້ວຕີ້"

ກ້າວບາດຕີນທີ່ກຳລັງຈະກ້າວອອກຢ່າງຢຸດຊະງັກລົງ ເຂົາ ? ແມ່ນໃຜ... ຍາພໍ່ເວົ້າຮອດໃສກໍບໍ່ຮູ້ ໃຜມາຖ້າ ໃນເມື່ອສົມພອນນັດໝູ່ມາຮັບແລ້ວ ນັດກັນໄວ້ວ່າ ເຈັດໂມງເຄິ່ງພຸ້ນ... ແລະດຽວນີ້ ມັນບໍ່ທັນຮອດເຈັດໂມງຄັກຊ້ຳ

"ແມ່ນໃຜມາຖ້າຂນ້ອຍ !" ຍິງສາວຕັດສິນໃຈຖາມ

"ອ້າວ.... ລູກບໍ່ຮູ້ຫວ໋ະຊັ້ນ ທ້າວກົງມາຮອດແລ້ວພໍ່ກໍເລີຍຂໍໃຫ້ລາວໄປສົ່ງລູກ ຢູ່ເປັນໝູ່ບາດກັບມາ ເປັນຜູ້ຍິງໄປດ່ຽວມາດ່ຽວມັນບໍ່ງາມ ໃຫ້ອ້າຍໄປນຳ !" ເພິ່ນຖືໂອກາສສັ່ງສອນຢ່າງຍືດຍາວ ເຮັດໃຫ້ອາຣົມຂອງສົມພອນຮ້ອນເອົ້າ ຄິດຢາກເຫັນໜ້າຜູ້ຊິວ່າຄຳກ້ານັ້ນແທ້ໆ... ຮຶ... ເວລາເຈັດປີຜ່ານໄປ ປ່ຽນແປງຄົນຜູ້ນຶ່ງໄດ້ຫລາຍປານໃດ ໃນຖານະທີ່ຄຳກົ່ງເປັນຫລານຂອງພໍ່ນາງ ຄຳກົ່ງຈຶ່ງເກງໆນາງຢູ່ ນັ້ນເປັນຕອນຍັງນ້ອຍ ແຕ່ດຽວນີ້ເດ...

"ຮຶ.... ເກັ່ງຫລາຍເນາະ.... ຮຽນແລ້ວບາດມາກໍ່ບອກຈັກຄວາມ ຈົນມານອນຮອດເຮືອນຊານເຮົາກະຍັງບໍ່ຮູ້.... ເອິ.... ກະມັນນີ້ໝົດມື້ເຮົາບໍ່ໄດ້ຢູ່ຮ່ວມເລີຍ ຊິໄປຮູ້ຈັ້ງໃດວ່າໃຜມາແດ່... ແຕ່ບາດກິນເຂົ້າແລງມື້ລາວກໍບໍ່ມາ ຈະມາຮ່ວມວົງນຳ ອັນນີ້ຊ້ຳອວດດີໄປມຸ່ງເດືອງຖ້າຄອຍໄປສົ່ງ ພິລຶກ...ບໍ່ຮູ້ ຖ້າເປັນຈັ່ງຊັ້ນກະດີຊິມ່ວນໃຫຍ່ລະ ຊິເຮັດໃສ່ຈົນຫລາຍບໍ່ກ້າໄປນຳອີກຈັກເທື່ອພຸ້ນລະ........" ຍິງສາວຍິ້ມໃສ່ກະຈົກຢ່າງໝັ້ນໃຈ ໝັ້ນໃຈໃນຄວາມງາມຄວາມສາວຂອງໂຕ ເບິ່ງແນ້ເງົາໃນກະຈົກແຜ່ນໃຫຍ່ ນັ້ນມັນບອກຢູ່ແທ້ໆແລ້ວວ່າສົມພອນນັ້ນງາມ ຮູບຮ່າງລະບອບບາງ ຜິວຂາວນວນ ໃບໜ້າອິ່ມເຕັມບໍ່ມີບ່ອນຕິ ເຄືອຮາຕຣີແຂນກຸດຕາມສມັຍ ວິຍິ້ມເຜີຍບ່າໄຫລ່ທີ່ຂາວຜ່ອງເປັ່ງ

ນຸ່ງນໄຍ ຄໍເສື້ອແຫລມລົງທາງໜ້າ ແພຣຈີບເປັນພອງ ເສີມໃຫ້ຮ່າງຄີງນາງກົມເຕັມຂຶ້ນອີກ ທັງສິ້ນແລະເສື້ອເປັນ ສີນ້ຳທະເລ ຕິດກັບຜິວຂາວຂອງນາງຢ່າງເຫັນໄດ້ຄັກ ວ່າຄືນນີ້ສົມພອນງາມເປັນພິເສດ ຊຶ່ງພົນອອກຈາກຮ້ານ ໃໝ່ໆ ເກົ້າສູງຕາມສມັຍນິຍົມມາໃຫ້ນາງສະງ່າງາມຄືນາງ ພະຍາ ຍິງສາວຫັນຊ້າຍຫັນຂວາ ດຶງສິ້ນເສື້ອໃຫ້ຮຽບ ຮ້ອຍແລ້ວ ກໍອອກຈາກແວ່ນແຍງ ຫຍິບເອົາເກີບສົ້ນສູງ ສີດຳ ກະເປົ໋າສີເຂົ້າຊຸດກັນແລ້ວກໍອອກຈາກຫ້ອງ ລົງໄປ ຊັ້ນລຸ່ມຢ່າງມິດໆ ຣື ນາຍຄຳກົ້ງຜູ້ນັ້ນຊິວ່າຈັ່ງໃດນໍ້ເມື່ອ ເຫັນເຮົາ ຜ່ານອອກອາຫານຮຽບຮ້ອຍແລ້ວ ບໍ່ເຫັນຮອດ ເງົາຍາມີ່ມີແຕ່ແມ່ປ້າວັນດີຄົນຄົວກິນກຳລັງມ້ຽນຖ້ວຍ ຊານ ຍິງຊຣາເງີຍໜ້າຂຶ້ນເບິ່ງຍິງສາວຢ່າງຈົ່ມເຈີຍ ອົດຄິດຕາມ ມາສາຄົນເຖົ້າຄົນແກ່ບໍ່ໄດ້ວ່າ .

ຍານາງນີ້ງາມບໍ່ມີບ່ອນຕິ ເສັຽທີ່ແຕ່ວ່າໄປ ທ່ຽວກາງຄືນສູ່ມື້ .

ຣົຖເບັນສີແດງເລືອດໝູຈອດຢູ່ໜ້າເຮືອນ ຕຽມ ທີ່ຈະແລ່ນອອກໄປທຸກເວລາ ຍິງສາວຍ່າງມາຢຸດຢືນຢູ່ຕໍ່ ໜ້າຣົຖຢ່າງລັງເລໃຈເມື່ອບໍ່ເຫັນໂຕໄຊເຟີ ພໍດີກັບສຽງ ຮ້ອງເຊີນຮຽບໆວ່າ ,

"ເຊີນ....ເຊີນ"

ແລ້ວຊາຍໜຸ່ມເຈົ້າຂອງສຽງກໍປາກົດກາຍອອກມາ ແຕ່ເຮືອນ ລາວບໍ່ໄດ້ໃສ່ຊຸດໃຫຍ່ຄືສົມພອນຄິດ ກົງກັນ ຂ້າມ ຊາຍໜຸ່ມໃສ່ເສື້ອເຊີດສີຂາວແຂນຍາວກັບສົ້ງສີດຳ ແຕ່ປາກສົມພອນບອກໂຕເອງ ຊາຍໜຸ່ມຜູ້ນີ້ແມ່ນແລ້ວ ຄຳກົ້ງ ໜຸ່ມຮຸ່ນອ້າຍພາຫລິ້ນແຕ່ຄາວຍັງນ້ອຍ ເອົາອົກ ເອົາໃຈ ເກງກົວນາງປານໜູຢ້ານແມວ ແລ້ວບັດນີ້ ສູງສງ່າເຈົ້າຊູ້ເຖິງປານນີ້ ແຕ່ສົມພອນກໍຍັງບໍ່ພໍໃຈ ບໍ່ພໍໃຈຫຍັງກະບໍ່ຮູ້ ຮູ້ແຕ່ວ່າບໍ່ພໍໃຈ ທ່າທາງເສີຍໆຊຶ່ງ ຂອງລາວນັ້ນລະ ຣື ຄວາມນິ່ງໆຊິເອົາວ່າສົມພອນງາມຂ… ຫລາຍຈົນຈື່ບໍ່ໄດ້ ເອົາລົມກັນໃຫ້ສນິດສນົມຄືແຕ່ກີ້ກໍຍ… ໄດ ອັນນີ້ຫຍັງຈົນນາງກ້າວຂຶ້ນນັ່ງຣົຖອັດປະຕູເອງ ຣົ… ຄັນງາມຈຶ່ງຍ້າຍທີ່ອອກໄປຢ່າງບໍ່ກະທົບກະເທືອນແຮງ ສົ… ພອນຍອມຮັບວ່າ ຄຳກົ້ງຂັບຣົຖໄດ້ດີພໍສົມຄວນ .

"ເຈົ້າຮູ້ແລ້ວເບາະວ່າຂ້ອຍສິໄປໃສ ?" ຍິງສາວຍ… ເສັຽປຽບຖາມຂຶ້ນກ່ອນຢ່າງເຫລືອອົດ .

"ອ້າວ" ສຽງອຸທານມ່ວນຫູອອກຈາກປາກຊາຍໜຸ… "ກະບໍ່ຮູ້ແລ້ວ ຮູ້ແຕ່ບ່ອນຂ້ອຍຊິບອກເຈົ້າໄປ"

"ບ່ອນຊິພາຂ້ອຍໄປ ? ເຈົ້າຊິພາຂ້ອຍໄປໃສ ຣື ?… ສົມພອນຖາມສຽງແຫລມເພາະຄິດຂັດໃຈ .

"ໄປກິນລ້ຽງສລອງ ເອີ້ ເຮົາສອງຄົນ ເອ່ ຊັ… ຍາມີ່ບໍ່ໄດ້ບອກຫຍັງຫວ່ະຊັ້ນ ! " ເຂົາກັບມາ ຖາມນາງຄື… ສົມພອນຢາກຮ້ອງອອກໄປແທ້ໆວ່າ ຍາມີ່ມັນມ່ະບໍ່ໄດ້ບອ… ຫຍັງຂ້ອຍເລີຍ .... ແມ່ນແຕ່ເຣື່ອງເວົ້າມາ .... ແຕ່ອົດໄ… ບອກສຽງທັມດາທີ່ສຸດວ່າ

"ບອກແຕ່ວ່າ ເພິ່ນໃຫ້ເຈົ້າໄປສົ່ງຂ້ອຍ ບ່ອນກິ… ລອນຊ໌ "

"ກະບໍ່ທັນຮອດໂມງກິນເທື່ອຕວ່າ" ຊາຍໜຸ່ມເວົ້… ຄ່ອຍ ຄືຈົ່ມຜູ້ດຽວ....ເຮັດໃຫ້ສົມພອນຮູ້ສຶກອັບອາຍ ເຂົ… ຮູ້ໄດ້ຈັ່ງໃດ....ວ່າເຂົາເຊີນກັນຈັກໂມງ ? ຣື ຕ້ອງແມ່ນຍາ… ພໍລັກເອົາບັດເຊີນໄປແລ້ວບອກເປັນແມ່.... ແຕ່ເຣື່ອງໄປ ສລອງສອງຄົນນີ້ເດ ມັນເຣື່ອງອີຫຍັງ?

ຣົຖຄັນງາມຈອດລົງຕໍ່ໜ້າພັຕຕາຄາຣໃຫຍ່ບ່ອນນຶ່ງ… ຊາຍໜຸ່ມລົງຣົຖກ່ອນ ແລ້ວອ້ອມມາໄຂທາງສົມພອນ… ເພາະເຫັນນາງນັ່ງເສີຍຢູ່....ຍິງສາວຍັງຕັດສິນໃຈ ບໍ່ຖືກວ່າ… ຈະເຮັດແນວໃດດີ....ກໍພໍດີກັບ ສຽງທ້າວມ່ວນຫູນັ້ນດັງຂຶ້ນ…

● ອ່ານຕໍ່ໜ້າ 55 ●

# ດົນຕຣີ

## ປະຫວັດຄຳເຕີມ ຊານຸບານ

●

ຮຽບທ່ານປ.ຕຣີຈັນທຣ໌ ເກີບັຖີ

ຂະນ້ອຍແມ່ນຜູ້ນຶ່ງ ຊຶ່ງເປັນ ນິດອ່ານສື່ສັມພັນ ຂອງທ່ານ ມາໄດ້ຫລາຍ ເດືອນ ແລ້ວ ຂະນ້ອຍຄືວ່າ ທ່ານ ແມ່ນ ຜູ້ນຶ່ງ ທີ່ ມີ ຄວາມຮູ້ສລາດແຫລມຄົມຄາຍນຶ່ງ ຂະນ້ອຍເອງກໍບໍ່ເຄີຍຂຽນຈົດໝາຍມາຣົບກວນທ່ານຈັກເທື່ອ ສະນັ້ນຈຶ່ງຂໍຄວາມກະຣຸນາຈາກທ່ານຈົ່ງນຳເອົາຄວາມສົນໃຈຂອງຂະນ້ອຍມາເລົ່າສູ່ ຂະນ້ອຍແລະພັກພວກຟັງດ້ວຍ ຈະເປັນພະຄຸນຢ່າງຍິ່ງ ເຣື່ອງຄືວ່າຫລັງຈາກໄປເບິ່ງການເສັງເພັງໃນວັນທີ 25–26 ທີ່ແສງລາວແລ້ວມານີ້ ຂະນ້ອຍຢາກຂໍຖາມທ່ານເພື່ອໃຫ້ທ່ານເລົ່າສູ່ຟັງຄື

ທ່ານຄຳເຕີມ ຊານຸບານ ເປັນນັກຮ້ອງຊະຣາດີ ທີ່ຂະນ້ອຍຊອບ ແລ້ວຂະນ້ອຍຢາກຖາມວ່າ ທ່ານຜູ້ນີ້ມີອາຍຸເທົ່າໃດ ບ້ານເກີດເມືອງນອນຢູ່ໃສ ຮຽນໜັງສືຮອດໃສ ເປັນຫຍັງທ່ານຄຳເຕີມຈຶ່ງມັກຮ້ອງເພງ ແມ່ນໃຜເປັນອາຈານຂັ້ນແຣກຂອງທ່ານ ແມ່ນຜູ້ໃດສ້າງທ່ານໃຫ້ມາເປັນນັກຮ້ອງ ຄັ້ງແຣກທ່ານຜູ້ນີ້ສັງກັດຢູ່ວົງດົນຕຣີຜູ້ໃດ ຂໍເພິ່ງທ່ານປ.ຕຣີຈັນທຣ໌ທີ່ນັບຖື ຈົ່ງຕອບຂໍ້ຂ້ອງໃຈເຫລົ່ານີ້ລົງໃສ່ສື່ສັມພັນຂອງທ່ານດ້ວຍ ເພື່ອເປັນຂວັນໃຈຂອງຂະນ້ອຍແລະເພື່ອນມິດຜູ້ອ່ານສື່ສັມພັນທັງຫລາຍ ຂອບໃຈ

ຖ້າບໍ່ພໍຕື່ມເຂົ້າຖ້າວາວໂພດຕັດອອກຈະເປັນພະຄຸນຍິ່ງ

" ໜຸ່ມກະຊວງມະຫາດໄທ "

### ຕອບ

ກ່ອນອື່ນຂ້າພະເຈົ້າຂໍຂອບໃຈນຳທ່ານ ທີ່ ໃຫ້ ຄວາມສົນໃຈກັບເຣື່ອງດົນຕຣີແລະເພງ ຖ້າໝົດທຸກຄົນມີຄືທ່ານປານນີ້ ຄນະສິລປິນລາວຄົງຈະຈເຣີນ ແລະມີໜ້າມີຕາຫລາຍກວ່ານີ້ .

ເຣື່ອງປະຫວັດຄຳເຕີມຊານຸບານ ຂ້າພະເຈົ້າເຄີຍໄດ້ນຳພິມລົງຄັ້ງນຶ່ງແລ້ວ ແຕ່ເພື່ອຕອບສນອງທ່ານຂ້າພະເຈົ້າຈຶ່ງໄດ້ໄປພົບຄຳເຕີມແລະສຳພາດນຳລົງມາພິມໃຫ້ທ່ານ ໄດ້ອ່ານແລ້ວດັ່ງນີ້ ,

ຄຳເຕີມຊານຸບານເປັນລູກເມືອງບໍຣິຄັນ ຢ່າງແທ້ຈິງ ເກີດເມື່ອວັນທີ 5 ຊວງ 1940 ພໍ່ຊື່ສີນວນ ແມ່ຊື່ສາວໄຂ່ ຄຳເຕີມເປັນລູກຊາວນາຜູ້ນຶ່ງ ທີ່ສົມຄວນເປັນທີ່ຍົກຍ້ອງແລະເອົາເປັນຕົວຢ່າງ ແຕ່ຍັງນ້ອຍ ຄຳເຕີມຮຽນໜັງສື ຢູ່ໂຮງຮຽນເມືອງປາກຊັນນັ້ນເອງ ຈົນຮອດປີ 1954 ເຂົາກໍຈົບຊັ້ນປະຖົມບໍຣິບູນແລ້ວກໍໄດ້ກາບລາພໍ່ແມ່ມາຮຽນເອົາວິຊາຕໍ່ທີ່ວຽງຈັນ....ດ້ວຍຄວາມພຍາຍາມພາກພຽນ ເຂົາກໍສຳເຣັດຊັ້ນມັທຍົມບໍຣິບູນອີກໃນປີ 1459 ໃນເວລານັ້ນຄຳເຕີມຫັດຮ້ອງເພງແລ້ວເພາະຄຳເຕີມນອນຢູ່ໂຮງຮຽນວິທຍາໄລປາວີເອງດ້ວຍຄວາມຂຍັນເຂົ້າຮຽນ ຕື່ມອີກເພື່ອຈະໃຫ້ຈົບການຮຽນ ໃນພະຣາຊອານາຈັກລາວເປັນເວລາ 3 ປີແຕ່ກໍສຸດຄວາມສາມາຖ...ຈຶ່ງໄດ້ອອກຈາກໂຮງຮຽນໄປສມັກເຂົ້າຮຽນໂຮງຮຽນນາຍຮ້ອຍຕຳຣວຈ ທີ່ດອນໜູນໃນປີ 1963–6 ເມື່ອສຳເຣັດໄດ້ວ່າທີ່ຮ້ອຍ ຕຣີ

ແລ້ວກໍມາເຮັດການຢູ່ກອງຕຣວດຄົນ ເຂົ້າ ເມືອງ ໄດ້ 1 ປີ ແລ້ວໄປຮຽນເອົາຊຸນສານ 6 ເດືອນທີໂຮງຮຽນກົດໝາຍ ເມື່ອສຳເຣັດແລ້ວກໍລົມັກເຂົ້າສອບເສັງຮຽນກົດໝາຍ ຊັ້ນສູງຕື່ມອີກໃນປີ 1966 ນີ້ກໍານົດ 3 ປີຈົນປັດຈຸບັນນີ້ຍັງຮຽນຢູ່ໂຮງຮຽນກົດໝາຍວຽງຈັນ

ເພງທີ່ຄໍາເຕີມຮ້ອງຄັ້ງແຣກແມ່ນເພງ "ໃກ້ໃຈໄກກາຍ" ຊຶ່ງແຕ່ງໂດຍ ຄໍາຫລ້າ ເພັຊດາຣາແລະຄໍາຫລ້າ ນີ້ເອງເປັນຜູ້ປັ້ນຄໍາເຕີມຂຶ້ນມາເປັນນັກຮ້ອງ ຄໍາເຕີມນັກຮ້ອງເພງເພາະຄໍາເຕີມນັກສຽງເພງເປັນຊີວິດຈິດໃຈນັ້ນເອງ

ຄັ້ງແຣກຄໍາເຕີມສັງກັດຢູ່ວົງດົນຕຣີ ວິທຍາໄລວຽງຈັນໂດຍການຄວບຄຸມຂອງຄໍາຫລ້າ ເພັຊດາຣາ ແລ້ວກໍມາຢູ່ວົງດົນຕຣີຍຸວະສະມາຄົມແລະປະສານມິດ ເທົ່າປະຈຸບັນນີ້ຍັງສັງກັດຢູ່ວົງດົນຕຣີປະສານມິດ ເພັງທີ່ຄໍາເຕີມນັກແມ່ນເພັງ " ສຽງຄວນຈາກຊາຍຈົນ " ນິສສັຍໃຈຄໍໂອບອ້ອມອາຣີນັກຢູ່ກັບຄວາມສງົບນັກທັມຊາຕ ສີທີ່ນັກຄືສີເຫລືອງອ່ອນອາຫານແຊບຂອງຄໍາເຕີມຄືລາບການກິລາຄໍາເຕີມນັກແຕ່ເຫລັ້ນບໍ່ ປັນ ມີເຕະບານ ໂອນໄລ ແລະກາຍະກັມ

ປັດຈຸບັນ ຄໍາເຕີມຊາມຸບານຍັງໂສດຖ້າທ່ານໃດຕ້ອງການຕິດຕໍ່ຈົ່ງຕິດຕໍ່ໄດ້ ທີ່ເຮືອນທ່ານພົນຕໍາຣວຈຕຣີ ຊວງ ສີຫາຣາຕະວົງຄຸ້ມສີເມືອງວຽງຈັນໄດ້ທຸກເວລາ

ປະກົດວ່າຂ້າພເຈົ້າໄດ້ຕອບທ່ານໝູ່ມກະຊວງມະຫາດໄທໄປຫລາຍກວ່າຄໍາຖາມອີກ....ຫວັງວ່າທ່ານຄົງພໍໃຈແລ້ວ

ໃນໂອກາສດຽວກັນນີ້ຂ້າພເຈົ້າເລີຽ ສວຍ ໂອ ກາສ ສເນີເພງຄໍາເຕີມນັກໃຫ້ທ່ານຜູ້ອ່ານໄດ້ເບິ່ງພ້ອມນໍາດ້ວຍ

ຈັງຫວະສໂລວ໌ "*ສຽງຄວນຈາກຊາຍຈົນ*" ຂັບຮ້ອງໂດຍ ຄໍາເຕີມຊາມຸບານ

ຕົວຂ້າອັບຈົນ ຕ້ອງທົນຝືນໃຈ
ຈະຝາກຮັກໃຜ ກໍເກງຫົວໃຈເຈັບຊໍ້າ
ຂ້າເກງ ແຕ່ຍິງວ່າຈົນຕ້ອຍຕໍ່າ
ເກງຍິງຈະປະມາມ ປຽບຍໍ່າໃຫ້ອາຍ
ຈິງຫ້າມຫັກຄວາມ ຮັກທີ່ມີຂຶ້ນ
ໄສກຕຣົມທົນຝືນ ເຝົ້າກືນນໍ້າຕາຕົກໃນ
ຄິດວ່າ ຈັກວັນຍິງຄົງເຫັນໃຈ
ຮັບຄົນຈົນໆເອົາໄວ້ ເປັນຄູ່ສເນຫາ
ແລ້ວຂ້ານີ້ຈະມອບຈິດ
ຈະອຸທິດ ຮັກໃຫ້ຈົນໝົດອຸຣາ
ຈະສ້າງຕົວ ເພື່ອຍິງທີ່ກະຣຸນາ
ໃຫ້ຄວາມຮັກຢ່າງເມດຕາ ຕໍ່ຂ້າຈາກໃຈຈິງ
ມີໃຜຈັກຄົນ ຄິດເຫັນໃຈຂ້າ
ທີ່ລໍຄອຍຫາ ສັດທາຮັກແທ້ຈາກຍິງ
ແມ່ນມີຂ້າຍອມ ມອບທຸກໆສິ່ງ
ຂໍພຽງແຕ່ຍອດຍິງ ຢ່າລວງໃຫ້ຕຣົມ ●

ຈັງຫວະສໂລວ໌ "*ເພງຄິດ*" ຂັບຮ້ອງໂດຍ ປ.ຕຣີຈັນທ໌
ເສບໂດຍວົງດົນຕຣີ ສີລວຽງໃຊ

1. ຄິດວ່າເຂົາຮັກເຮົາ ດ້ວຍໃຈສເນ່ຫາ
ຄິດວ່າເຂົາຫວັງ ປາຖນາຮັກຈິງ
ນັ້ງນອນຍັງຄິດ ຄິດວ່າຍອດຍິງ
ຮັກຈິງຫລືໃດ ສິງໃສໃຈຢູ່
2. ໃດ້ແຕ່ຄິດ ຄິດຮັກແຕ່ເຂົາສຸດໃຈ
ໄດ້ແຕ່ຄິດ ຮັກແລະບູຊາເຊີດຊູ
ຫາກໄດ້ຈອນຂ້ອນ ນັ້ນມາຄຽງຄູ່
ຢູ່ຮຽງຄຽງກາຍ ອ້າຍຄົງສຸກໃຈ
*ທ່ອນແຍກ* : ຈະຮັກຫລືລ້ກັນຫລົ້ນ ສັນໃດ
ໄປດໄດ້ເອີ່ຍຄໍາ ອັນຫມັ້ນຈາກໃຈ
ແມ່ນຮັກອ້າຍຈິງ ຢ່າໄດ້ອຽງອາຍ
ອ້າຍຈະຖນອມ ບໍ່ຍອມໃຫ້ຮັກເຮົາສລາຍ
3 ເຖິງນ້ອງຄິດ ຄິດຊັງອ້າຍນີ້ຢ່າງໃດ
ຫລືນ້ອງຄິດ ຮັກອ້າຍກໍພໍ່ນໍ້າໃຈ
ສ່ວນຕົວອ້າຍນີ້ ຂໍຄິດແລະຄິດ
ຄິດແຕ່ຮັກນາງ ຮັກຈົນຊົ່ວຟ້າດິນ □

ນະວະນິຍາຍ

# ຫມານ້ອຍຫັນດາ

▲ ໂດຍ ▲ ສລອກກອກ

ຜູ່ຂ້າຕື່ນ.... ແລະຕົກໃຈເມື່ອໄດ້ຍິນສຽງຮ້ອງຈາກຜູ່ເປັນນາຍ ໄລ່ດ່ວນວ່າ....

"ເສະ! ເສະ!"

ພໍໄດ້ຍິນສຽງນີ້ຜູ່ຂ້າຮີບປົບຫນີທັນທີ ຖ້າຂືນມົວສົ້ນຫາງໃສ່ກົ້ນຫວັງພົ້ນບາທາຫລືໄມ້ຄ້ອນ ໂຍນ ໃສ່ກາງຫລັງຢ່າງບໍ່ຕ້ອງສົງໃສໃດໆ ອີກເລີຍ ພໍເຊົາເຈັບກໍສັ້ນຫາງເຂົ້າມາຫາຜູ່ເພິ່ນເປັນນາຍຊຶ່ງມີພຣະຄຸນລ້ຽງເກືອຜູ່ຂ້າ ໂດຍອາໃສ່ກ້າງຫລືອາຫານອັນແຊບນົວທີ່ໄດ້ຮັບ ບໍ່ຂາດແຕ່ລະມື້.... ແລະເປັນເພາະເຫດນີ້ເອງພວກຜູ່ຂ້າຈຶ່ງ ທົນເຕະທົນຖີບທົນດ່າທົນເຈັບໂດຍບໍ່ຄິດຄຽດກຽດຊັງຜູ່ຂ້າຮັກນາຍບໍ່ເຄີຍຄິດທໍຣະຍົດຄົດໂກງ ນອກຈາກຄວາມຊື່ສັດເທົ່ານັ້ນພວກຜູ່ຂ້າບໍ່ມີໃຈທີ່ຈະເນຣະຄຸນຜູ່ລ້ຽງເກືອ ຫນ້າທີ່ປະຈຳວັນຂອງຜູ່ຂ້າກໍຄືການເຝົ້າເຮືອນ ມີຫນ້າທີ່ເຫົ່າຫອນເມື່ອມີຜູ່ແປກຫນ້າເຂົ້າມາເຮືອນ ລາງເທື່ອກໍລົງທຶນກັດເອົາກໍມີຄຸນສົມບັດເຫລົ່ານີ້ຈະຫາບໍ່ໄດ້ ອີກແລ້ວນອກຈາກພວກຜູ່ຂ້າທີ່ມີນາມະກອນວ່າ.... "ສຸນັຂ" ຫລື "ຫມາ" ນາຍລາງຄົນກໍເອີ້ນຊື່ໄປຄົນລະຢ່າງ ເປັນຕົ້ນວ່າລັກກີ້.... ຈູດີ້.... ວິສກີ້.... ດິກ.... ແຕ່ພວກຜູ່ຂ້າເກີດຢູ່ໃນຜືນແຜ່ນດິນລາວບໍ່ເຄີຍຄິດສາອອນທີ່ມີຊື່ດັ່ງກ່າວ.... ພວກຜູ່ຂ້າຕ້ອງການມີຊື່ຂັນຍາກາດແບບລາວຍິນດີ ໃຫ້ເອີ້ນຊື່ວ່າບັກດຳ . ອີແດງຫລືບັກລາຍອີດ່າງຫລາຍກ່ວາ.... ພວກຜູ່ຂ້າບໍ່ຢາກເປັນຫມາຝຣັ່ງ ເພາະວ່າຂັນຍາກາດແລະສະພາບການສິ່ງແວດລ້ອມມັນບໍ່ອຳນວຍໃຫ້ ...ດ້ວຍເຫດນີ້ຈຶ່ງຂໍອະທິຖານກັບທ່ານທັງຫລາຍໄດ້ຊາບໂດຍທົ່ວເຖິງກັນ

ຢ່າໄດ້ອຸປໂລກເອີ້ນ ຊື່ຜູ່ຂ້າໃຫ້ລືມເຂົ້າຫນຽວແລະກ້າງປາແມ່ນ້ຳຂອງເລີຍ

"ເອີ້ນຫມານີ້.... ພະກຸນພວກຜູ່ຂ້າກໍຈັດເຂົ້າຢູ່ໃນຈຳພວກສັດເດັຽລະສານປະເພດຫນຶ່ງ ເຖິງຢ່າງໃດກໍດີແມ່ນແຕ່ພຸທອົງກໍສັ່ງຫ້າມຜູ່ຄົນ ບໍ່ໃຫ້ຮັບປະທານຊີ້ນຫມາ.. ສະແດງວ່າ ພວກຜູ່ຂ້າໃນຊາດກ່ອນແລະຊາດນີ້ເປັນຈຳພວກຢູ່ໃນສິລກິນໃນທັມ ມີຄວາມຊື່ສັດເປັນຍອດແບບຫນຶ່ງບໍ່ມີສອງ ເຖິງປານນັ້ນມະນຸສສັດປະເສີດລາງພວກກໍ່ຍັງກ້າກິນພວກຜູ່ຂ້າ ໂດຍອ້າງວ່າຊີ້ນຫມາເປັນອາຫານອັນແຊບນົວ ທີ່ຮັກສາໂຣກໄພໃຂ້ເຈັບ.... ຄວາມຈິງພວກຜູ່ຂ້າບໍ່ເຄີຍກະທຳຄວາມຜິດຫຍັງ.... ແຕ່ເປັນດ້ວຍເຫດໃດ ພວກມະນຸສລາ;ພວກຈຶ່ງມັກກິນຊີ້ນຫມາ! ຊ່າງບໍ່ໃຫ້ຄວາມຍຸດທັມແກ່ພວກຜູ່ຂ້າທີ່ມີນາມກອນວ່າ ຫມາ! ນີ້ເລີຍ ຄິດມາແລ້ວກໍເຈັບຊ້ຳໃຈ... ນັ້ນພວກຜູ່ຂ້າຈຶ່ງຂໍເວົ້າໃຫ້ເຕັມປາກແດ່ວ່າ....

"ທ່ານຜູ່ຫລົງຊາດອັນທີ່ເອີ້ນວ່າແນວລາວຂາຍຊາດທັ້ງຫລາຍ ໃນຖານະພວກທ່ານເປັນມະນຸສທີ່ຈັດຢູ່ໃນສັດປະເສີດແລ້ວ ມີປັນຍາອັນເລີກແຫລມ ພວກທ່ານຄວນຈະຮັບຮູ້ຄວາມຈິງຂອງຊີວິຕມະນຸສຂໍ້ນຶ່ງ ວ່າຄວາມແຕກແຍກແລະການຂາດຄວາມສາມັກຄີ ໃນກຸ່ມຊາດນຶ່ງຊາດໃດນັ້ນມະນຸສຈະຫາຄວາມສັນຕິສຸກບໍ່ໄດ້ເລີຍ...."

□ ອ່ານຕໍ່ຫນ້າ 22 ■

# ການຍາດແຍ່ງອຳນາດໃນພື້ນແຜ່ນດິນໃຫຍ່ຈີນ ກຳລັງເປັນໄປຢ່າງຊຸລມຸນ ນອກຈາກປະທານເໝົາເຊຕຸງ ກັບປະທານາທິບໍດີລິວເຊົາຈີແລ້ວ ກໍມີ ມາດາມເໝົາ ກັບມາດາມລິວ ຊຶ່ງຂັບຄ່ຽວກັນອຸດລຸດ ແຕ່ອາໄສທີ່ມາດາມເໝົາ ມີສາມີ ເປັນຜູ້ມີວາສນາກວ່າ ໃນຣະຍະນີ້ແຕ້ມການເມືອງຈຶ່ງໄດ້ປຽບຄູ່ຕໍ່ສູ້ ໃຊ້ຕຳແຫນ່ງຫນ້າທີ່ ທີ່ຕົນໄດ້ຮັບ ຟາດຟັນມາດາມ ລິວ ຈົນຈະຕົກກະປອງໄປແລ້ວ

*ແຕ່ເຣື່ອງຂອງຊຽງຊິງ ພັລະຍາຄົນທີ່ສາມຂອງເໝົາ ຊຶ່ງກຳລັງສແດງເດຊ ຢູ່ໃນຂນະນີ້ ກໍເປັນທີ່ນ່າຮູ້ ນ່າສຶກສາ ອັນຄວນທີ່ຈະ ຕີພິມລົງໄວ້ໃຫ້ປະຊາຊົນນອກແຜ່ນດິນໃຫຍ່ອ່ານກັນຢ່າງເຖິງໃຈ*

ຫວ່າງໄວນີ້ ໄດ້ມີພາບກາຕູນ ຫລືພາບລໍ້ ທີ່ນ່າສົນໃຈຊຸດນຶ່ງ ມີຫລາຍສິບພາບຕີພິມລົງໃນຫນັງສືພິມຫາວິທະຍາໄລຂອງພວກເຣດກາດແຫ່ງມະຫາວິທະຍາໄລຊິງຫວາ "ລອກຫນັງຫົວ" ຂອງມາດາມລິວເຊົາຈີຫລືຫວ່າງກວງໃນຊຶ່ງເປັນຊື່ເດີມ ປະນາມມາດາມລິວຢ່າງຫນ້າລະອາຍ ໃນພາບລໍ້ນັ້ນໄດ້ສແດງໃຫ້ເຫັນເຖິງມາດາມລິວ ຕົບຕາປະຊາຊົນຫລອກຫລວງປະຊາຊົນ ໃຊ້ຕຳແຫນ່ງຫນ້າທີ່ຂອງສາມີເປັນເຄື່ອງມືຫາປະໂຍຊ ກ່າວຫາວ່ານາງເປັນຜູ້ດຶງດັງລິວເຊົາຈີໃຫ້ຫັນເຫການເມືອງເພື່ອປະໂຍຊຕົວເອງ ໃນພາບລໍ້ທຳໃຫ້ເຫັນວ່ານາງລິວເປັນຜູ້ຜະເດັດການ ໃນຮູບຕອນຫລັງສແດງເຖິງການຕ້ອງຊ່ວຍກັນຂັບໄລ່ ມາດາມລິວໃຫ້ອອກໄປຈາກວົງການເມືອງ

ນອກຈາກສາມີກັບສາມີ ຈະຊິງດີຊິງເດັ່ນກັນແລ້ວ ນາງຊຽງຊິງຊຶ່ງຂນະນີ້ກຳລັງຈະເປັນຈັກພັດດີນີອົງທີ 4 ຂອງຈີນກໍວາງແຜນທຳລາຍຄູ່ແຂ່ງຂັນສຳຄັນຄື ມາດາມລິວໃຫ້ອັບຣັສມີໄປ ການເມືອງໃນແຜ່ນດິນໃຫຍ່ຈີນເຄີຍອຸ້ມວາຍພິນາສມາແລ້ວເພາະຈັກພັດດີນີເ ງ 3 ອົງອົງທີ 4 ຊຶ່ງ ຊາວໂລກກຳລັງເຍາະເຍີ້ຍຄື ເຈົ້າແຜ່ນດິນຜູ້ຍິງອົງທີ 4 ໄດ້ແກ່ນາງຊຽງຊິງນີ້ເອງປະວັດສາດຂອງຊາດ ຈີນຈະຊ້ຳຮອຍອີກໃນເມື່ອຜູ້ຍິງເຂົ້າມາກ່ຽວຂ້ອງ ແລະສະແດງບົດບາດໃນທາງການເມືອງເຂົ້າແຊກແຊງຫຍຸ້ງກ່ຽວໃນອຳນາດວາສນາຄາວນີ້ຈະເປັນຄາວພິບັດອັນແນ່ນອນ ເພາະນາງຊຽງຊິງ

ວິຈານການເມືອງຕ່າງປະເທດ

# ມາດາມເມົາ VS ມາດາມຫລິວ

• ໂດຍ • ໄສພົລ ບຸພພະສີຣິ

ພັລຍາຂອງເມົາເຊຕຸງນັ້ນເອງ

ກ່ອນຈະກ່າວເຖິງເຫດການຢ່າງອື່ນ ເຮົາກໍຄວນຈະຮູ້ປະວັດທຍ່ໆຂອງມາດາມຊຽງຊິງ ຜູ້ກຳລັງຈະຍິ່ງໃຫຍ່ແລະມີບົດບາທສຳຄັນນີ້ກ່ອນ

ນາງຊຽງຊິງ ມີຄວາມທະເຍີທະຍານຢ່າງແຮງກ້າຜິດມນຸສທັມດາ ໃນຣະຍະແຣກໆທີ່ນາງໄດ້ມາຮ່ວມຊີວິດຢູ່ກັບເມົາເຊຕຸງ ນາງໄດ້ຖືກບີບໃຫ້ຢູ່ຢ່າງງຽບໆ ບໍ່ໃຫ້ມີໂອກາສໄດ້ສແດງຕົນແຕ່ຢ່າງໃດ ນາງຈຶ່ງເກີດນີ່ປົມດ້ອຍຢ່າງມາກພໍນາງໄດ້ອອກຈາກມຸມນີ້ມີປີກກ້າຂາແຂງ ໄດ້ຕຳແໜ່ງໃຫຍ່ເປັນຜູ້ນຳໃນການປະຕິວັດທາງວັທນະທັມ ນາງກໍເຣີ່ມສແດງຣິດ ທະເຍີທະຍານອັ້ນສູ່ຈຸດສູງ ເພື່ອຄົ້ນຄວ້າຫາອຳນາຈສົມກັບນາງໄດ້ຈົມຢູ່ໃນມຸມມືດມານານປີ

ຊີວິດຂອງຊຽງຊິງນັ້ນ ອອກຈະເປັນເຣື່ອງທີ່ແປກປລາດແລະພິສດານຢູ່ບໍ່ນ້ອຍ ດັ່ງນັ້ນນາງເຄີຍເປັນດາຣາຫນັງຢູ່ທີ່ຊຽງໄຮ້ ເມື່ອຕອນທີ່ນາງພົບກັບເມົາເຊຕຸງທີ່ເມືອງເຢນອັນ ນັ້ນ ເມົາເຊຕຸງກຳລັງຢູ່ກັບພັລຍາຄົນທີສອງແລະຕອນນັ້ນ ນາງຊຽງຊິງກໍຢູ່ກັບສາມີຄົນທີ່ສອງຂອງນາງແຕ່ເມື່ອສາມີຄົນນີ້ງຈຶ່ງເປັນນັກສແດງຄົນນັ້ນ ເຫັນວ່າເມົາເຊຕຸງມາຫລົງຮັກກັບພັລຍາຂອງຕົນ ເຂົາກໍຍິນດີຕັດໃຈຍອມເສັຽສລະປະໂຍຊສຸຂສ່ວນຕົວເພື່ອເຫັນແກ່ອຸດົມການຂອງການປະຕິວັດ

ແຕ່ພັລຍາຄົນທີສອງຂອງເມົາ ໃຈບໍ່ກ້ານໍທີ່ຈະຫລີກທາງໃຫ້ ນາງຈຶ່ງໄປຮ້ອງຂໍ ໄຫວ້ວອນໃຫ້ເຫັນໃຈນາງ ຈາກບັນດາບຸຄຄົລຊັ້ນຜູ້ໃຫຍ່ໃນພັກ ໃຫ້ຊ່ວຍວ່າກ່າວເມົາເຊຕຸງ ແຕ່ຜູ້ໃຫຍ່ໃນພັກ ກໍບໍ່ສາມາຖຂັດຂວາງເມົາເຊຕຸງໄດ້ ຈຶ່ງພຽງແຕ່ຕົກລົງກັນວ່າ ໃຫ້ເມົາເຊຕຸງສົ່ງເມັຽຄົນທີ່ສອງໄປຢູ່ທີ່ມອສໂຄ ແລ້ວກໍແຕ່ງງານກັບນ ຍຊຽງຊິງແຕ່ມີເງື່ອນໄຂວ່າ ເມັຽຄົນໃຫມ່ຈະຕ້ອງເກັບຕົວຢູ່ຢ່າງງຽບໆຫ້າມອອກມາສເນີຫນ້າ ຫລືສແດງຕວເປັນເດັ່ນເງື່ອນໄຂນີ້ເຖິງນາງຊຽງຊິງຈະບໍ່ພໍໃຈ ແຕ່ກໍຕ້ອງຍອມຮັບເອົາເພາະໃນຂນະນັ້ນ ຕົນເອງຍັງປີກບໍ່ກ້າ ຂາບໍ່ແຂງນາງໄດ້ເກັບເອົາຄວາມຂົມຂື່ນໃຈໄວ້ນານເຖິງ 25 ປີພໍຣະເບີດອອກໄດ້ໃນຄັ້ງນີ້ ຊຽງຊິງກໍເຣີ່ມສແດງຢາງເຕັມທີ່ຂນະນີ້ນາງມີຕຳແໜ່ງສູງ ເປັນຜູ້ນຳໃນທາງປະຕິວັດດ້ານວັທນະທັມນັກວິຈານຄົນນຶ່ງກ່າວວ່າ ການທີ່ຜູ້ຍິງ ກ້າວຂຶ້ນມາມີບົທບາທສຳຄັນຊັ້ນສູງໃນທາງການເມືອງ ດັ່ງຈະທຳໃຫ້ຄົນອື່ນເປັນຈຳນວນມາກ ສຽວສັນຫລັງໄປຕາມໆກັນເພາະໃນພົງສາວະດານຈີນ ເຄີຍມີຈັກພັດດີນີມາແລ້ວສາມອົງຄັ້ງໃດທີ່ຜູ້ຍິງກຸມອຳນາດທາງການເມືອງ ແຜ່ນດິນກໍເດືອດຮ້ອນໄປທຸກຫຍ່ອມຫຍ້າ ຈັກພັດດີນີທັງສາມພະອົງໃນອດີດຈຶ່ງຖືກນັກປະວັດສາດຈີນປະນາມເອົາໄວ້ຢ່າງເຈັບແສບຫາກຈະມີນາງຊຽງຊິງ ຂຶ້ນມາເປັນຈັກພັດດີນີຄົນທີ່ສີ່ແຜ່ນດິນຈີນຄົງຈະນອງເລືອດອີກ

■ ອ່ານຕໍ່ໜ້າ 46 ■

# ຄັ້ງໜຶ່ງໃນສນາມ

ໂດຍ... ທ.ດ. ພາລິຈັນທ໌

ທະຫານໃນສນາມຣົບ ຫວັງເອົາຄວາມສງົບມາສູ່ ປວງປະຊາ ປາຖນາຄວາມດີຕໍ່ຍາດພີ່ນ້ອງ ເປັນຮົ້ວປ້ອງກຳແພງເມືອງ.

ຄຳທີ່ວ່າທະຫານເປັນຄຳໜຶ່ງຊຶ່ງແທນຕົວ ໝາໃຫ້ ບຸກຄົນທັງຫລາຍມີຄວາມເກັ່ງກ້າສູ້ຮົບເສີກສັຕຣູ ໂດຍເອົາ ຊີວິຕເປັນເດີມພັນແກ່ປະເທສຊາດ

ທີ່ແນວຣົບຊຶ່ງເປັນເຂດກັນດານບໍ່ມີປະຊາຊົນໃດຈະ ສາມາດອົດທົນຢູ່ໄດ້ ດ້ວຍຄວາມບັງຄັບກົດຂີ່ຂົ່ມເຫັງຂອງ ພວກສັຕຣູ ເຫລືອພຽງແຕ່ພວກທະຫານຂອງຊາດເທົ່ານັ້ນ ຊຶ່ງພະຍາຍາມລໍຄອຍຕ້ານທານສັຕຣູທີ່ລຸກລາມເຂົ້າມາກໍ່ໄພ ອັນຕລາຍແກ່ປວງປະຊາ

ຮ້ອຍເອກສົມຈິຕເປັນຜູ້ບັງຄັບກອງຮ້ອຍ ທີ່ເຂດຣົບ ແດນກັນດານ ຊຶ່ງເຄີຍໄດ້ຜ່ານອຸປສັກມາຫລາຍຄັ້ງຫລາຍ ຫົນ ວັນນຶ່ງທ່ານພ້ອມທັງທະຫານຂອງທ່ານ ໄດ້ອອກລາດ ຕະເວນເຂດນອກ ບາງເອີນໄດ້ປະທະກັບພວກສັຕຣູໃນທັນ ໃດສຽງປືນກໍດັງຂຶ້ນຢ່າງສນັ່ນຫວັ່ນໄຫວ ຕ່າງຝ່າຍກໍຕ້ານ ທານກັນດ້ວຍຄວາມກ້າຫານເປັນເວລາດົນນານ ແຕ່ ຜົລສຳເຣັດກໍເກີດຂຶ້ນແກ່ເລົ່າທະຫານຂອງທ່ານ ຣ.ອ. ສົມ ຈິຕ ຊຶ່ງມີຄວາມເກັ່ງກ້າສາມາດໃນດ້ານການສູ້ຮົບເໜືອ ກວ່າ ຈຶ່ງໄດ້ຂັບໄລ່ພວກສັຕຣູໃຫ້ແຕກທະລາຍໄປ ພ້ອມ ນັ້ນ ຍັງໄດ້ພົບຈາກສົບແລະອາວຸດຂອງພວກສັຕຣູຈຳນວນ ມາກ ມີສຽງໜຶ່ງໄດ້ພົ້ນອອກມາຈາກພຸ່ມໄມ້ວ່າ ໂອຍ !... ໂອຍ !.... ເປັນສຽງເຍັນໆ ຄ້າຍກັນກັບຄົນຈະສິ້ນລົມຫາຍ

● ອ່ານຕໍ່ໜ້າ 24 ●

# ໝານ້ອຍຫັນດາ

( ຕໍ່ຈາກໜ້າ 19 )

"ອ້າຍດຳ....ເຈົ້າເວົ້າຫຍັງເກາະນ້ອງບໍ່ເຫັນເຂົ້າໃຈ ເລີຍ" ນາງດ່າງຫັນມາຖາມເພາະເຫັນເປັນທີ່ຜິດສັງເກດໃນ ການທີ່ຊູ້ຮັກຂອງນາງບໍ່ເຄີຍມີປະຕິກິຣິຍາແບບນີ້ມາກ່ອນເລີຍ

"ທູນຫົວ ... ຟັງອ້າຍເວົ້າກໍແລ້ວກັນ ມັ້ນອ້າຍບໍ່ໄດ້ ກິນນ້ຳເຫລົ້າດອກແຕ່ໄປກິນຂີ້ເຫລົ້າ ຊຶ່ງພວກມະນຸສຖິ້ມ ໄວ້ຮູ້ສຶກວ່າຫວານດີພໍກິນອີ່ມແລ້ວກໍຮູ້ສຶກວິນຫົວ ແຕ່ໃຈ ກ້າຜາລຶກ....ມັ້ນເອົາຄວາມຈິງໃຈສູ່ຟັງ...."

ອ້າຍດຳກິນເຫລົ້າຊຸກຫວາ ?

ຮ້ອຍ! ແມ່ນຖາມສັ້ຫລັ້ໄປຫຍັງຣິ?" ບັກດຳສົ່ງສຽງ ຄຳຣາມເມື່ອເຫັນນາງດ່າງໝອບນັ້ນກໍບັນຍາຍຕໍ່ໄປວ່າ

ຜູ້ຂ້າໃນຖານະໝາລາວມີຄວາມເສັຽໃຈແບບເຫລືອ ແສນໃນຖານະພວກທ່ານແນວລາວເກີດເປັນມະນຸສລາວແຕ່ ນ້ຳໃຈແລະຄວາມຄິດຂອງພວກທ່ານບໍ່ມີ ເຈຕນາສ້າງຜົນ ແຜ່ນດິນລາວໃຫ້ມີຄວາມສາມັກຄີໃນຊາດ ພວກທ່ານສ້າງ ຄວາມແບ່ງແຍກເພາະບ້າລັດທິການເມືອງ ຈົນວ່າຖອນຕົວ ບໍ່ຂຶ້ນ.... ຈາກເຫດການທີ່ຜ່ານພົ້ນມາພວກທ່ານ ໄດ້ສ້າງ ຄວາມເຂົ້າໃຈຣະຫວ່າງຄົນໃນຊາດໄດ້ພຽງໃດ ....ໃນສາຍ ຕາພວກຜູ້ຂ້າທີ່ເອີ້ນວ່າໝານີ້....ພວກທ່ານບໍ່ໄດ້ສ້າງຄວາມ ອົບອຸ່ນໃຫ້ແກ່ຄົນໃນຊາດຂອງພວກທ່ານເລີຍ....ມີແຕ່ສ້າງ ອານາຈັກແຫ່ງຄວາມປ່າເຖື່ອນບີບບັງຄັບຄົນໃນຊາດຕ້ອງ ໄດ້ຮັບຄວາມຂາດເຂີນ...ພັດພາກທີ່ຢູ່ອາໄສຜູ້ ຄົນຕ້ອງລົ້ມ ຕາຍຍ້ອນການກະທຳຂອງພວກທ່ານຜູ້ຫລົງຊາດ...ຜູ້ຂ້າເຫັນ ວ່າການກະທຳຂອງພວກທ່ານໄດ້ກ້າວໄປສູ່ ຄວາມວິບັດຈິບ ຫາຍ....ໃນຖານະທີ່ພວກທ່ານເປັນສັດປະເສີດ....ແທນທີ່ຈະ

● ອ່ານຕໍ່ໜ້າ 27 ●




ໃນຮອບເດືອນ ມີນາ 1967

■ ໂດຍ.... ໄທລາວ ■

## ຣາສີເມສ ( ແພະ )

ຄືຜູ້ເກີດໃນຣະຫວ່າງວັນທີ່ 14 ມີນາເຖິງວັນທີ່ 12 ເມສາໃນຮອບເດືອນນີ້ທ່ານອາດຈະມີການຮ້ອນເຣື່ອງເງິນຄໍາກໍາແກ້ວ ເວົ້າງ່າຍໆວ່າເງິນອາດຈະຂາດມືທ່ານນັ້ນເອງ ຫລືທີ່ພາສາສມັຍໃຫມ່ເວົ້າກັນວ່າ ວິຕາມິນ ງໍ ຂາດນັ້ນເອງ ຖ້າຫາກວ່າທ່ານມີການເງິນບໍ່ດີຢູ່ແລ້ວຄືເງິນຂາດໆເຂີນໆຢູ່ແລ້ວຮັບຮອງວ່າຕ້ອງແລ່ນໃຕ້ແລ່ນເຫນືອຫົວປັກຫົວປັ່ນທີ່ດຽວ

ແຕ່ບໍ່ເປັນຫຍັງເຣື່ອງທຸຣະການງານອື່ນໆດີຢູ່ອາດຈະໄດ້ເງິນໃນກິຈການງານເກົ່າຄ້າງຢູ່ ບາງທີທ່ານອາຈຖືກເສັຽເງິນໃນການສົງເຄາະຜູ້ທີ່ຕາຍ ຄື ຊ່ວຍຜູ້ເຮັດບຸນເຮືອນດີນັ້ນເອງ

## ຣາສີພຶສສົບ(ງົວ)

ຄືຜູ້ທີ່ເກີດໃນຣະຫວ່າງວັນທີ່ 13 ເມສາເຖິງ 13 ພຶສພາໃນຮອບເດືອນນີ້ທ່ານຈະມີການສໍາພັນກັບຫມູ່ເພື່ອນມິດສະຫາຍທ່ານອາດຈະພົບພໍ້ກັບຄົນທີ່ເຫັນແກ່ຕົວອາດພົບ ພໍ້ກັບຄວາມຮັກຈິ່ງບາງທີທ່ານຈະປວດຫົວເພາະເຣື່ອງບາງຢ່າງຈາກຫມູ່ເພື່ອນຂອງທ່ານແຕ່ບໍ່ເປັນຫຍັງທ່ານອາດຈະໄດ້ ລາບຈາກຜູ້ໃຫຍ່ແລະລາງເທື່ອອາດມີການເດີນທາງ ໃກຣະຍະນີ້ດາວພຸດຈະພັກເຣື່ອງການເງິນອາດຈະຊະງັກບໍ່ເປັນໃປ່ຕາມທີ່ຄາດຫມາຍໄວ້

## ຣາສີເມຖຸນ ( ຄົນຄູ່ )

ຄືຜູ້ທີ່ເກີດໃນຣະຫວ່າງວັນທີ 14 ພຶສພາ ເຖິງວັນທີ 13 ມິຖຸນາ ໃນຮອບເດືອນນີ້ ທ່ານອາດຈະພົບພໍ້ເຣື່ອງຍຸ່ງໆພາຽໃນເຮືອນຫລືທີ່ເອີ້ນວ່າຄອບຄົວ ໃຫ້ຣະວັງ ອຸປັຕິເຫດເຊັ່ນຣົຖຕໍາຣົຖຈົບ ແຕ່ທ່ານອາດມີໂຊຄໃນເຣື່ອງເງິນຢູ່ແດ່ຄືການສ່ຽງໂຊຄທາງລາບລອຍໃນຮອບເດືອນນີ້ກໍ່ມີຫວັງແດ່ຫາກຂັດຄ້ອຍດາວພະພຸດຢູ່ໃນຣະຍະຖອຍຫລັງ ຫລືທີ່ເອີ້ນວ່າ " ພັກ " ການເງິນອາດຖອຍຫລັງແລະພັກໄປນໍາ ຄືການສັບສົນໃນເຣື່ອງເງິນນັ້ນເອງ .

## ຣາສີກໍຣະກົດ ( ປູ )

ຄືຜູ້ທີ່ເກີດໃນຣະຫວາງວັນທີ 14 ມິຖູນາ ເຖິງວັນທີ- 15 ກໍຣະກາດາ ໃນຣະຫວ່າງຮອບເດືອນນີ້ ຈະມີການຕິດຕໍ່ກັບເພື່ອນຝູງມິດສະຫາຍ ແລະຜູ້ມີກຽດຫລາຽ ໃຫ້ຣະມັດຣະວັງການມີປາກມີສຽງໄວ້ແດ່ຈະດີ ເພື່ອນຝູງມິດສະຫາຍທີ່ຄົບກັນມາດົນແລ້ວຈະໃຫ້ລາບ ລອງສ່ຽງໂຊຄເບິ່ງທ່ານທີອາດມີລາບລອຍແດ່ກໍ່ອາດຈະບໍ່ໄດ້ດັ່ງໃຈນັກ ທຸກ ອັນ ທຸກແນວ ເພາະດາວພຸດຢູ່ໃນຣະຫວ່າງພັກເຖິງວັນທີ 16 ມີນາ ກາຍ 16 ມີນາໄປແລ້ວອາດຈະດີຫລາຍ ຣະວັງຢ່າເຊື່ອຂ່າວລືໃຫ້ຮອບຄອບໃນເຣື່ອງທີ່ກ່ຽວກັບເອກສານ

## ຣາສີສິງ(ຣາຊສີ)

● ອ່ານຕໍ່ຫນ້າ 42 ●

## ດັ່ງບຶ່ງໃບສບານ

( ຕໍ່ຈາກໜ້າ 22 )

ໃຈແລ້ວ ພວກເລົ່າທະຫານຂອງທ່ານຈຶ່ງໄດ້ມາກັນຄົ້ນຊອກຫາດ້ວຍຄວາມສົງໄສວ່າຕ້ອງແມ່ນສັດຕຣູກັນແທ້ ໜ່ອຍບໍ່ນານກໍເລີຍໄປພົບຍິງຜູ້ໜຶ່ງກຳລັງສລົບຢູ່ພ້ອມທັງເຄື່ອງປະກອບຕົວເຊັ່ນໄຖ່ເຂົ້າແລະລູກກະສຸນ ຈຶ່ງຖືກພວກສັດຕຣູໄດ້ບັງຄັບໃຫ້ນາງບັນທຸກດ້ວຍຄວາມລຳບາກ ນາງໄດ້ທໍຣະມານຕໍ່ຄວາມເຈັບປວດຂອງບາດແຜລ ດ້ວຍຄວາມອ່ອນແຮງເມື່ອຍລ້າ ຈົນບໍ່ສາມາດທີ່ຈະອອກປາກໄດ້ ແມ້ແຕ່ນາງຈະຮ້ອງ ຈະໃຫ້ກໍບໍ່ເປັນ ລຳພັງນາງໄດ້ລັ່ງນ້ຳຕາທີ່ທໍຣະມານຂອງນາງນັ້ນ ອອກມາດ້ວຍຄວາມຄຽດແຄ້ນແກ່ສັດຕຣູ

ນາງຄິດວ່າວັນໜຶ່ງຖ້າຊີວິດຍັງ ນາງ ຕ້ອງ ນຳ ລ້າງພວກສັດຕຣູນີ້ດ້ວຍເລືອດຂອງນາງ ດ້ວຍ ຄວາມ ເຈັບ ປວດ ແລະຄຽດແຄ້ນ ຈຶ່ງມາໃຫ້ນາງສລົບລົງໄປອີກຄັ້ງໜຶ່ງ ຈຶ່ງໄດ້ຖືກພະຍາບານຕົວຢູ່ຈຸດທີ່ໝັ້ນຂອງເຫລົ່າທະຫານໂດຍຖືກຄວບຄຸມເບິ່ງແຍງຢ່າງໃກ້ຊິດ ຈາກທ່ານ ຣ.ອ,ສົມຈິດທຸກວັນທ່ານໄດ້ສລະເວລາໄປຢ້ຽມຢາມ ໃຫ້ ຄວາມ ອົບ ອຸ່ນແກ່ນາງເໝືອນດັ່ງອ້າຍນ້ອງທີ່ຮ່ວມທ້ອງດຽວກັນ .

ວັນໜຶ່ງທ່ານໄດ້ບອກກັບນາງວ່າ ບົວຄຳ ມື້ນີ້ອ້າຍຈະໄດ້ອອກໄປລາດຕະເວນແລ້ວ ເພາະອ້າຍໄດ້ຮູ້ວ່າພວກສັດຕຣູເຂົ້າມາຕັ້ງທັບເພື່ອຈະໂຈມຕີຈຸດທີ່ໝັ້ນຂອງອ້າຍສັ້ນນໍໃຫ້ນ້ອງຈົ່ງລໍຄອຍພະຍາບານຕົວຖ້າອ້າຍຢູ່ກັບນາຍໝໍນີ້ ອ້າຍຈະບອກໃຫ້ເຂົາຮັກສານ້ອງເປັນພິເສດນາງຕອບວ່າໄທຍາອ້າຍ ຍາອ້າຍຈະໄປອີກຫວະ ? ດີແລ້ວນ້ອງຈະຝາກຄວາມຄຽດແຄ້ນຂອງນ້ອງໄປສູ້ຮົບພວກສັດຕຣູ ໃຫ້ຍາອ້າຍໄດ້ຮັບໄຊຊນະອັນງາມ ນ້ອງຢູ່ນີ້ຈະພຍາຍາມວິງວອນຕໍ່

□ ອ່ານຕໍ່ໜ້າ 33 □

## ໃຜ....? ເຮັດໃຫ້ນ້ຳຕາພໍ່ບ້ານ ຕົກ ໃຜ.... ຢຽບຫົວໃຈພໍ່ບ້ານຈົນ ນ້ຳຕາຫລັ່ງ....ເປັນຫຍັງພໍ່ບ້ານພໍ່ ຕລຸບໃຫ້ເຫລກ ໄປ ຂ້າງ ບຶ່ງ ສິນ ຄວາມຄຽດແຄ້ນ ເຫດຜົລນັ້ນມີ ເໝືອນກັບ ຄຳໂບຮານກ່າວໄວ້ວ່າ "ດີນຊ້າງຢຽບປາກບົກ"

ຕາແສງແດງ (ນາມສົມມຸດ) ອາຍຸກໍພຽງ 30 ປີເທົ່ານັ້ນ ຍັງໜຸ່ມຍັງແໜ້ນເບິ່ງແຍງບ່າວໄພ່ຣາສດອນບໍ່ໄກບໍ່ໄກຈາກວຽງຈັນພຽງ 34–35 ຫລັກກິໂລແມຕນີ້ເອງ ແຕ່ຕາແສງຢາກຈະເປັນຄົນທຸໜມາຕາມິດເຣື່ອງໂລກີວິໃສນີ້ຫລາຍ ບໍ່ຢູ່ໃນຄຳສັ່ງສອນຂອງພຣະພຸທເຈົ້າໃນສິນ 5 ຂໍ້ 3 (ກາເມ) ຖ້າເປັນສມັຍໂບຮານເຈົ້າຊີວິດສັ່ງເອົາໄປຕັດຄໍສຽບປະຈານຢູ່ປະຕູເມືອງແລ້ວ

ສ່ວນພໍ່ບ້ານຜາຍ (ນາມສົມມຸດ) ເປັນພໍ່ບ້ານອາຍຸໄລ່ເລັ່ຽກັບຕາແສງຄື 32 ປີ ເປັນພໍ່ບ້ານຢູ່ບ້ານຈຳພວກມີຊື່ວ່າໜອງຫລີສະຢູ່ນຳໜ້າ ແລະເປັນພໍ່ບ້ານຂົ້ນກັບບ້ານຕາແສງ.

ແດງ....ສິ່ງສຳຄັນກໍຄືພໍ່ບ້ານຜາຍ ມີເມັຽສາວສວຍໃຜເຫັນກໍສິ່ງຕາແນມເພາະນາງເປັນຄົນຂາວ ອວບອັດເຕັ້ງຕຶງໄປເສັຽທຸກຢ່າງເບິ່ງທາງໜ້າກໍຊື່ນຕາເບິ່ງທາງຫລັງກໍຊື່ນໃຈຂໍສົມມຸດນາມໃຫ້ຜູ້ເລີໂສມວ່າກິ່ງແກ້ວ

ຄືນນຶ່ງບ້ານຂອງພໍ່ບ້ານຜາຍ ຈັດໃຫ້ມີບຸນອັດຢ່າງມ່ວນຊື່ນຕາມປະສາບ້ານນອກຂອກຄາເນນັ້ນຈຳເປັນຢູ່ເອງທີ່ຕາແສງແດງຈະຕ້ອງໄປຮ່ວມບຸນນຳ

ຝົນສິ່ງທ້າຍຣະດູຣິນມາເບົາໆຕລອດຄືນພໍ່ບ້ານຜາຍ

# ເບື້ອງຫລັງຂ່າວ ນ້ຳຕາພໍ່ບ້ານ ໂດຍ.... ຈັນສ່ອງແສງ

ກໍ່ບໍ່ຫວັ່ນພາຕາແສງໄປທ່ຽວ ຢ້ຽມຢາມຣາສດອນແດ່ເຂົ້າວັດຟັງທັມຣັບສິນ 5 ສິນ 8 ນຳພຣະສົງອົງຄະເຈົ້າ ຕາມປະເພນີທາງສາສນາ

ເມື່ອເດິກແລ້ວພໍ່ບ້ານກໍ່ຊັກຊວນຕາແສງພັກນຳຕາມອັທະຍາໃສ

"ຍາຕາແສງຄືນນີ້ມັນກໍເດິກດື່ນແລ້ວໄປຕົ້ມໄກ່ກິນຢູ່ເຮືອນຂ້ອຍເປັນແຍັງພໍ່ຊຳຊາແຈ້ງ"

"ມັນຈະດີບໍ່ຍາພໍ່ບ້ານ ໄປຫາທ່ຽວເຫລັ້ນສາວບໍ່ດີກວ່າບໍ່?"

"ເຫລັ້ນຈັ່ງໃດບໍ່ມີແຕ່ລູກໆຫລານໆ ເຂົາຈະດູຖູກເອົາແລ້ວ"

"ບະ....ລູກບ້ານຈະມາດູຖູກຕາແສງ ມັນກໍໃຫຍ່ໄປໂພດແລ້ວເວີຍ"

ຕາແສງແດງກ່າວດ້ວ ຍຄວາມຖືດີເພາະຣິດເຫລົ້າພາ "ກະບໍ່ມີໃຜກ້າແລ້ວຍ ຕາແສງແຕ່ຈະໄປລົມໃຜລະ ?" ພໍ່ບ້ານເວົ້າເອົາໃຈເຈົ້ານາຍ

"ໃຜກໍໄດ້ຂໍໃຫ້ງາມຄືເມັຽພໍ່ບ້ານກໍ ເປັນໃຊ້ການໄດ້"

"ຮ້ວາຍ....ມັນກໍຫາຍາກຢູ່ໃດຍາຕາແສງຄົນໃນທິບນີ້ມະ"

"ພໍ່ບ້ານພາຍເວົ້າຍິ້ມທັງດີໃຈທີ່ມີເມັຽງາມ

"ພໍ່ບ້ານໄດ້ເມັຽຜູ້ນີ້ມາແຕ່ໃສຄືວ່າງາມວິເສດແທ້"

"ຄວາມມັກຄວາມຮັກ ເຈົ້ານາຍເອີຍ....ເຖິງວ່າຈະຢູ່ຟາກຟ້າເຂົາຂຽວທາງໃດ ດົ້ນດັ້ນເອົາ"

"ຄົງຢູ່ໄກບໍ່ຄ່ອຍ"

ໄກພໍສົມ ວນແລະມີຜູ້ດຽວນີ້ເທົ່ານັ້ນ"

"ບະຂ້ອຍກໍຢາກໄດ້ຈັ່ງຊິ້ຈັກຄົນເອີຍ

"ຫາເອົາຕີຍາຕາແສງຂ້ອຍຈະຫາຊ່ອຍ"

ເມື່ອສອງພໍ່ບ້ານຕາແສງຍ່າງ ຄຸຍກັນໄປຕາມບໍຣິເວນວັດນັ້ນແລ້ວກໍ່ບໍ່ມີບ່ອນຈະນັ່ງອີກ ເພາະເຫລົ້າກໍພາກັນ ກິນກັນດື່ມຈົນເມົາມາຍຫມົດທຸກຄົນແລ້ວ ປະກອບກັບຟ້າກໍ ບໍ່ຄ່ອຍອຳນວຍໄກ່ກໍຂັນເດິກແລ້ວພໍ່ບ້ານຈຶ່ງຊວນຕາແສງເມືອພັກເຊົາຢູ່ເຮືອນ

ຕາແສງຜູ້ຫລົງມັກເມັຽພໍ່ບ້ານກໍ່ຕົກລົງ ໃຈເລີຽພາກັນຍ່າງມາເຮືອນພໍ່ບ້ານ

ຝ່າຍພໍ່ບ້ານພາຍຢາກເອົາໃຈເຈົ້າໃຈນາຍກໍຟ້າວປຸກເມັຽອອກມາຈັດທີ່ຢູ່ທີ່ນອນໃຫ້ຕາແສງຫນຸ່ມ

"ກິ່ງແກ້ວເອີຍຈັດຫາບ່ອນ ຫລັບບ່ອນນອນໃຫ້ຕາແສງແດງແດ່ເພິ່ນມາພັກເຊົານຳພວກເຮົາ" ພໍ່ບ້ານຮ້ອງໃສ່ເມັຽກ່ອນຂຶ້ນຄັນໃດຊ້ຳ

ຢ່າໄປກອນເຂົາເລີຍພໍ່ບ້ານປ່ອຍເຂົານອນ ຕາມສບາຍເທາະຂ້ອຍຈັ່ງໃດກໍໄດ້ດອກ" ຕາແສງຄົນຂີ້ເກງໃຈກ່າວ

"ລູກແມ້ແກ້ວຕາແສງມານະ ບະມານອນຫລັບດີແທ້ນໍ່ພໍ່ບ້ານຜູ້ສຸພາບເວົ້າຢອກເມັຽລາວ

ຄາວນີ້ໄດ້ຜົ້ນພາຍໃນຫ້ອງເຮືອນກໍມີໄຟຕະກຽງນ້ຳມັນກາດລຸກພືບຂຶ້ນ , ແລະບໍ່ດົນປະຕູເຮືອນກໍ່ເປີດອ້າອອກກິ່ງແກ້ວຢູ່ໃນຊຸດລາວເດີມຄືບຸ່ງສິ້ນ ຜືນດຽວຮັດເອິກແສງໄຟຕະກຽງສ່ອງໃຫ້ເຫັນສ່ວນເນື້ອງອກອັນຊູຊັນ ງາມງອນຂອງກິ່ງແກ້ວຢ່າງຖນັດຈົນຕາແສງແດງຕາເຫລືອກ

ຄວາມຮູ້ສຶກຫລາຍຢ່າງເກີດຂຶ້ນຢ່າງສັບສົນສ່ວນພໍ່

● ອ່ານຕໍ່ຫນ້າ 43 ●




□ ໂດຍ.... ໃຜຄຳ ສິງຄະວິຈິຕ □

ໄອຍະການສານຊັ້ນຕົ້ນ ວຽງຈັນ

ວຽງຈັນທນ໌ ວັນທີ 10 ກຸມພາ 1987

ຮຽນ ທ່ານໃຜຄຳ ສິງຄະວິຈິຕ

ໄອຍະການສານຊັ້ນຕົ້ນແຂວງວຽງຈັນ ທີ່ ເຄົາລົບ ຂ້າພະເຈົ້າໄດ້ອ່ານໜັງສືພິມຊາດລາວລາຍເດືອນສະບັບປະຖົມມະລືກແລ້ວຮູ້ສຶກວ່າ ເປັນນິຕຍະສານທີ່ມີສາລະນ່າອ່ານ ໂດຍສະເພາະຢ່າງຍິ່ງ ໃນຄໍລັມຊຶ່ງທ່ານຂຽນທີ່ວ່າ ປະຊາຊົນຄວນສົນໃຈ ກັບກົດໝາຍນັ້ນ ຂ້າພະເຈົ້າສົນໃຈຫລາຍ ນ່າເສັຽດາຍທີ່ທ່ານຂຽນນ້ອຍໄປໂພດຫລືວ່າໜ້າເຈັ້ຽມີຈຳກັດກໍບໍ່ຊາບ ແນວໃດກໍດີຂ້າພະເຈົ້າມີບັນຫາທາງດ້ານກົດໝາຍ 3 ບັນຫາທີ່ຈະຮຽນຖາມທ່ານ ຫວັງວ່າທ່ານຄົງຈະບໍ່ປະຕິເສດ ຈຶ່ງຂໍຂອບພະຄຸນລ່ວງໜ້າມາໃນໂອກາດນີ້ດ້ວຍ

1 ເດັກນ້ອຍຈອນຈັດ (ບໍ່ມີພໍ່ແມ່ ) ຜິດຂວ້າງກ້ອນຫີນໄປຕຳໜ້າແວ່ນຣົຖແຕກ ຜູ້ອັປະໂຍຊຈະໄປທວງຖາມເອົາຄ່າເສັຽຫາຍນຳໃຜ ເດັກນ້ອຽ(ອາຍຸປະມານ 12–13ປີ ຜູ້ນັ້ນເປັນຜູ້ຮັບຜິດຊອບບໍ່ຫລືວ່າແມ່ນໃຜຮັບແທນທີ່ຂ້າພະເຈົ້າຖາມດັ່ງນີ້ກໍເພາະມີໝູ່ບ້ານໃກ້ ຖືກເດັກນ້ອຍພວກນີ້ຂວ້າງກ້ອນຫີນໃສ່ໜ້າຕ່າງຣົຖແຕກມາແລ້ວ ແຕ່ຈັກຈະໄປໂທສນຳໃຜໃຫ້ໃຊ້ຄ່າເສັຽຫາຍເພາະເປັນເດັກນ້ອຍຖາມວ່າພໍ່ແມ່ຢູ່ໃສກໍໄດ້ຄວາມຕອບວ່າ "ພໍ່ແມ່ຕາຍໝົດແລ້ວ

2 ຂ້າພະເຈົ້າໄດ້ອ່ານໜັງສືພິມຊາດລາວສບັບເທົ່າໃດຈື່ບໍ່ໄດ້ ໄດ້ ລົງຂ່າວໂດຍອ້າງວ່າຜູ້ສື່ຂ່າວໄດ້ມີໂອກາສເຂົ້າໄປຢ້ຽມຢາມສັງເກດການເບິ່ງໃນຄຸກໃຫຍ່ ແລະໄດ້ເຫັນຜູ້ຍິງທີ່ລໍການຕັດສິນຂອງສານທີ່ຂັງຝາກໄວ້ ໃນຄຸກນັ້ນໄດ້ນຳລູກເຂົ້າໄປຢູ່ນຳ ທັງນີ້ອ້າງວ່າ " ເພາະພໍ່ບໍ່ມີເວລາເບິ່ງແຍງລູກ "

ຂໍຮຽນຖາມວ່າ 1 ໃ ຕ່າງປະເທສເຂົາປະຕິບັດກັນບໍ່ ? ເວລາແມ່ໄປຕິດຄຸກ 2 ມັນຈະບໍ່ເປັນການເສື່ອມເສັຽອານາຄົດຂອງເດັກນ້ອຍບໍ່ ?

3 ຂ້າພະເຈົ້າມີໝູ່ຢູ່ຄົນນຶ່ງ ເຂົາເປັນນາຍທະຫານຢູ່ແນວໜ້າ ແລະໄດ້ມີຂ່າວມາສູ່ແນວຫລັງວ່າ ເຂົາໄດ້ເສັຽຊີວິດ ແລ້ວທາງຂັ້ນສູງກໍໄດ້ຈ່າຍເງິນຄ່າທົດແທນໄປຕາມຣະບຽບ ເພາະເຊື່ອວ່າຕາຍແທ້ ແລະລູກເມັຽກໍໄດ້ເຮັດບຸນຫາຕາມປະເພນີ ແລ້ວກໍໄດ້ແຕ່ງງານໃໝ່ຢູ່ຕໍ່ມາກໍຊາບຂ່າວວ່າເພື່ອນຂອງຂ້າພະເຈົ້າຜູ້ນັ້ນຍັງບໍ່ຕາຍ ແລະຍັງຮັກຍັງຫວງພັລຍາຢູ່ທັງທີ່ຮູ້ວ່າໄດ້ແຕ່ງງານໃໝ່ແລ້ວ ສ່ວນພັລຍາກໍຍັງຮັກອາໄລຜົວເກົ່າຢູ່ເທົ່າໆກັບຜົວໃໝ່ ຊຶ່ງໄດ້ແຕ່ງງານກັນໂດຍຖືກຕ້ອງຕາມກົດໝາຍ ຂໍຮຽ ຖາມວ່າ ຖ້າຫາກເພື່ອນຂອງຂ້າພະເຈົ້າຈະຟ້ອງຜົວໃໝ່ຂອງພັລຍາ ໃນຖານະເປັນຊູ້ເພາະຍັງບໍ່ໄດ້ຢ່າຂາດກັບຕົນຈະໄດ້ບໍ່ ? ຫລືຟ້ອງເອົາເມັຽຄືນຈະໄດ້ບໍ່ ?

ຂ້າພະເຈົ້າຂໍຖາມເທົ່ານີ້ ຫວັງວ່າທ່ານໄອຍະການຄົງຈະຕອບ

ຂໍສແດງຄວາມນັບຖື

ຜູ້ສົນໃຈ

## ຕອບທ່ານຜູ້ສົນໃຈ ທີ່ຮັກແພງ

ຂ້າພະເຈົ້າໄດ້ຮັບບັນຫາຂ້ອງໃຈໃນຈົດໝາຍຂອງທ່ານ ສະບັບວັນທີ10/2/67 ດ້ວຍຄວາມພາກພູມໃຈເພາະຫລັງຈາກໜັງສືພິມຊາຕລາວຣາຍເດືອນໄດ້ອອກໄປແລ້ວ ໄດ້ມີຜູ້ສົນໃຈມີປະມານ ຈົດໝາຍຂອງທ່ານ ສະແດງໄດ້ວ່າທ່ານມີຄວາມສົນໃຈຫລາຍກວ່າທຸກຄົນໃນບັນຫາ "ປະຊາຊົນຄວນສົນໃຈກັບກົດໝາຍ

"ທ່ານກໍຄົງເຂົ້າໃຈດີແລ້ວ ວ່າການປົກຄອງປະເທສຊາຕຈະຕ້ອງເອົາກົດໝາຍ-ເປັນຫລັກ ບໍ່ແມ່ນເອົາອາວຸດຊະນິດ ປັ້ງໆປັ້ງໆ "ມາປົກຄອງ" ທຸກຄົນຈະຢູ່ຮ່ວມນຳກັນໄດ້ກໍຕໍ່ເມື່ອ ທຸກຄົນຍອມນັບຖືສິດທິກັນ ເອົາກົດໝາຍແລະຣະບຽບການຕ່າງໆ ມາເປັນອຳນາດໜ້າທີ່ເພື່ອປົກຄອງກັນທັງນີ້ເພື່ອບໍ່ໃຫ້ມີນາ ພະເດັດການບໍ່ໃຫ້ມີອຳນາດເຖື່ອນແລະບໍ່ໃຫ້ມີ ການແບ່ງປັນອຳນາດປົກຄອງຕາມຄວາມຮັບຜິດຊອບຂອງໃຜມັນ ບໍ່ກ້າວກ່າຍກັນ

ເພາະການດຳເນີນວຽກການຂອງ ແຕ່ລະອຳນາດນັ້ນບໍ່ເໝືອນກັນຊຶ່ງທ່ານຄົງເຂົ້າໃຈດີແລ້ວວ່າ ອຳນາດບໍຣິຫານນັ້ນເຮັດຫຍັງ ? ອຳນາດນິຕິບັນຍັດນັ້ນເຮັດຫຍັງ ? ແລະອຳນາດຕຸລາການນັ້ນເຮັດຫຍັງ ? ໂດຍສະເພາະຢ່າງຍິ່ງໃນອຳນາດຕຸລາການ ຫລືອຳນາດສານຫລາຍຄົນຍັງບໍ່ເຂົ້າໃຈປານໃດ ອຳນາດຕຸລາການ—ຄືອຳນາດຮັກສາສິດທິຂອງປະຊາຊົນເພື່ອປາບພວກອະທັມ

ແຕ່ການດຳເນີນວຽກການ ແລະການຮັກສາກົດໝາຍນັ້ນ ຍ່ອມໄດ້ຮັບຄວາມລຳບາກຫລາຍປະການ ຖ້າຜູ້ໃດຫາກບໍ່ໄດ້ຮຽນວິຊາກົດໝາຍ ຢ່າງເລິກເຊິ່ງແລ້ວຍ່ອມມີໂອກາສເຂົ້າໃຈຜິດໄດ້ສເມີ ເພາະກົດໝາຍນັ້ນມີສະພາບ

( ອ່ານຕໍ່ໜ້າ 39 )

## ໝານ້ອຍທັມະດາ

● ຕໍ່ຈາກໜ້າ 22 ●

ມີຄວາມຮັກຫອມສັນຕິພາບແຕ່ພວກທ່ານໄດ້ມ້າງເພ ສັນຕິພາບ ຊຶ່ງການເຮັດດັ່ງກ່າວນັ້ນບໍ່ວ່າມີຈິດໃຈດຳຮ້າຍກ່ວາສັດເດັຽລະສານທຸກປະເພດຊ້ຳອີກ...."

"ບັກທ່ານແດກຂີ້ເຫລົ້າເມົາກໍເວົ້າແບບບໍ່ຈຽມປາກພໍເມັດ....ມຶງຈະຫລິ້ນລະຄອນໃຫ້ໃຜເບິ່ງ ?" ບັກດ່າງກ່າວຕຳໜິສຫາຍໝານຳກັນເອງ....

"ເອີ....ກູເມົາ....ແຕ່ຄວາມເມົາຂອງກູ ມັນຍັງມີໂອກາສເທີຍ....ຖ້າເມົາລັດທິການເມືອງ ແບບພວກແນວລາວມັນມັກສ້າງແຕ່ຄວາມອັບປີ ແລະເດືອດຮ້ອນເຖິງພວກເຮົາຜູ້ເປັນໝານີ້ອີກ"

"ເມົາກໍໄປນອນຕື່ອ້າຍ" ນາງໝາເຕືອນດ້ວຍຄວາມຮັກ "ທູນຫົວ....ຄ່ານີ້ອ້າຍຂໍອະນຸຍາດໄປສາຣະເວດົງປ່າລານແດ່ລາງເທື່ອຈະພົກະດູກໝູ....!"

"ນ້ອງບໍ່ຍອມດອກ ຄວາມເມົາອາດຈະເຫັນນາງໝາໂຕໃໝ່ດີກວ່ານ້ອງ"

"ອ້າຍບໍ່ເຈົ້າຊູ້ເຖິງປານນັ້ນ" ບັກດຳຫັນຕາຂຽວໄປໃສ່ຊູ້ຮັກແລ້ວກໍອ່ອຍໜ້າມາຫາສະຫາຍດ່າງ" ສ່ຽວດ່າງ...ໂຕຮູ້ດັກແຈບໃຈດີແລ້ວບໍ່ວ່າ ເສິກສົງຄາມໃນລາວເຮັດໃຫ້ພວກເຮົາເດືອດຮ້ອນ

"ກູບໍ່ຈັກ ມຶງຄິດວ່າກູອ່ານໜັງສືແລະຟັງວິທຍຸເປັນຊັ້ນຫວາ ?"

"ບັກໂງ່...ບໍ່ມີສມອງຄິດຈັກດີ" ບັກດຳຕິຕຽນສະຫາຍເກີ

ເອີກູຂໍໂງ່ແບບໝາດີກວ່າ ສລາດແບບຄົນທີ່ບໍ່ຄິດເຖິງຊາດບ້ານເມືອງຂອງຕົວເອງ ມະນຸສທີ່ເຫັນແກ່ຕົວກອບ

( ອ່ານຕໍ່ໜ້າ 44 )

# ເຂື່ອນນ້ຳງື່ມ

□ ໂດຍ □ ໂສພົນ ບຸພະສິຣິ

ຕ່າງໄປທາງເໜືອຂອງວຽງຈັນ ປະມານ 70 ກວ່າກິໂລ ໄປທາງໂພນໂຮງ ຈາກໂພນໂຮງ ປສູ່ທ່າລາດ ແລະຈາກນັ້ນອີກປະມານ 4 ກິໂລ ເຖິງ ຈະພົບອະນຸສາວະຣີນ້ຳງື່ມທີ່ອົງພະປະມຸກ ຊົງເປີດເປັນອະນຸສອນ ໃນການສ້າງເຂື່ອນນ້ຳງື່ມ ເມື່ອວັນທີ 5 ກຸມພາ ເຂື່ອນນ້ຳງື່ມຈະເປັນສິນ ບັດອັນລ້ຳຄ່າຂອງປະຊາຊົນລາວ ຊຶ່ງຄວາມ ກວັງອັນນັ້ນໃກ້ເຂົ້າມາເຕັມທີແລ້ວ ກໍຄືຈະໄດ້ ມົບບໍ່ເກີນ 4 ປີຂ້າງໜ້ານີ້

ປະຊາຊົນຄົນລາວຍັງພາກັນຈຳໄດ້....ວ່າ ໃນວັນທີ່ 5 ກຸມພາ ອົງພະປະມຸກ ໄດ້ສເດັດໄປເປີດອະນຸສາວະຣີ ເຂື່ອນນ້ຳງື່ມ....ເພື່ອເປັນອະນຸສອນໃນການຈະກໍ່ສ້າງເຂື່ອນ ນ້ຳງື່ມ ໃນໂອກາສຕໍ່ໄປ....ສັກຂີພຍານ ອັນໜ້າພູມໃຈອີກ ກໍຄື ທ່ານອູຢຸ່ນ....ເລຂາອີຄາເຟ່ ພ້ອມຄນະຜູ້ແທນຫລາຍ ປະເທສທີ່ມາຮ່ວມປະຊຸມພັທນາລຸ່ມນ້ຳຂອງ ສະເດັດນາຍົກ ຣັຖມົນຕຣີ ຄນະຣັຖມົນຕຣີ ນາຍທຫາຣຊັ້ນຜູ້ໃຫຍ່ ແລະຜູ້ ມີກຽຕອື່ນໆອີກເປັນຈຳນວນມາກ ໄດ້ ໄປຮ່ວມໃນພິທີນີ້ ປະຊາຊົນລາວ ໃນເຂດນັ້ນແລະເຂດອື່ນຫລາຍພັນຄົນໄດ້ ຮ່ວມສແດງຄວາມດີອົກດີໃຈ ຕໍ່ການຈະສ້າງເຂື່ອນນີ້ ມີໂອ ກາສໃດ້ເຂົ້າຊົມພຣະບາຣະມີຢ່າງອົບອຸ່ນດ້ວຍ

ອູຢຸ່ນ ໄດ້ກ່າວເຖິງຄວາມສຳຄັນຂອງເຂື່ອນນີ້ ຢ່າງ ຍືດຍາວ ມັນຈະເປັນພລັງສົ່ງໃຫ້ ເສຖກິຈການຢູ່ດີກິນດີ ຂອງປະຊາຊົນລາວດີຂຶ້ນ ໃນເມື່ອເຂື່ອນນີ້ໄດ້ສ້າງເສັດແລ້ວ

( ອ່ານຕໍ່ໜ້າ 40 )

## ວິຈາຣການເມືອງໃນຕ່າງປະເທສ

# ສັມພັນທະພາບ ຣັສເຊັຽ–ຈີນແດງ

ສອງສຫາຍໃຫຍ່ ຣັສເຊັຽ ຈີນແດງ ເຣີ່ມແຕກຄໍ ກັນມາເຖິງບານນີ້ແລ້ວ ໂດຽໃນຂັ້ນແຣກກໍ່ກ່າວຫາກັນ ວ່າ " ເປັນຄອມມຸຍນິສນອກຄອກ " ເປັນແບບຜະເດັດ ການ ຈີນແດງວ່າຣັສເຊັຽເປັນນາຍທຶນ ສົມຄົບກັບອະເມ ຣິກາຕົ້ມພວກຄອມມຸນິສດ້ວຽກັນ ຣັສເຊັຽກໍ່ວ່າຈີນແດງ ເປັນຄອມມນິສນອກຫລັກນອກເກນ ທຳໃຫ້ອິທທິພົນຂອງ ຄອມມຸຍນິສເສື່ອມລົງ ແລ່ນເຕັ້ນບໍ່ໃຫ້ຄອມມູນິສອື່ນໆຄົບ ກັບຈີນແດງ

ຕໍ່ມາກໍເຣີ່ມຮຸນແຮງຍິ່ງຂຶ້ນໃນສົງຄາມວຽດນາມຈີນ ແດງກ່າວຫາວ່າຣັສເຊັສ ບໍ່ໄດ້ຊ່ວຍວຽດນາມເໜືອຢ່າງ ແທ້ຈິງ ດີແຕ່ປາກສົ່ງອາວຸທເກົ່າໆລ້າສໄມມາໃຫ້ຄົບກັບອະ ເມຣິກາຕົ້ມວຽດນາມເໜືອ ທາງຣັສເຊັຽກໍວ່າ ຈີນແດງ ເປັນຕົວການສຳຄັນ ບໍ່ຍອມໃຫ້ຂົນອາວຸດຜ່ານໄປວຽດ ນາມເໜືອ ອາວຸທດີໆຈີນແດງລັກເອົາໄປໝົດ ທາງອາ ກາສກໍບໍ່ຍອມໃຫ້ຜ່ານ ທາງຣົຖໄຟກໍກອດກາຢ່າງເຄັ່ງຄັດ ຣັສເຊັຽຕ້ອງຂົນສົ່ງອາວຸທທາງເຮືອເປັນການລ້າຊ້າ

ຈາກນັ້ນຕໍ່ມາໃນຫວ່າງເດືອນທີ່ແລ້ວ ປັກກິ່ງຮຽກ ທູດ ແລະນັກສຶກສາໃນຕ່າງປະເທສກັບຄືນ ປັກກິ່ງເພື່ອຮັບ ຊາບນະໂຍບາຍການປະຕິວັດທາງວັທນະທັມ ນັກສຶກສາຈີນ ແດງໃນປັກກິ່ງ 60 ກວ່າຄົນສແດງເດຊໃນກຸງມອສໂຄ ໄປ ເຄົາຣົພ ຫລຸມສົພເລນິນຮ້ອງເພັງຄອມມູນິສສາກົນທ້າທາຍ ຕຳຣວຈຣັສເຊັຽບໍ່ຟັງການຫ້າມປາມໃດໆ ເກີດປະທະກັນ ຕ້ອງເຈັບໄປທັງສອງຝ່າຍຕາມທັມມຽມ ຈີນແດງຫາວ່າຣັສ ເຊັຽທຳຮ້າຍນັກສຶກສາຂອງຕົນ ມີການເດີນຂບວນໃນກຸງ

ສຫາຍໃຫຍ່ຂອງຄ້າຍຄອມມູນິສ ຊະຕາກຳລັງຈະຂາດອອກຈາກກັນ ມີການປະທ້ວງທາງການທູດ ເດີນຂບວນຂັບໄລ່ ການເຄື່ອນກຳລັງເຂົ້າປະຊິດຕາມພົມແດນ ເພື່ອຕຶງກຳລັງຕໍ່ກັນ..... ມີຂ່າວອີກວ່າ ກຳລັງບາງສ່ວນທາງພົມແດນດ້ານຕະວັນອອກສຽງເຫນືອປະທະກັນແລ້ວ ຍັງອີກຢ່າງດຽວຄື "ຕັດສັມພັນທາງການທູດ" ຊຶ່ງກຳລັງຈະເປັນໄປນາທີໃດຍັງຊາບບໍ່ໄດ້

ປັກກິ່ງຢ່າງມະໂຫຣານ ຂັບໄລ່ຣັສເຊັຽອອກນອກປະເທສ ທຳຮ້າຍຊາວຣັສເຊັຽແມ່ນແຕ່ຄົນໃນສຖານທູດ ທາງຣັສເຊັຽກໍຖືກຫາວ່າທຳຮ້າຍຄົນໃນສຖານທູດຈີນແດງ ປະຈຳມອສໂຄເຣື່ອງໄປກັນໃຫຍ່ໂຕ ຕ່າງຝ່າຍຕ່າງຂົນເຈົ້າຫນ້າທີ່ ໃນສະຖານທູດກັບປະເທສຂອງຕົນ ຂນະທີ່ຣັສເຊັຽຂົນທູດກັບປະເທສຈີນແດງໄດ້ຂັດຂວາງ ທຳຮ້າຍຄົນຂອງຣັສເຊັຽ ແມ້ແຕ່ບັນດາທູດຕ່າງປະເທສ ທີ່ເຂົ້າໄປຊ່ອຍເຫລືອ ກໍຖືກທຳຮ້າຍດ້ວຍ

ແຕ່ສິ່ງນຶ່ງທີ່ຮ້າຍແຮງທີ່ສຸດ ກໍຄືການ ເດີນຂະບວນຂອງພວກເຣດກາດຕໍ່ຫນ້າສຖານທູດຣັສເຊັຽ ໃນກຸງປັກກິ່ງເປັນຈຳນວນແສນ ຕິດຕໍ່ກັນສິບກວ່າວັນ ທຳໃຫ້ເຈົ້າຫນ້າທີ່ທຳງານບໍ່ໄດ້ ເປັນການຂັບໄລ່ກັນໂດຍກົງ ທາງຣັສເຊັຽໄດ້ຍື່ນປະທ້ວງຈີນແດງຜ່ານທູດຈີນແດງ ໃນມອສໂຄ ເມື່ອວັນທີ່ 4 ກຸມພາວ່າ ຣັສເຊັຽຈະອົດທົນຕໍ່ການກະທຳທີ່ປ່າເຖື່ອນຂອງຈີນແດງຕໍ່ໄປບໍ່ໄດ້ອີກແລ້ວ ຖ້າຫາກຈີນແດງບໍ່ຢຸດການກະທຳແບບນ້ຳ ໆ ຣັສເຊັຽ ຈະແກ້ແຄ້ນໃນທັນທີ ຊຶ່ງອາດຈະຫມາຍເຖິງການຕັດສັມພັນ ທາງການທູດຫລືການເຂົ້າຂັບໄລ່ທູດຈີນແດງອອກຈາກມອສໂຄກໍໄດ້

ໃນຂນະດຽວກັນ ທັງຈີນແດງແລະຣັສເຊັຽຕ່າງກໍຂົນທຫານຂອງຕົນເຂົ້າປະຊິດຊາຍແດນ ດ້ານຊິນກຽງ ມົງໂກເລັຽ ຊຶ່ງຈີນແດງຕ້ອງໃຊ້ກຳລັງພົນເຖິງ 50 ກອງພົນເຂົ້າປະຈຳທີ່ ຣັສເຊັຽກໍຖອນທຫານຈາກຢຸໂຣບເຂົ້າສະກັດກັ້ນ ກຳລັງຂອງຈີນແດງຕັ້ງຫລາຍຫມື່ນຄົນ ແລະຊາວວ່າຂນະນີ້ມີປະທະກັນແດ່ແລ້ວ ຣັສເຊັຽໄດ້ກຽມການຕັ້ງອາວຸທຕິດຫົວຣົບປະຣະມານູ ຍິງໄດ້ຂນາດ ກາງ ໄວ້ ອີກດ້ວຍ ຖ້າຫາກເກີດເຫດຈິງໃນດ້ານນີ້ກໍຄົງຈະນ່າດູ .

ເຮົາມາພິຈາຣະນາວ່າ ຖ້າຫາກຣັສເຊັຽຕັດສັມພັນກັບຈີນແດງ ຣັສເຊັຽກໍຈະໄດ້ປຽບແລະເສັຽປຽບເທົ່າໆກັນ ຣັສເຊັຽຈະໄດ້ຊ່ອຍພວກຕໍ່ຕ້ານເມົາເຊຕຸງຢ່າງເປີດເຜີຽໂດຍສະເພາະນາຍພົນ ວັງເອັນເມົາບໍ່ຕ້ອງທ່ອງເຖິງສັມພັນທະພາບຂອງຕົນເອງ ແລະການໂຄສນາແຊກແຊງໃຫ້ມີການຕໍ່ຕ້ານເມົາເຊຕຸງກໍຈະກະທຳໄດ້ສດວກບັ້ນ ຂນະນີ້ທາງຣັສເຊັຽເກືອບໃນທຸກເມືອງໄດ້ນິບຸຄຄົນສຳຄັນ ຂອງພັຄຄອມມູຍນິສອອກໄປປາໄສຕໍ່ປະຊາຊົນ ຕາມ ຫົວ ເມືອງທຳລາຽລັທທິຄອມມູນິສແບບເມົາເຊຕຸງວ່າເປັນຄອມມູ ນິສນອກຄອກ ການປະຕິວັດທາງວັທນະທັມໃນຈີນແດງເປັນ

( ອ່ານຕໍ່ຫນ້າ 38 )

*ເບື້ອງຫລັງຂ່າວ*

# 5 ເພັຊຄາດສັງຫາຣ ຄົນຍາມປູເສດ

*ໂດຍ ຄົນຂ່າວ*

ພຶຕຕິການອັນຫ້ຽມໂຫດທີ່ພວກໂຈຣໃຈຊາມ ໄດ້ກໍ່ ຂຶ້ນກັບຄົນຍາມປູເຊດໃນຕອນກາງເດິກຂອງຄືນວັນທີ 29 ຕໍ່ 30 ມົກຣາ ທີ່ຜ່ານມານີ້ ໄດ້ນຳຄວາມສະທ້ານຢ້ານກົວ ມາສູ່ ວົງສັງຄົມທົ່ວໄປເປັນອັນມາກ ເພາະການກະທຳຂອງພວກ ຈຣອຸບາດກຸ່ມນີ້ບໍ່ໄດ້ມີຄວາມປານີປາໄສ ຕໍ່ເພື່ອນມນຸສດ້ວຍ ກັນເລີຍນອກຈາກຖືອຸດົມຄະຕິຢ່າງດຽວ ຄື ສິ່ງໃດທີ່ພວກ ເຂົາຕ້ອງການພວກເຂົາຕ້ອງເອົາໃຫ້ໄດ້ ເຖິງແມ່ນຈະເອົາ ຊີວິຕເປັນເດີມພັນ ພວກເຂົາກໍ່ຍອມ ຊຶ່ງພວກໂຈຣກຸ່ມນີ້ ຖ້າທາງການມິກົດໝາຍຕິດຕາມເອົາຕົວມາລົງໂທສບໍ່ໄດ້ ປະ ຊາຊົນພົລະເມືອງທົ່ວໄປ ຈະຕ້ອງປະສົພຄວາມເດືອດຮ້ອນ ນັບມື້ນັບທະວີຄູນຂຶ້ນເລື່ອຍໆປະ

ຊາຊົນຜູ້ນິຍົມຄວາມບໍຣິສຸດທັງຫລາຍ ຈຶ່ງພ້ອມພາກັນເອົາໃຈ ຊ່ວຍຕໍາຣວຈຜູ້ປະຕິບັດງານຢູ່ຕລອດເວລາ ເພື່ອໃຫ້ໄດ້ ກຸ່ມໂຈຣໃຈໂຫດມາລົງໂທດຕາມຄວາມຜິດທີ່ພວກເຂົາໄດ້ ກໍ່ຂຶ້ນ ແລະກໍປາກົດວ່າການປະຕິບັດງານຂອງເຈົ້າໜ້າທີ່ ໃນຄັ້ງນີ້ ໄດ້ປະສົບຄວາມສຳເຣັຈລົງຢ່າງໜ້າພໍໃຈ ເຈົ້າ ໜ້າທີ່ຕຳຣວຈນະຄອນບານຈັນທະບຸຣີພາຍໃຕ້ການນຳຂອງ ທ່ານ ພຕຕ. ສຸພັນ ຣັຕນະສມັຍ ສາມາຖຈັບຕົວພວກ ຄາຕະກອນໃຈຊາມໄດ້ຈຳນວນ 5 ຄົນ ພ້ອມດ້ວຍຣົຖຈັກ ແລະເຄື່ອງຈັກພິມດີດ ທີ່ພວກໂຈຣກຸ່ມນີ້ລັກໄປຄືນມາໄດ້ ໝົດໃນເວລາຕໍ່ມາ

ດັ່ງທີ່ເປັນຂ່າວໃນໜ້າໜັງສືພິມຊາຕລາວ ລາຍວັນ ສບັບປະຈຳວັນທີ່ 31 ມົກຣາ 67 ມາແລ້ວກ່ຽວກັບກຸ່ມໂຈຣ ອຸບາດຍົກພວກເຂົ້າທຳການໂຈຣກັມຊັພສິ່ງຂອງມີຄ່າໃນຫ້ອງ ການ ໄອວີເອັສ ຢູ່ໃນບໍຣິເວນສຳນັກງານຍູເຊດຄຸ້ມນາໄຮ່ ດຽວຢ່າງອຸກອາດຄົນເຝົ້າຍາມປະສົບເຫດຈຶ່ງເຂົ້າຂັດຂວາງ ພວກໂຈຣອຸບາດຈຶ່ງພ້ອມພາກັນຈັບແຂນຂາໄວ້ແລ້ວ ໃຊ້ ມີດປາຍແຫລມແທງຄໍກ້າຂວາຊອດອອກກ້າຊ້າຍ ຈົນຂາດ ໃຈຕາຍຄາເຄື່ອງແບບຍາມປູເຊດ ແລ້ວພວກໂຈຣອຸບາດ ກຸ່ມນີ້ ຈຶ່ງພ້ອມພາກັນງັດຫ້ອງການໄອວີເອັສເຂົ້າໄປລັກ ເອົາຈັກພິມດີດ

ພາສາລາວ 1 ເຄື່ອງ ພາສາອັງກິສ 4 ເຄື່ອງ ເຄື່ອງ ບວກເລຂ 1 ອັນ ແລະຣົຖຍົນຄົກ 1 ຄັນ ຂອງອົງການ ຍູເສດໄປຢ່າງລອຍນວຍ ດັງປະຊາກສົພຂອງນາຍປະສິດ ສຸວັນນະທັມອາຍຸ 23 ປີ ນອນຕາກນ້ຳໝອກຈົນກອງ ເລືອດຢູ່ຕໍ່ໜ້າຫ້ອງການໄອວີເອັສ ຕາມລຳພັງຈົນເຖິງ ຕອນເຊົ້າຂອງວັນທີ 30 ມົກະຣາ ຈຶ່ງມີຄົນໄປພົບເຫັນ ເຣື່ອງຣາວອັນໜ້າເສົ້າສລົດໃຈ ດັ່ງກ່າວຈຶ່ງໄປເຖິງເຈົ້າ ໜ້າທີ່ກອງກຳກັບການນະຄອນບານຈັນທະບຸຣີ ພາຍໃຕ້ ການນຳຂອງທ່ານ ພຕຕ. ສຸພັນຣັຕນະສໄມ

ພາຍຫລັງຈາກໄດ້ໄປກວດສອບ ແລະພິສູຕພິກສົບ ຍັງສະຖານທີ່ເກີດເຫຕເປັນທີ່ຮຽບຮ້ອຍແລ້ວ ຜູ້ກຳກັບການ ນະຄອນບາລຈັນທະບຸຣີ ພ້ອມດ້ວຍ ຣຕອ. ບຸນທັນ ກຸລະ ວົງ ຮອງຜູ້ກຳກັບການຝ່າຍຄະດີ ຣຕຕ, ແຝງດວງ ບຸບຜາ ສາຣະວັຕສອບສວນ ແລະສືບສວນປະຈຳກອງຄະດີ ພ້ອມ ດ້ວຍເຈົ້າໜ້າທີ່ພາຍໃຕ້ບັງຄັບບັນຊາອີກຈຳນວນນຶ່ງ ຈຶ່ງ ລົງມືປະຕິບັຕງານຄົ້ນຄວ້າຄະດີອັນສັ່ນສະເທືອນຂວັນ ປະຊາ ຊົນນີ້ທັນທີ

ການຕິດຕາມລ່າຕົວກຸ່ມຄາຕະກອນດັ່ງກ່າວນີ້ ເຈົ້າ ໜ້າທີ່ຕ້ອງໃຊ້ເວລາໃນໃນການຕິດຕາມສືບຫາແຫລ່ງຊ່ອນ ຕົວຂອງພວກໂຈຣ ແລະ ບ່ອນຊຸກເຊື່ອງຂອງກາງຢູ່ເກືອບ

ອາທິດ ຈຶ່ງສາມາດສືບຮູ້ວ່າ ກຸ່ມຄາຕະກອນແມ່ນໃຜ ແລະ ຂອງກາງທີ່ພວກເຂົາລັກໄປນັ້ນ ໄດ້ນຳໄປຂາຍໃຫ້ໃຜ ແລ້ວແບ່ງສາຍກັນອອກຕິດຕາມລ່າຕົວພວກໂຈນ ພ້ອມດ້ວຍຂອງກາງທີ່ຫາຍໄປຄືນມາໄດ້ທັງໝົດ

ກ່ອນທີ່ເຈົ້າໜ້າທີ່ຈະໄດ້ຈັບກຸມຜູ້ກະທຳຜິດແລະ ຜູ້ຕ້ອງຫາຈຳນວນຫ້າຄົນນັ້ນເຈົ້າໜ້າທີ່ຕິດຕາມໄປພົບ ຣົຖຈີບຂອງອົງການຢູເສດທີ່ຄົນຮ້າຍລັກໄປຢູ່ຄຸ້ມໂພນໃຊທາງເຈົ້າໜ້າທີ່ຈຶ່ງທຳການສືບສວນຕໍ່ໄປຈົນພົບຜູ້ມີຄະດີຂອງກາງແລະເຄື່ອງບອກເລກຄົບຕາມຈຳນວນແລະຕົວ ຜູ້ຕ້ອງຫາອີກຈຳນວນ 5 ຄົນຄືນາຍເຕັມຄົນຍາມຢູເສດ ນາຍສແວງ ຄົນຍາມເກົ່ານາຍສແວງຫລວງອາມາດພະນັກງານ ສັງກັດໜ່ວຍຂັບປຸງໝູ່ບ້ານນາຍເຫລັກ ແລະນາຍຄຳຈອມຄົນຍາມຢູເສດ

ຈອມຄາຕະກອນທັງ 5 ຄົນນີ້ ເມື່ອຖືກມືກົດໝາຍລາກຕົວເຂົ້າ ສອບສວນພ້ອມດ້ວຍ ຫລັກຖານຢ່າງຄັກແນ່ພວກເຂົາເຫັນທ່າວ່າຈະແກ້ຕົວບໍ່ຫລຸດ ຈຶ່ງພ້ອມພາກັນຍອມຮັບສາຣະພາບວ່າພວກເຂົາ ໄດ້ຮ່ວມກັນກໍ່ກັນທຳເຂັນໃນຄັ້ງນີ້ແທ້ ພວກເຂົາຈຶ່ງຂໍຍອມຮັບກັນທີ່ຮ່ວມກັນກໍ່ຂັ້ນໃນຄັ້ງນີ້ທຸກປະການ

ຈອມໂຈຣໃຈໂຫດທັງ 5 ຄົນນີ້ ໄດ້ເຜີຍເບື້ອງຫລັງການລັງຫານໂຫດໃຫ້ເຈົ້າໜ້າທີ່ຊາບຕໍ່ໄປວ່າ ໃນຂະນະທີ່ເຂົາພາກັນໄປຫມາຍຈະງັດຫ້ອງການໄດ້ມີເອັລນັ້ນ ເຂົາໄດ້ເຫັນຄົນຍາມປິ່ນຢູ່ ພວກເຂົາຈຶ່ງໄປເຈຣະຈາຂໍຄວາມຮ່ວມມື ແຕ່ຄົນຍາມບໍ່ຍອມຕົກລົງນຳພວກເຂົາຈຶ່ງພ້ອມກັນຈັບມັດແລ້ວໃຊ້ມີດແທງຄໍເຂົາຈົນຕາຍຄາມືດັ່ງກ່າວ

ຈາກຄຳສາຣະພາບຂອງກຸ່ມຄາຕະກອນ ນີ້ເຈົ້າໜ້າທີ່ໄດ້ນຳຕົວພວກເຂົາໄປທຳແຜນປະທຸສະກັມຕາມຣະບຽບແລ້ວສົ່ງຟ້ອງສາລຕາມທັມນຽມເພື່ອໃຫ້ສາລພິພາກສາໂທສກັມ ທີ່ພວກເຂົາໄດ້ຮ່ວມກັນສ້າງຂຶ້ນຢ່າງທາຣຸນໂຫດຮ້າຍໃນມື້ນັ້ນແລະວິນາທີນັ້ນຕໍ່ໄປ □

# ຫຍ່ອນອາຣົມ

□

## ໂນໂຫ

● ມີຄູ່ສົມຣົດໃໝ່....ເມື່ອແຕ່ງງານກັນແລ້ວ ທຸກສິ່ງທຸກຢ່າງກໍເຮັດໝົດແລ້ວ ເລີຍບໍ່ມີແນວເຮັດ ເລີຍພາກັນຄຸຍກັນໝົດມື້ໝົດເວັນ ຈົນມື້ນຶ່ງຜົວຖາມເມັຽວ່າ

"ຄວາມໂນໂຫນີ້ ພາໃຫ້ຄົນເສັຽຄົນໄດ້ງ່າຍແມ່ນບໍ່ທີ່ຮັກ ?"

"ແມ່ນແລ້ວອ້າຍ...ນ້ອງກໍຊັງຄົນທີ່ຄຽດຫລືໂນໂຫງ່າຍຄືກັນ"

"ນ້ອງເຊື່ອບໍ່ ຜູ້ຍິງໂນໂຫນີ້ລົງໄປຢູ່ທາງລຸ່ມ.... ແຕ່ຜູ້ຊາຍໂນໂຫຊ້ຳພາດມາຢູ່ທາງເທິງ"

"ບ້າ.... ອ້າຍບ້າ.... ເວົ້າແນວບ້າໆ ເຂົາອາຍບໍ່ແມ່ນຫວາ"

"ອ້າວ ຢ່າຟ້າວ.... ຟັງກ່ອນ.... ຢ່າເຂົ້າໃຈຜິດ.... ຄືຈັ່ງຊີ້ອ້າຍວ່າ ເວລາຜູ້ຍິງໂນໂຫມັກຈະທຶບຕີນປັງໆ ສ່ວນຜູ້ຊາຍເວລາໂນໂຫ ມັກເກົາແຕ່ຫົວທັງໆທີ່ມັນບໍ່ໄດ້ຄັນ... ແມ່ນບໍ່ລະ ?"

● ເພື່ອນທີ່ດີທີ່ສຸດມີ 3 ຢ່າງຄື ເມັຽເກົ່າ ໝາແກ່ ແລະຊັບສົດ !

● ວິຊາການເມືອງຄື ການເວົ້າແລະເຮັດສິ່ງສົກກະປົກທີ່ສຸດໃຫ້ເປັນຕາຟັງແລະໜ້າເບິ່ງທີ່ສຸດ !

● ຖ້າທຸກຄົນມີຄວາມຜິດ ກໍເທົ່າກັບວ່າໝົດທຸກຄົນຖືກ !

▲ ທັສນະວິຈານ ▲

# ສັນຕິພາບເປັນກາງແມ່ນຍອດປາຖນາຂອງພວກເຮົາ

● ໂດຍ ● ກຸຫລາບຈອມດອຍ

ສັນຍາເຊີແນວປີ 1962 ຊຶ່ງມີເຖິງ 13 ປະເທສປົ້ງປີ້ນ ແລະຮັບຮອງໃຫ້ລາວມີສັນຕິພາບ ແລະຕັ້ງໝັ້ນ ໃນຄວາມເປັນກາງ ຕາມຫລັກການປູ່ຮ່ວມກັນຢ່າງສັນຕິ ມາໃນປັຈຈຸບັນນີ້ໄດ້ສີ່ປີກວ່າ ແລ້ວແຕ່ສັນຕິພາບ ເປັນກາງ ແລະຄວາມຖືກ ຕ້ອງ ປອງດອງຊາດເຮົານັ້ນ ມັນຍັງຢູ່ໃນເງົາມືດປູ່ຕລອດມາ ທັງໆທີ່ມັນເປັນຍອດປາຖນາ ທັງເປັນກົດໝາຍ ຊຶ່ງລາວເຮົາທຸກຄົນຈະຕ້ອງປະຕິບັດ ໃຫ້ມັນປາກົດເປັນຄວາມຈິງຂຶ້ນມາໃນວັນຂ້າງໜ້ານີ້ຢ່າງແນ່ນອນ

ສົງຄາມເມື່ອປີ 1960–1961 ກ່ອນນີ້ໃຜໆກໍ່ເວົ້າເປັນສຽງດຽວວ່າເປັນສົງຄາມທີ່ຮ້າຍແຮງທີ່ສຸດ ກວ່າທີ່ເຄີຍເປັນມາແລ້ວແລະທຸກຄົນກໍ່ຕ່າງປະນາມມັນວ່າ ໂຫດຮ້າຍສົກກະປົກໂສມົມທີ່ສຸດ ເພາະທຸກຄົນກໍ່ປາຖນາຢາກໃຫ້ປະເທສຊາຕມີຄວາມສງົບ ຢາກເຫັນຊາຕມີຄວາມປອງດອງແລະເປັນເອກກະພາບກັນ ດັ່ງນັ້ນຈຶ່ງໄຫວ້ວອນຮຽກຮ້ອງໃຫ້ຜູ້ນຳຂອງສາມກຳລັງໃນລາວຫັນໜ້າເຂົ້າມາ ພົບພໍ້ເຈຣະຈາ ຫາຫົນທາງແກ້ໄຂບັນຫາອັນຫຍຸ້ງຍາກແລະເປັນອັນຕຣາຍຍິ່ງນີ້ໃຫ້ ສິ້ນສຸດລົງໄວທີ່ສຸດເທົ່າທີ່ຈະໄວໄດ້ ແຕ່ບໍ່ສົມປາຖນາຄືຜູ້ນຳຂອງສາມກຳລັງໃນລາວ ໄດ້ຊອກຊ່ອງທາງພົບພໍ້ກັນ ໄດ້ຢູ່ທີ່ເມືອງຊູຣິກແລະໃນການຫາລືກັນຄັ້ງນີ້ ທັງສາມ ຝ່າຍ ສາມາຖຖະແລງການຮ່ວມສບັບນຶ່ງ ກຳນົດເຖິງແນວທາງ ແລະ ຫລັກການແກ້ໄຂບັນຫາລາວໄວ້ຢ່າງເປັນເອກະສັນ ໃນທ່າມກາງບັນຍາກາດອັນສນິດສນົມກົມກຽວກັນເປັນຢ່າງດີ

ຕໍ່ມາໃນການພົບພໍ້ເຈຣະຈາກັນຢູ່ທົ່ງໄຫຫີນເມື່ອວັນທີ 12–6–62 ກໍ່ສາມາຖຕົກລົງກັນໄດ້ເຖິງການ ຈັດຕັ້ງຣັຖບາລປະສົມສາມຝ່າຍຂຶ້ນຕາມເນື້ອໃນໃຈຄວາມຂອງຖແລງການຮ່ວມທີ່ເມືອງຊູຣິກຊຶ່ງນຳເອົາຄວາມເບີກບານມ່ວນຊື່ນຢ່າງສຸດອົກສຸດໃຈ ມາສູ່ປະຊາຊົນພົລເມືອງລາວເປັນຢ່າງຍິ່ງ ເພາະການຕົກລົງກັນຈັດຕັ້ງຣັຖບານປະສົມສາມຝ່າຍນີ້ມັນເປັນໄຊຊນະອັນໃຫຍ່ຫລວງຂອງຊາຕ ມັນເປັນການປຣາໄຊຢ່າງເຈັບແສບຂອງເຫລົ່າສັຕຣູ ຜູ້ມີສັນດານແຍ່ງແຍກລາວ ຢາກເອົາລາວເປັນຫົວເມືອງຂຶ້ນແບບໃໝ່ເອົາໄປຮັບໃຊ້ແຜນການກໍ່ສົງຄາມປ້ອງກັນຜົນປະໂຍຊ ແລະ ຂຍາຍລັດທິຂອງພວກເຂົາລົງໃສ່

ການຕົກລົງຈັດຕັ້ງຣັຖບາລປະສົມສາມຝ່າຍນັ້ນໃຜໆກໍ່ຮູ້ດີວ່າເປັນວິທີການອັນດີທີ່ສຸດ ຂອງນັກການເມືອງລາວທີ່ເຫັນແກ່ຊາຕແກ່ປະຊາຊົນເປັນໃຫຍ່ ເປັນການນຳເອົາສັນຕິພາບຄວາມເປັນກາງ ແລະຄວາມຖືກຕ້ອງປອງດອງມາໃຫ້ປະເທສຊາຕບ້ານເມືອງ ນອກຈາກນັ້ນມັນຍັງໄດ້ມີການກຳນົດແນວທາງ ແລະການດຳເນີນງານໃຫ້ເປັນເອກະພາບເພື່ອກ້າວໄປສູ່ຄວາມເປັນອັນນຶ່ງ ອັນດຽວກັນ ໃນສຸດທ້າຍແຕ່ກໍ່ເປັນໜ້າເສັຽດາຍເຫລືອ ເກີນທີ່ຣັຖບາລປະສົມຊົ່ວຄາວແຫ່ງຊາຕ ຊຶ່ງມີສະເດັດເຈົ້າສຸວັນນະພູມາເປັນນາຍົກນີ້ຫາກໍ່ດຳເນີນງານບໍ່ທັນໃດເດືອນ ບ້ານເມືອງກໍ່

# ດ້ງບົ່ງໃບສນາມ

( ຕໍ່ຈາກໜ້າ 33 )

ງາວ ສຽງໂຫຣະສັບຂອງທ່ານສົມຈິຕ ກໍໄດ້ສົ່ງອອກໄປ
ອງຂໍເອົາກຳລັງມາຊ່ວຍ ແຕ່ມັນບໍ່ສາມາຖທີ່ຈະສົ່ງເຖິງກັນ
ໄດ້

ທ່ານສົມຈິຕໝົດໜົນທາງທີ່ຈະຂໍຄວາມຊ່ວຍເຫລືອ
ກຳລັງມາປະກອບກັບທະຫານຂອງຕົນແລ້ວ ທ່ານຈຶ່ງໄດ້ຕັດ
ນໃຈພາເລົ່າທະຫານຂອງຕົນ ສູ້ພ້ອມທັງບົວຄຳແລະທະຫານ
ອງຄົນທີ່ໄດ້ລົງຢູ່ຂຸມາງຽວກັນນັ້ນ ນາງໄດ້ເອົາໃຈສູ້ຈົນ
ມກັບເປັນທະຫານດີຂອງຊາຕຜູ້ນຶ່ງອີກບາງຄັ້ງ ນາງກໍໄດ້
ອົາລູກກະສຸນລຳລຽງໃຫ້ທະຫານ ແລະບາງຄັ້ງນາງໄດ້ຈັບ
ນມາຍິງເອງເພື່ອຄວາມຄຽດແຄ້ນຂອງນາງ ຣອ. ສົມຈິດ
ພາທະຫານຂອງຕົນສູ້ໃຫ້ສົມກັບວ່າ ຕົນເປັນຜູ້ບັງຄັບ
ະຫານດີຜູ້ນຶ່ງ ທ່ານເອົາໃຈສູ້ຈົນອ່ອນແຮງເກືອບຈະບໍ່ສາ
ຖນຳເອົາໃຈຈູນະມາໄດ້ ເຫລືອພຽງແຕ່ເລົ່າທະຫານ
ານັ້ນເອງພາກັນສູ້ສ່ວນ ຣອ. ສົມຈິຕກໍໝົດແຮງຈົນອ່ອນ
ອລົງ ນາງເຫັນດັ່ງນັ້ນຈຶ່ງໄດ້ຊ້ອນໂຈນເອົາ ທ່ານສົມຈິຕ
ອນຕົງໄວ້ບ່ອນດີແລ້ວນາງ ກໍໄດ້ແກ້ເອົາເສື້ອຂອງນາຍ
ເວີໃຫ້ບີລົມກາຍໃຈສາວກ ທ່ານໄດ້ຖືກສລົບໃນຂຸມເວ
າ 20 ນາທີຊຶ່ງມີແຕ່ບົວຄຳຄົນດຽວ ທີ່ເປັນຜູ້ຮັກສາ ເມື່ອ
ນໄດ້ຮູ້ຕົວຂຶ້ນມາທ່ານພ້ອມບົວ ຄຳດຳເນີນການຕໍ່ສູ້ອີກຕໍ່
ງ ນ້ອຍບໍ່ນານສຽງປືນຂອງພວກສັຕຣູ ກໍເບົາບາງລົງທັ້ງ
ກະທານຂອງທ່ານກໍໄດ້ຍິງໄລ່ກວດລ້າງ ຈົນເຂົາບໍ່ສາ
າຖທີ່ຈະສູ້ໄດ້ເຫລືອພຽງແຕ່ຢາງເລືອດແລະຊາກສົບເທົ່າ
ນັ້ນທີ່ເຂົາໄດ້ວາງໄວ້ເປັນອະນຸສອນແກ່ລູກກະສຸນປືນ ທ້າຍ
ສຸດຜົນສຳເຣັດແຫ່ງຄວາມຕໍ່ສູ້ ກໍເກີດແກ່ເລົ່າທະຫານໆ
ຂອງຊາດ

ເປັນເວລານຶ່ງປີ ບົວຄຳແລະທ່ານສົມຈິດໄດ້ຮ່ວມ
ສຸຂຮ່ວມທຸກດ້ວຍກັນ ໂດຍເຫັນອົກເຫັນໃຈຢ່າງໃກ້ຊິດ
ຄວາມຮັກແພງທັງສອງນັບມື້ນັບທະວີຂຶ້ນໄປ ວັນນຶ່ງນາງ
ຄິດເຖິງບ້ານແລະຄອບຄົວຂອງນາງໆ ມີຄວາມໂສກເສົ້າ
ເຫລືອທີ່ສຸດ ຈົນບໍ່ສາມາຖ ຈະກັ້ນກົ້ນ ເອົາໄວ້ ໄດ້ ນາງ
ຈຶ່ງໄດ້ຕັດສິນໃຈ ເວົ້າກັບ ຣ.ອ ສົມຈິດວ່າ ຍາອ້າຍສົມຈິດ
ຊີວິດຂອງນ້ອງຊາຕນີ້ສັງມາທໍຣະມານແທ້ ນ້ອງທຸກໃຈນຳ
ຄອບຄົວແລະອາມາຄົດຂອງນ້ອງ ນ້ອງບໍ່ຮູ້ວ່າຈະຢູ່ກັນ
ຢ່າງໃດ ຕໍ່ໄປສເພາະຊີວິດນີ້

ໂທ໋ ບົວຄຳ ນ້ອງທີ່ຮັກຂອງອ້າຍ ນ້ອງບໍ່ຕ້ອງຄິດ
ໃຫ້ມັນເສົ້າໃຈເລີຍ ເຣື່ອງຊີວິດນັ້ນ ອ້າຍເອງບໍ່ສາມາດທີ່
ຈະປ່ອຍໃຫ້ນ້ອງຕົກໄປເປັນຂອງຄົນອື່ນໄດ້ດອກ ນັບແຕ່
ວັນແຣກອ້າຍໄດ້ພົບນ້ອງຢູ່ສນາມຣົບ ອ້າຍກໍມີຄວາມສົນ
ໃຈຢູ່ແລ້ວ ຕໍ່ມານ້ອງກໍຍັງໄດ້ສ້າງຄຸນງາມຄວາມດີໄວ້
ແກ່ອ້າຍ ສ່ານີ້ແລ້ວມັນພາໃຫ້ອ້າຍຫລົງລືມນ້ອງບໍ່ໄດ້ ສິ່ງ
ທີ່ດີ ຂໍໃຫ້ນ້ອງຈົ່ງຕັດສິນໃຈແຕ່ງງານຮ່ວມຊີວິດກັບອ້າຍ
ເສັຽ

ໂທ໋ ! ຍາອ້າຍ....ຍາອ້າຍສົມຈິດຂອງນ້ອງ ນ້ອງຂໍ
ຂອບໃຈນຳຍາອ້າຍຫລາຍໆ ທີ່ຍາອ້າຍມີຄວາມສົນໃຈກັບ
ນ້ອງເຖິງພຽງນີ້ ເພາະຄວາມຮັກແພງຂອງພວກເຮົາໃນຄັ້ງ
ກ່ອນມັນບໍ່ໄດ້ສແດງອອກມາເຖິງຄວາມຮັກແນ້ແຕ່ຄັ້ງດຽວ
ເລີຍ ເມື່ອເປັນເຊັ່ນນີ້ແລ້ວ ນັບວ່າບຸນແລະວາສນາຂອງ
ນ້ອງຫລາຍຈຶ່ງສາມາຖໄດ້ຮ່ວມເປັນຄູ່ຊີວິດກັບອ້າຍ ໂດຍ
ທີ່ນ້ອງບໍ່ຄິດມາກ່ອນ

ຜົນສຸດທ້າຍ ການແຕ່ງງານຂອງ ທ່ານ ຣ.ອ ສົມຈິດ
ກໍເກີດຂຶ້ນດ້ວຍຄວາມຮູ້ຣົບ ດັ່ງນຶ່ງໃນສງາມ ຄວາມພາກ
ພຽນພຍາຍາມຂອງທ່ານພາໃຫ້ໄດ້ລັບຜົລສຳເຣັດດ້ວຍການ
ຕໍ່ສູ້ ຈົບ

## ເຂື່ອນນ້ຳງື່ມ

□ ຕໍ່ຈາກຫນ້າ 16 □

ທຸກຄົນດີອົກດີໃຈຕໍ່ຜົລງານອັນເປັນສາທາຣະນະປະໂຍຊ ທີ່ຍິ່ງໃຫຍ່ອັນຈະມີມາໃນວັນຂ້າງຫນ້າ....

ຫ່າງໄປຈາກອະນຸສາວະຣີ ທາງເຫນືອຕາມລຳນ້ຳງື່ມອີກເພຽງເລັກນ້ອຍ ບໍຣິເວນນັ້ນທີ່ມີນ້ຳຕົກຈາກພູເຂົາທັງສອງຂ້າງມຸ່ງລົງສູ່ທາງແຄບທີ່ສຸດແລ້ວເປີດກວ້າງອອກ ອີກທາງຕອນໃຕ້ ຕອນທີ່ແຄບທີ່ສຸດແລະເປັນທີ່ສ້າງເຂື່ອນອັນສຳຄັນນີ້ ແຕ່ໃນທາງດ້ານເທັກນິກ ຊຶ່ງທາງບໍຣິສັທຍີ່ປຸ່ນໄດ້ສຳຣວດພົບຫລັງຈາກມີການປະຊຸມພັທນານ້ຳຂອງທີ່ວຽງຈັນ ( ວັນທີ 1 ກຸມພາ ) ແຈ້ງໃຫ້ຊາບວ່າ.... ທີ່ຈະສ້າງເຂື່ອນນ້ຳງື່ມທີ່ແທ້ຈິງນັ້ນຕ້ອງ ຢູ່ເຫນືອຂຶ້ນໄປຈາກບໍຣິເວນແຄບທີ່ສຸດອີກເລັກນ້ອຍເນື່ອງຈາກຕ້ອງອາໃສດິນທີ່ແຫນ້ນທີ່ສຸດຄືນຫີນປົນຢູ່ດ້ວຍ ເພື່ອໃຫ້ເອົາຄອນກຣິດ ຫລືເອົາຊີມັງປັກລົງດິນຢ່າງຫມັ້ນຄົງ ບໍ່ມີເວ ອຽງອັນຈະທຳ ໃຫ້ເຂື່ອນແຕກ ຫລືພັງໃນທີ່ສຸດ ( ຂໍ້ຄວາມນີ້ໄດ້ຈາກທ່ານປານຣາຊວົງ ຣອງຣະທິບໍດີແຜນພັງ ໃນການສັມພາສວັນທີ 21 ກຸມພາ )

ໃນເດືອນພຶສພາປີ 1966 ໄດ້ມີຫລາຍປະເທສທີ່ຈະຊ່ວຍເຫລືອອອກເງິນໃນການສ້າງເຂື່ອນ ນ້ຳງື່ມເຊັ່ນອອສເຕຣເລັຽການາດາເດນມາຣຄຍີ່ປຸ່ນ ຮອລແລນອະເມຣິກາຕົກລົງໃຫ້ 22 ລ້ານໂດລາໃນການສ້າງເຂື່ອນແລະໄຟຟ້າປະເທສຝຣັ່ງເສສໃຫ້ 6 ແສນໂດລ່າໄທຊ່ວຍ 1 ລ້ານໂດລ່າແຕ່ຄິດເປັນສຳຫລັບການຊີຊີມັງ

ໃນການສ້າງເຂື່ອນນີ້ທະນາຄານໂລກຈະເປັນຜູ້ຄວບຄຸມ ໂດຍມີບໍຣິສັດອາຄຣິສ ອິນເຕີເນຊັ່ນແນລ ລີມິເຕດແຫ່ງຄານາດາຄຸມຜົນງານການສຳຣວດຂອງ ບໍຣິສັທນິປປອນໂກເອະຂອງຍີ່ປຸ່ນ ຊຶ່ງບໍຣິສັທຍີ່ປຸ່ນບໍຣິສັທນີ້ຈະທຳຫນ້າທີ່ສຳຣວຈຕລອດຈົນການວາງຫີນຊາຍ ແລະຈັດທາງຮ່ອງນ້ຳໃຫ້ໄຫລໄປສູ່ທີ່ໃດໆ

ທາງບໍຣິສັທນີ້ໄດ້ສຳຣວດມາເປັນເວລາຫລາຍເດືອນແລ້ວທຳແຜນທີ່ຢ່າງລະອຽດເພື່ອໃຫ້ແນ່ນອນ ໃນການກໍ່ສ້າງອີກຕໍ່ໄປ ສຳຫລັບການກໍ່ສ້າງເຂື່ອນທີ່ແທ້ຈິງນັ້ນ ຈະໄດ້ທຳການປະມູລອີກຄັ້ງນຶ່ງ ໂດຍໃຫ້ສິທແກ່ປະເທສທີ່ຊ່ວຍເຫລືອໃນການສ້າງເຂື່ອນເປັນຜູ້ເຂົ້າປະມູນ ກະວ່າໃນປາຍປີນີ້ຫລືຢ່າງຊ້າໃນຕົ້ນປີຫນ້າກໍຈະລົງມືກໍ່ສ້າງໄດ້ ຕາມໂຄງການນັ້ນເຂື່ອນນີ້ຈະສ້າງເສັດໃນປີ 1971 ຄືອີກ 4 ປີຂ້າງຫນ້າ

ໃນຂນະທີ່ຈະທຳການສ້າງເຂື່ອນນີ້ ທາງປະເທສໄທ

● ອ່ານຕໍ່ຫນ້າ 70 ●

ຫ້າງຂາຍຢາວຽງຈັນໂອສົດ

**Vientiane Osoth**

ຍ້າຍໄປຕັ້ງຢູ່ຂ້າງຕລາດເຊົ້າ ແຖວຕຶກສາມຊັ້ນ ຈຳຫນ່າຍຢາຝຣັ່ງ ຢາໄທ ແລະຢາຕ່າງປະເທສທຸກຊະນິດ ພ້ອມທັງເຄື່ອງມືແພທຍ໌ ຢາຊູດຢູ່ໄຟຂອງຜູ້ຍິງ ຢາຊູດກຸມານສຳຫຣັບເດັກ ຢາຮັກສາໂຣຄສັດວ໌ທຸກຊນິດໃນຣາຄາຍ່ອມເຍົາ ຜູ້ທີ່ຈະຊື້ໄປຈຳຫນ່າຍ ທາງຮ້ານຍິນດີຕ້ອນຮັບຢ່າງເປັນກັນເອງ ● ຂໍຂອບຄຸນທຸກທ່ານທີ່ໄປອຸດຫນູນ ●

# ສິ່ງທີເປັນພັຍແລະທາງເສື່ອມ

□ ຕໍ່ຈາກຫນ້າ 16 □

ຄວາມຜິດຂອງຕົນ ຕ່າງກໍຫັນຫນ້າເຂົ້າຫາກັນ.

ນີ້ເພາະຊາວບ້ານເຂົາບໍ່ເຫລື້ອມໃສ ເຂົາບໍ່ເຮັດຂົມ ອົດເຂົ້າຈຶ່ງຮູ້ສຳນຶກຕົວ ຖ້າຍັງບໍ່ອົດກໍອາດຈະຜິດຖຽງກັນໄປອີກກໍເປັນໄດ້ ດັ່ງນັ້ນ ວິທີເຮັດໃຫ້ອົດນີ້ ດີທີ່ນຶ່ງ ເມື່ອອົດແລ້ວ ຍ່ອມບໍ່ມີແຮງຈະຣົບກັນ ຕ້ອງເລີກ ຫັນຫນ້າເຂົ້າມາປອງດອງກັນ .

ພຣະພິກຂຸສົງເຫລົ່ານັ້ນ ເມື່ອຮູ້ສຳນຶກຕົວວ່າ ເປັນຜູ້ຜິດ ບໍ່ເຄົາຣົບພຣະບໍຣົມະສາສດາ ພິກຂຸຜູ້ເປັນຫົວຫນ້າ ກໍພາກັນໄປເຝົ້າພຣະພຸທອົງ ທູນຮັບສາຣະພາບຜິດແລະຂໍຂະມາໂທດ ພຣະອົງຈຶ່ງປະຊຸມສົງ ສະແດງທັມ ຄືຂັນຕີໃຫ້ຟັງ ພິກຂຸເຫລົ່ານັ້ນ ເຂົ້າໃຈແລ້ວ ກໍເຂົ້າອຸໂປສົດຮ່ວມກັນ ການແຕກແຍກກັນຂອງພຣະສົງນັ້ນກໍເພາະເຫັນວ່າ ບໍ່ປະຕິບັດສິນໃຫ້ສມ່າສເມີກັນ ຖ້າພຣະທັງຫລາຍຫາກຍັງສັງວອນສິນສເມີກັນແລ້ວ ກໍບໍ່ມີເຫດທີ່ຈະຣັງກຽດກັນດ້ວຍອຸໂປສົດສັງຄະກັມ ເມື່ອເປັນດັ່ງນີ້ ພຣະທັງຫລາຍຈຶ່ງນັບຖືພຣະພຸທເຈົ້າອົງດຽວກັນ ມີພຣະປະຕິໂມກສະບັບດຽວກັນ ຖ້າປະພຶດຍ່ອນຍານລົງໄປແລ້ວ ພວກທີ່ຍັງປະຕິບັດເຄັ່ງຄັດຢູ່ ກໍຈະຕະຂິດຕະຂວາງໃຈ ບໍ່ຢາກຮ່ວມດ້ວຍການທີ່ຮູ້ຈັກຣັງກຽດຜູ້ທີ່ປະພຶຕຍ່ອນຍານ ເປັນການປະກັນບໍ່ໃຫ້ປະພຶດມັກງ່າຍ ຍ່ຳຍີພຣະວິໄນ ດັ່ງນັ້ນ ທ່ານຈຶ່ງໃຫ້ເຄົາຣົບປະຕິບັດຕາມພຣະວິໄນ ໃຫ້ຮູ້ຈັກຣັງກຽດອາບັຕເຖິງຈະເປັນໂທດນ້ອຍໆ ບໍ່ຄວນລະເມີດ ບໍ່ວ່າຕໍ່ຫນ້າຫລືລັບຫລັງ ເມື່ອພຣະທັງຫລາຍສຳຮວມໃນປາຕິໂມກ ເວັ້ນຂໍ້ທີ່ພຣະພຸທອົງຊົງຫ້າມ ເຮັດຕາມຂໍ້ທີ່ພຣະອົງຊົງອະນຸຍາດບໍຣິບູນທົ່ວກັນແລ້ວ ເຫດທີ່ຈະຣັງກຽດຕໍ່ກັນ ດ້ວຍການຮ່ວມອຸໂປສົດສັງຄະກັມກໍບໍ່ມີ ຍ່ອມຈະສາມັກຄີປອງດອງກັນ.

ການແຕກກັນຂອງພຣະສົງນັ້ນ ບໍ່ແມ່ນຈະມີເມື່ອພຣະອົງໄດ້ຊົງພຣະນິພພານແລ້ວ ໃນສໄມພຣະອົງຍັງຊົງມີພຣະຊົນຢູ່ກໍມີ ຄືເມື່ອຄາວພຣະພິກຂຸຊາວເມືອງໂກສັມພີຜິດກັນດ້ວຍເຣື່ອງນ້ຳຊຳຣະລ້າງນັ້ນເປັນຕົ້ນ

ພຣະເຮົາ ຖ້າເຄົາຣົບພຣະວິໄນຣະບຽບແບບແຜນທີ່ພຣະພຸທອົງຊົງວາງໄວ້ ສິ່ງທີ່ພຣະພຸທເຈົ້າຊົງບັນຍັດ ບໍ່ເພີກຖອນ ເພາະພຣະອົງມີອັທຍາໄສບໍຣິສຸດ ຊົງບັນຍັດສິກຂາບົດ ກໍຕໍ່ເມື່ອມີເຫດການເກີດຂຶ້ນ ເປັນທາງແຫ່ງຄວາມເສື່ອມ ເປັນຄວາມປະພຶດທີ່ເຮັດໃຫ້ບໍ່ເປັນຫນ້າເຄົາຣົບນັບຖື ຖ້າບໍ່ມີເຫດເກີດຂຶ້ນ ກໍບໍ່ຊົງບັນຍັດສິກຂາບົດເປັນອັນຂາດ ບໍ່ໄດ້ອອກກົດຫມາຍລ້ອມໄວ້ກ່ອນ ຖ້າເມື່ອມີຜູ້ເຮັດຜິດແລ້ວ ຈຶ່ງຊົງບັນຍັດປ້ອງກັນ ສະນັ້ນ ທາງທີ່ດີທີ່ສຸດ ທີ່ຈະຮູ້ໄດ້ວ່າ ນີ້ເປັນຄຳສອນຂອງພຣະພຸທເຈົ້າ ຈຶ່ງຕ້ອງເຄົາຣົບ ບໍ່ເລີກຖອນສິກຂາບົດທີ່ພຣະອົງຊົງບັນຍັດໄວ້ ແລະບໍ່ບັນຍັດຂຶ້ນໃຫມ່ ຕັ້ງໃຈສະມາທານສຶກສາປະຕິບັດຕາມທີ່ພຣະອົງຊົງບັນຍັດໄວ້ ເມື່ອປະພຶດກັນດັ່ງນີ້ແລ້ວ ກໍໄດ້ຊື່ວ່າປະຕິບັດຕາມທັມ ອັນເປັນເຫດບໍ່ເຮັດໃຫ້ສາສນາເສື່ອມ.

ສ່ວນວິທີການຈະເຮັດໃຫ້ສາສນາເສື່ອມ ກໍຄືວ່າເຖິງບໍ່ໄດ້ບອກເລີກສິກຂາບົດໃດສິກຂາບົດນຶ່ງກໍຕາມ ແຕ່ພຣະບໍ່ປະພຶດຕາມພຣະທັມວິໄນ ອັນນີ້ນັບວ່າເປັນເຫດສຳຄັນທີ່ສຸດ ທີ່ຈະເຮັດໃຫ້ສາສນາເສື່ອມ. ເມື່ອບໍ່ປະພຶດຕາມວິໄນແຕ່ຊອບປະພຶດຕາມໃຈໂຕເອງ ກໍໄດ້ຊື່ວ່າເປັນການຍ່ຳຍີພຣະວິໄນ ເປັນພຣະບໍ່ມີວິໄນ. ເມື່ອມີຜູ້ເຫລື້ອມໃສສັດທາເຂົ້າມາບວດຮຽນໃນພຣະສາສນາ ໄດ້ສຶກສາຮູ້ຈັກຫລັກພຣະວິໄນແລ້ວ ໄດ້ເຫັນພຣະບວດເກົ່າບໍ່ປະພຶດຕາມພຣະວິໄນຜູ້ທີ່ເຄີຍເຄົາຣົບ ພຣະທັມ ພຣະສົງ ກໍຈະຮູ້

ສຶກວ່າ ພຣະນີ້ບໍ່ດີເຮົາຫລົງເຂົ້າໃຈຜິດອົດສານາບວດ
ຮຽນນຳກັບເພີ່ນນຶກວ່າເພີ່ນຈະດີ ກັບມາເປັນມານລ້າງ
ຜານພຣະທັມມະວິໄນ ປະພຶດຕາມໃຈຕົນເອງທັງໝົດ
ເລີຍເສື່ອມຄວາມເຫລື້ອມໃສນັບຖື ບໍ່ບວດຢູ່ຕໍ່ໄປ ພາກັນ
ສຶກ ຖ້າພຣະເກົ່າພາກັນເຄົາຣົບປະຕິບັດ ຕາມພຣະທັມ
ມະວິໄນຢ່າງເຄັ່ງຄັດ ພຣະໃໝ່ເຂົ້າມາເຫັນກໍເຫລື້ອມໃສ
ແລະເຄົາຣົບນັບຖື ແລ້ວກໍປະພຶດຕາມ ຝ່າຍພວກທີ່ບໍ່
ເຄົາຣົບພຣະວິໄນ ບໍ່ເຄົາຣົບຄວາມເປັນພຣະຂອງໂຕເອງ
ປະພຶດຍ່ຳຍີ ຊຶ່ງມີຫລາຍເປັນຕົວຢ່າງບໍ່ດີປາກົດຢູ່ ຜູ້ມີ
ຈິຕໃຈປະພຶດບໍຣິສຸດຕາມພຣະວິໄນ ພໍມາສຶກສາທັມມະ
ວິໄນແລ້ວ ກໍຮູ້ເຫັນພຣະປະພຶດຍ່ອນຍານບໍ່ຕາມພຣະວິໄນ
ຍ່ອມຮັງກຽດດູຖູກດູໝິ່ນ ສ່ວນຜູ້ທີ່ມີນິດໄສຊົ່ວປະພຶດ
ມັກງ່າຍ ມາບວດເພື່ອຫາຄວາມສຸກ ບໍ່ຕ້ອງການຈະປະ
ຕິບັດ ເຫັນວ່າບວດສະບາຍດີ ບໍ່ຕ້ອງທຳມາຫາກິນ ມີວັດ
ມີກຸຕິງາມໆ ມີອາຫານກິນ ມີຄົນໃຫ້ຜ້ານຸ່ງຫົ່ມພ້ອມ ກໍ
ເຂົ້າມາບວດກັນຫລາຍໆຍ່ອມເປັນການທຳລາຍສັດທາ ເຂົ້າ
ມາລ້າງຜານສາສນາ ແລະເອົາປຽບຕໍ່ປະຊາຊົນ ເມື່ອປະ
ຊາຊົນເຂົາຮູ້ ເຂົາກໍ່ເລີກເຮັດບຸນ .

ຈຶ່ງປະມວນຄວາມວ່າ ພຣະທີ່ປະພຶດປະຕິບັດຕາມ
ພຣະທັມມະວິໄນ ໂດຍເຄັ່ງຄັດນັ້ນ ແລະເປັນສາສນາທາ
ຍາດ ຜູ້ຮັກສາໄວ້ຊຶ່ງພຣະສາສນາ ໃຫ້ຕົກທອດໄປອະນຸ
ຊົນຮຸ່ນຫລັງ ໄດ້ສຶກສາທັມ ໄດ້ປະຕິບັດທັມ ແລະໄດ້
ເຫັນຄຸນພຣະທັມປະຈັກແກ່ຕົນ ແລ້ວນັບຖືພຣະຣັຕນະໄຕຣ
ຢ່າງໝັ້ນຄົງ .

ສ່ວນຜູ້ປະພຶດຍ່ຳຍີພຣະວິໄນປະພຶດຕາມໃຈໂຕເອງ
ເຂົ້າມາບວດເປັນພຣະ ເມນເຫັນຊາວ ບ້ານເຂົາລ່ຳ ລວຍກໍ
ຢາກລ່ຳລວຍນຳເຂົາເຫັນວິທີຈະລວຍໄດ້ງ່າຍ ໆກໍຫຽວຫາຊີ້
ເລກຫວຍເບີຫລີທີ່ຽວບອກເລກບອກເບີຕາມບ້ານ ເຈົ້ານາຍ
ຫລີຕາມຕລາດເມື່ອເຂົາຖືກ ກໍມີຫວັງໄດ້ຮັບສ່ວນ ແບ່ງນ້ຳ
ເລັກໆນ້ອຍໆເພາະວ່າເລກເບີນັ້ນມີເງິນແລ້ວຊີ້ໄດ້ພຣະ ກໍຢາກ
ລ່ຳລວຍນຳເຂົາຄືກັນເລີຍລືມນຶກເຖິງເພດສາມະນະຂອງຕົນ
ໄດ້ນຶກວ່າການເຂົ້າມາບວດນີ້ເພື່ອ ເຮັດໃຫ້ແຈ້ງຊຶ່ງ ພຣະນິ
ພານອັນເປັນທີ່ຫລີກອອກຈາກທຸກທັງປວງໝາຍຈະເຮັດໃຫ້
ກິເລດໝົດໄປບໍ່ໄດ້ມາສະສົມກອງກິເລດແຕ່ເມື່ອ ມາບວດ
ແລ້ວຢາກລວຍຈຶ່ງບໍ່ຖືກກັບວັດຖຸປະສົງຂອງການບວດເພາະ
ວ່າພຣະບໍ່ຈຳເປັນຕ້ອງຫາຮັ່ງຫາມີເພາະບໍ່ແມ່ນຄອງ ເຮືອນ
ພຣະມີໜ້າທີ່ເຮັດຈິດໃຈໃຫ້ຫລຸດພົ້ນຈາກກິເລດ ອາຫານກ
ບໍ່ຕ້ອງຫາ ເຄື່ອງນຸ່ງ ຫົ່ມກໍບໍ່ສ້າງມີຄົນມາ ຖວາຍໃຫ້ທີ່ເຂົ
ຖວາຍກໍເພື່ອຄວາມສະດວກ ໃນການ ປະຕິບັດ ທັມມະວິໄ
ເຮັດໃຈໃຫ້ບໍຣິສຸດຫລຸດພົ້ນຈາກ ກິເລສາສະວະຈະ ໄດ້ເປັ
ເນື້ອນາບຸນຂອງໂລກແຕ່ຖ້າພຣະຄິດຈະຮັ່ງມີເໝືອນຄະຣຶ
ຫຽວບອກຫວຍຊີ້ຫວຍໂດຍບໍ່ຮູ້ຈັກອາຍກໍເຮັດໃຫ້ປະຊາຊົ
ຮູ້ຈັກພຣະດີ ເກີດຄວາມຮູ້ສຶກວ່າພຣະນີ້ບໍ່ເປັນໜ້າ ນັບ
ຖື.ເພາະສະນັ້ນພຣະຄວນຣະວັງຢ່າສະແດງຄວາມໂລບໃຫ້ປ
ຊາຊົນເຫັນຕ້ອງເວັ້ນໃນການສ່ຽງໂຊກດ້ວຍຫວຍເບີ ປະຊ
ຊົນກໍຈະບໍ່ເຫັນວ່າພຣະດີກວ່າເຂົາຮູ້ຈັກເຄົາຣົບ ຄວາມເປັ
ພຣະຂອງຕົນເຂົາຈຶ່ງຈະນັບຖື ແລະ ພຣະຕໍ່ພຣະກໍບໍ່ ຈະລ
ກຽດກັນບໍ່ແຕກແຍກກັນຈຶ່ງສົມຄວນທີ່ພຸດບໍຣິສັດທັງ ຄະ
ຫັດແລະບັນພະຊິດທົ່ວໄປຈະຕ້ອງສຳນຶກແລະຊ່ວຍກັນຣະວັ
ປ້ອງກັນກຳຈັດໃຫ້ໝົດໄປ

ນອກຈາກນີ້ ຍັງມີອີກ ພຣະເຖຣະຜູ້ໃຫຍ່ ເຈົ້າອ
ວາດ ເປັນອຸປັດຊາອາຈານ ຈະຕ້ອງເຮັດໜ້າທີ່ປົກຄອ
ໂດຍເຄັ່ງຄັດ ທ່ານເຈົ້າອາວາດກໍຕ້ອງໃຫ້ການສຶກສາແ

● ອ່ານຕໍ່ໜ້າ 51 ●

## ບຸກຄົນສຳຄັນ

□ ຕໍ່ຈາກໜ້າ 12 □

ຄານທີເປັນຄົນຢ່າງໄວຈຶ່ງຄົນຫັນດາຈະຕ້ອງແລ່ນນຳ ນອກຈາກນີ້ກໍຍັງເປັນຄົນເຮັດວຽກໜັກແລະບໍ່ຈົ່ມເລີຍເມື່ອ ກິນໜ້າກິນຕາເຮັດວຽກຫຍັງແລ້ວຕ້ອງເຮັດສິ່ງ ນັ້ນໃຫ້ສຳເຣັດ ຄຳເວົ້າຂອງຄານທີອາດກ່າວໄດ້ວ່າ ມີຜູ້ຈົດເອົາໄປລົງ ໜັງສືພິມເກືອບໝົດ ເວລາພັກຜ່ອນຂອງ ຄານທີກໍຄືເອົາ ຕົວເອງລົງແຊ່ໃນນ້ຳຮ້ອນປະມານເຄິ່ງ ຊົ່ວໂມງແລະຖືໂອ ກາດອ່ານໜັງສືໄປນຳດ້ວຍ ວຽກການທີ່ມຫາຕະມະຄານທີ ພັກທີ່ສຸດກໍຄືເດີນທາງສາຣະເວໄປຕາມບ້ານນອກຂອກຄາເນ ເພື່ອສົ່ງເສີມຊາວ ອິນເດັຽໃຫ້ຮູ້ຈັກຊ່ວຍຕົວເອງຕລອດເຖິງ ໃຫ້ປະຊາຊົນເຫລົ່ານັ້ນສົນໃຈຕໍ່ການສຶກສາ . ຄານທີເປັນບຸກ ຄົນທີ່ສາມາດຂົ່ມໃຈຕົວເອງໄດ້ຢ່າງປລາດ ເປັນຕົ້ນວ່າຢາກ ຫລັບເວລາໃດກໍຫລັບໃນຂນະທີ່ຫລັບນັ້ນຈະຕ້ອງຫລັບສນິດ ເຖິງແມ່ນວ່າ ຈະມີສຽງ ຣົບກວນປານໃດ ຄານທີກໍ ສາມາດນອນຫລັບໄດ້....

ຄວາມບໍ່ຖືຕົວຂອງຄານທີນີ້ເອງ ໄດ້ນຳຊີວິດຂອງ ຄານທີກ້າວໄປສູ່ຄວາມສຳເຣັດຢ່າງສູງສຸດ ຂນາດລ້າງໝ້ ຫຍ່ຽວຂອງຄົນທີ່ມາອາໃສຢູ່ນຳນອກຈາກນີ້ຍັງມີຄຸນສົມບັດ ອີກປະການນຶ່ງ ຂອງຄານທີຕລອດຊົ່ວຊີວິດຂອງຄານທີບໍ່ ຍອມເວົ້າຂີ້ຕົວະເລີຍ ໃນເມື່ອຄານທີບໍ່ຍອມເວົ້າຕົວະນີ້ເອງ ຈຶ່ງເຮັດໃຫ້ຄົນອື່ນໆບໍ່ກ້າເວົ້າຕົວະຄານທີ....

ເປັນດ້ວຍເຫດໃດຄານທີ ຈຶ່ງເປັນເທພເຈົ້າຂອງ ຊາວອິນເດັຽ ? ຄຳຕອບກໍມີຢູ່ວ່າ ນັບຕັ້ງແຕ່ອິນເດັຽໄດ້ ຕົກເປັນເມືອງຂຶ້ນຂອງອັງກິດ ຕັ້ງແຕ່ປີ 2386 ແລ້ວຣັຖ ບານອັງກິດ ແຕ່ງຕັ້ງອຸປຣາຊມາເບິ່ງແຍງປົກຄອງອິນເດັຽ ໃນຕາອີດ ອັງກິດຄວບຄຸມອຳນາດທາງການເມືອງໄວ້ຢ່າງ ເດັດຂາດ ເຖິງຢ່າງໃດກໍຕາມອັງກິດໄດ້ພຍາຍາມບຳຣຸງສົ່ງ ເສີມຄວາມຈເຣີນຂອງອິນເດັຽໃນດ້ານຕ່າງໆ ເປັນຕົ້ນວ່າ ດ້ານຄົມນາຄົມ ການສຶກສາ ວັທນະທັມ ປັບປຸງຄວາມເປັນ ຢູ່ຂອງຊາວພື້ນເມືອງໃຫ້ຈເຣີນສູງຂຶ້ນ ນຳອາຣະຍະທັມ ຊາວຕະເວັນຕົກເຂົ້າມາເຜີຍແຜ່ໃນອິນເດັຽ ແຕ່ການທີ່ອິນ ເດັຽຕ້ອງຕົກເປັນເມືອງຂຶ້ນຂອງຊາດອື່ນຢ່າງນີ້ ກໍເຮັດໃຫ້ ອິນເດັຽກຸ່ມທີ່ຮູ້ສຶກໃນຊາດຢ່າງຮຸນແຮງ ປາຖນາທີ່ຈະມີ ຄວາມເປັນອິສຣະ ໃຫ້ຫລຸດພົ້ນໄປຈາກໃຕ້ແອກຂອງຕ່າງ ຊາດ ການເຄື່ອນໄຫວນີ້ໄດ້ມີມາຕັ້ງແຕ່ຫລັງຈາກສົງຄາມ ໂລກຄັ້ງທີ່ 1 ຊຶ່ງໃນສົງຄາມໂລກຄັ້ງທີ່ 1 ນັ້ນ ອິນເດັຽ ໄດ້ຊ່ວຍເຫລືອອັງກິດເປັນຢ່າງດີ ດັ່ງນັ້ນໃນປີ ພ.ສ. 2562 ( ຄ.ສ. 1919 ) ອັງກິດຈຶ່ງປະກາດໃຫ້ອິນເດັຽໄດ້ມີສ່ວນ ໃນການປົກຄອງ ຈັດກິຈການລາງຢ່າງທີ່ອັງກິດໂອນໃຫ້ ແຕ່ອຸປຣາຊອັງກິດ ກໍຍັງຄົງຄຸມອຳນາດການປົກຄອງໄວ້ ຊາວອິນເດັຽບໍ່ພໍໃຈຈຶ່ງກໍການຈົນາສກັນຂຶ້ນ ອັງກິດຕ້ອງ ປາບປາມຢ່າງຮຸນແຮງ ແຕ່ອິນເດັຽກໍບໍ່ລົດລະຄວາມພຍາ ຍາມ ຄານທີ ຊຶ່ງເປັນຜູ້ນຳທີ່ສຳຄັນ ໄດ້ຊວນຊາວອິນເດັຽ ໃຫ້ຂັດຂືນຕໍ່ອັງກິດ ຈົນກວ່າອັງກິດຈະຄືນເອກຣາຊໃຫ້ ຫົວໜ້າຝ່າຍຄັດຄ້ານການປົກຄອງອັງກິດ ໃນອິນເດັຽຄື ຄານທີຜູ້ນີ້ເປັນທັງນັກກົດໝາຍ ນັກບຸນ ນັກປາຊ ແລະ ເປັນຫົວໜ້າຄນະຊາດນິຍົມອິນເດັຽ ຜູ້ຮຽກຮ້ອງສິດທິສເມີພາກ ສຳຫລັບຊົນທຸກຊັ້ນແລະທຸກສາສນາ ມະຕິປະຈຳຄນະຂອງ ເຂົາກໍຄື .... ອິນເດັຽປົກຄອງຕົນເອງ.

ການຕໍ່ສູ້ເພື່ອຮຽກຮ້ອງສິດທິປົກຄອງຂອງມຫາຕມະຄານ ທີນັ້ນກະທຳດ້ວຍວິທີສງົບໂດຍບໍ່ຍອມໃຫ້ຄວາມ ຮ່ວມມືກັບ ອັງກິດຄືບໍ່ຍອມຊື້ສິນຄ້າອັງກິດພຍາຍາມຜລິດຂອງໃຊ້ທີ່ຈຳ ເປັນເຮັດເສື້ອຜ້າຂຶ້ນເອງໂດຍໃຫ້ສມາຊິກແຫ່ງຄນະທຸກຄົນ ເຮັດຝ້າຍຢູ່ເຮືອນບັນດາຊາວອິນເດັຽທີ່ເຊື່ອຖືໃນມຫາຕມະ

ຄາມທີແລະບໍ່ຍອມຮ່ວມມືກັບອັງກິດນັ້ນລາງເທື່ອກໍຮຸນແຮງຈົນກາຍເປັນການຈະລາຈົນອັນເປັນ ຜົນໃຫ້ຝ່າຍຣັຖບານອັງກິດຈັບເອົາຫົວຫນ້າຄົນທາຕມະ ຄານທີໄປໃສ່ຄຸກຫລາຍເທື່ອຣະຫວ່າງຢູ່ໃນຄຸກຄນະຂອງຄານທີກໍຍັງຄົງຮຽກຮ້ອງສິດທີປົກຄອງຕົວເອງຢູ່ຕໍ່ໄປແລະຮຽກຮ້ອງ ໃຫ້ຝ່າຍຣັຖບານປ່ອຍຕົວຄານທີດ້ວຍຝ່າຍຄານທີກໍ ໃຊ້ວິທີອົດອາຫານຈົນກວ່າອັງກິດຈະຍອມຜ່ອນຜັນຕາມຮ້ອງຂໍ ຊາວຄນະຢ້ານວ່າຈະເຖິງແກ່ກັມກໍຍິ່ງກໍ່ກວນຄວາມຫຍຸ້ງຍາກໃຫ້ແກ່ຣັຖບານອັງກິດຍິ່ງຂຶ້ນຈົນ ຣັຖບານຕ້ອງ ປ່ອຍຕົວ ຄານທີແລ້ວຄານທີກໍດໍາເນີນການຕໍ່ຕ້ານ ແບບສັນຕິວິທີ ອີກຕໍ່ໄປ.....ໃນຣະຫວ່າງສົງຄາມໂລກຄັ້ງທີ2ອິນເດັຽບໍ່ຄ່ອຍໄດ້ຊ່ວຍເຫລືອອັງກິດເພາະມີເຫດການບໍ່ສງົບເກີດຂຶ້ນພາຍ ໃນນັ້ນສເມີດັງເມື່ອສັ້ງຽສຸດສົງຄາມແລ້ວອັງກິດຈໍາຕ້ອງປ່ອຍໃຫ້ອິນເດັຽເປັນອິສຣະໃນວັນທີ່15ສິງ ຫາພ,ສ,2496(1947)ປະເທດອິນເດັຽມີຖານະເປັນອານາຈັກໃນເຄືອຈັກພົບຄານທີຖືກຍິງເຖິງແກ່ຄວາມຕາຍເມື່ອວັນທີ່30ມົກະຣາພ,ສ.2491(1948)

ໃນປະວັດການຂອງອິນເດັຽເມື່ອ ຍົກພຣະພຸທເຈົ້າແລ້ວກໍບໍ່ມີໃຜສໍາຄັນເທົ່າທຽມມຫາຕມະຄານທີອໂສມກທາຣາຊກໍດີ ອັກບານທາໂມກຸລກໍດີຖ້າປຽບກັບ ຄານທີແລ້ວກໍຫ່າງໄກກັນ.....ອິດທິພົນຂອງທ່ານຜູ້ນີ້ ເຮັດໃຫ້ຊາວອິນເດັຽເຄົາຣົບຮັກຈົນຍາກທີ່ຈະພັລນາ ຄົນຫລາຍຫມື່ນອາດຈະນັ່ງລົງຈູບດິນຊຶ່ງມີຮອຍຕີນມຫາຕມະຄານທີຍ່າງຜ່ານໄປຮູບຂອງຄານທີຖືກນໍາໄປບູຊາຕາມເຮືອນຊານຂອງຊາວອິນເດັຽເປັນຈໍານວນລ້ານໆ ຄົນໄຂ້ພຍາຍາມເອົານໍ້າມືບາຍຮູບຄານທີເພື່ອໃຫ້ຕົນເຊົາໄຂ້ ....

ໃນການຕໍ່ສູ້ຂອງຄົນຈີງແບບທ່ານມຫາຕມະຄານທີນີ້

□ ອ່ານຕໍ່ຫນ້າ 63 □

# ເນັ້ງຄິບຫາບາງສີພົມ

ຕໍ່ຈາກຫນ້າ 10

ຫມາຍດີກັນ..ອອກຈານນັ້ນກໍ ກັບມາແລະລອງແວ່ ໄປເບິ່ງຕຶກສນາມບິນວ່າຈະສະອາດແຕ່ກໍຕາມເຄີຍເຫັນຂີ້ຝຸ່ນເຕັມມີທັງໃຍແມງມຸມອອັນຕຶກກໍມີແຕ່ຂີ້ເຍື່ອແລະຫຍ້າແຫ້ງສີຂອງຕຶກກໍເກົ່າຫມາງຄືຜູ້ເຖົ້ານີ້ ປ. ຈຸລມຸນຕີຜູ້ມີຄວາມຮັກຊາດຫລາຍກໍກ່າວຄໍາ ຜຸສວາດອອກມາຫລາຍຄໍາແລ້ວກໍພາກັນລ້ຽວອອກມາຕລຸຍຂີ້ຝຸ່ນອີກ ຕະເລີດມາຮອດໃນວຽງຈັນກາຍເຮືອນປ.ຕຣີຈັນທຣ໌ຄຸ້ມຫົວເມືອງຢ່າງຫວາດສຽວເປັນແຕ່ບຸນບໍ່ມີໃຜເຫັນ . ເຫັນເຮືອນ ປ ຈຸລມຸນຕຣີຢູ່ເລີກແລບແດ່ ຈຶ່ງມີຄວາມປອດໄພກ່ວາກັນ

ແລະແລ້ວໃນຄືນນັ້ນພວກເຂົາທັງສອງ ປ ແທບຈະຈື່ກັນບໍ່ໄດ້ເພາະໄປຢັ້ຽມຍາມເຮືອນ ເຈົ້ານາຍຫລາຍແລະຕອນສຸດທ້າຍກໍໄປແອ່ນຢູ່ລີໂດ້ຈົນເລີກ

"ສ່ຽວເຮືອນໂຕຢູ່ໃສ ? "ປ ຈຸລມຸນຕຣີຖາມ

"ເວົ້າບ້າໄປນອນສແຕກ ຢູ່ເປັນປີໆຍັງມາຖາມ"

ຕອບແບບລີ້ງເຄີຽກັນຊຶ່ງກັນໄດ້ພຽງສອງຄົນເທົ່ານັ້ນ

"ເອີແມ່ນລະນໍ່ ເຮົາເປັນຫ່ວງໂຕຢ້ານເມົາຫລາຍເມື່ອບໍ່ຮອດບ້ານ

"ເຮົາເມືອສົ່ງໂຕກ່ອນສ່ຽວ....ໂຕມັນຄົນນ້ອຍອ່ອນແອເກີນໄປ"

"ເຮົາເມືອໄດ້ສ່ຽວ..... ວ່າແຕ່ໂຕເທາະ ສອງປ ຕ່າງກໍເປັນຫ່ວງກັນພະຍາຍາມຈະເມືອສົ່ງກັນແຕ່ບໍ່ມີໃຜໄປ ຈັບເອົາຣົຖຈັກສອງຄັນນັ້ນໄດ້ເຂົ້າຢືນຄຸຍກັນຢູ່ຫລັງລີໂດ້ພຽງສອງຄົນເທົ່ານັ້ນ....ໂອະມີອີກຜູ້ນຶ່ງແຂກຍາມ ຣົຖຍົນຫລັງລີໂດອີກຜູ້ນຶ່ງທີ່ເບິ່ງເຂົາທັງສອງດ້ວຍຄວາມຕັ້ງໃຈ

ພົນສຸດທ້າຽເລີຽຕົກລົງກັບເມືອເອົາໃຜເອົາມັນ ສົ່ງເສັ້ຽກັນຮຽບຮ້ອຍແລ້ວ ປ.ຈຸລມຸນຕຣີກໍຍ່າງແບບເອົ້ ຫົວເຂົ້າ

ໄປຫາຣົຖຄູ່ທຸກຄູ່ຍາກ ຕິດຈັກຣົຖແລະເລັ້ງຢ່າງແຮງ
ສມັ້ນແລ້ວກໍອອກຣົຖໄປ ກ່ອນ....ຝ່າຍ ປ. ຕຣີຈັນທຣ໌ຍັງ
ພາສາຝຣັ່ງໄປຄຸຍກັບແຂກ ຍາມຢູ່ສອງສາມ ຄໍາຈຶ່ງໄປ
ເຣົຖແລ້ວຕິດຈັກແລ່ນອອກ ຈາກບ່ອນຈອດປານລູກທະ
ອກຈາກແປະລັງບຶດນຶ່ງປຕຣີຈັນກໍຕ້ອງຢຽບແຟງຈອດ
ແຮງເມື່ອເຫັນປຈຸລມຸນຕຣີຢືນເອືອຍກົກເສົາໄຟຟ້າ....
າກ.ອວາກຢູ່ເມື່ອເອົາ ຂອງໃນທ້ອງໃນໄສ້ອອກມາພົສົມ
ມແລ້ວກໍຕັ້ງຕົ້ນຂີ່ໄປກິນອິກ,ປ ຕຣີຈັນເອົາຣົຖໄປຈອດ
ເຮືອນແສມ ລໍາບາກແລ້ວກໍສາວ ໄມ້ຄັນໃດຂຶ້ນເຮືອນ
ງຄົນຫມົດແຮງ

"ຕາຍບໍ່ທັນນອນເທື່ອຫວາ 3 ໂມງເຊົ້າແລ້ວໃດນີ້
ຕຣີຈັນ ເວົ້າກັບເມັຽດ້ວຍສຽງອ້ແອ້ເພາະລິດເຫລົ້າ

ຂ້ອຍນອນບໍ່ຫລັບດອກ...ມັນເຈັບໃຈ" ເວົ້າແລ້ວ
ນາກໍໄຫລອອກມາຕາມທ່ານຽມ

"ເປັນຫຍັງຄ່ອຍວ່າເຈັບໃຈຣື?

"ໃຜໆກໍວ່າຂ້ອຍກັບເຈົ້າປະກັນ"

"ໃຜວ່າແນວຕາຍໆຈັ້ງຊັ້ນ"

"ມີຫລາຍຄົນເວົ້າຫມູ່ໂຮງການຂ້ອຍກະເວົ້າບາງຄົນ
ນວ່າເອົາຜົວໃຫມ່ແລ້ວຫວາ....ຣິຣິຣິ ຂ້ອຍເສັຽໃຈ
ກຫນາມ
ເຮັດໃຫ້ຂ້ອຍ"

"ຕາຍຮ່າ ໃຜມາປາກບອນແທ້"

"ມັນແມ່ນຄວາມຈິງຫັ້ນແຫລະ ຢ່າວ່າເຂົາປາກ
ເທາະ ເຈົ້າຕ້ອງໄປມີເມັຽນ້ອຍເຂົາຈຶ່ງເວົ້າ"

"ໃຫ້ຂ້ອຍຕາຍ"

"ບໍ່ເຊື່ອນັບແຕ່ມື້ຕໍ່ໄປຕ້ອງຢູ່ເຮືອນນໍາຂ້ອຍໄປໃສ
ງເອົາຂ້ອຍໄປນໍາ"

# ສິ່ງທີ່ເປັນພັຍແລະທາງເສື່ອມ

■ ຕໍ່ຈາກຫນ້າ 48 ■

ພຣະເນນໃນປົກຄອງ ໃຫ້ເປັນຜູ້ຮູ້ສລາດໃນທັມມະວິໃນ ເປັນຮາກຖານເສັຽກ່ອນ ບໍ່ປ່ອຍໃຫ້ເປັນໄປຕາມຍະຖາກັມ ຄວບຄຸມໃຫ້ປະຕິບັດພຣະທັມມະວິໃນ ໃຫ້ເປັນໄປໂດຍ ກວດຂັນ ເມື່ອຈະຮັບບວດຄົນ ກໍຕ້ອງຮູ້ຈັກເລືອກ ຫລື ພຣະສົມຈອນໄປມາ ກໍໃຫ້ຮູ້ຈັກຕ້ອນຮັບ ແຕ່ຜູ້ດີມີຫລັກ ຖານ ມີຄວາມປະພຶດດີ ບໍ່ແມ່ນເຫັນວ່າ ເປັນພຣະແລ້ວກໍ ຮັບເລື້ອຍ ຕ້ອງພິຈາຣະນາຮັບສະເພາະຜູ້ທີ່ມີສັດທາເຫລື້ອມ ໃສໃນພຣະພຸທສາສນາ ຕັ້ງໃຈບວດແລະປະຕິບັດພຣະທັມ ມະວິໃນແທ້ໆ.

ພວກທີ່ບວດເພື່ອອາໃສສາສນາ ເປັນທາງອາຊີບ ນັ້ນ ເມື່ອບວດແລ້ວກໍທໍ່ຮູວທໍາລາຍສະຖາບັນພຣະ ດ້ວຍ

"ເວນກັນແມ່ນໃຜມາຫາເຣື່ອງ ໃຫ້ຜົວເມັຽເຂົາຜິດ ກັນແບບນີ້"

"ມັນຕ້ອງມີແນວທີ່ເຈົ້າເຮັດໃຫ້ເຂົາສົງໃສຫັ້ນແຫລະ ເຂົາຈຶ່ງເວົ້າ" "ເອົາລະນັບແຕ່ມື້ຕໍ່ໄປຂ້ອຍຂໍຫ້າມເຈົ້າຢ່າ ໄດ້ໄປຄົບຄ້າ ສມາຄົມກັບຍິງທີ່ປາກບໍ່ຢູ່ສຸກກິນເຂົາໂຕໂສ ຄວາມເພີ່ມນັ້ນນະ.... ພວກເຮົາຢູ່ນໍາກັນມີຄວາມສຸກດີໆ ເຂົາກໍຫາເຣື່ອງໃຫ້ໄດ້ຜິດກັນ ແມ່ນໄປນັ່ງຢອງບ່ອນໃສ່ ຫມອກໃຜຫວາ" ປ. ເວົ້າດ້ວຍຄວາມຄຽດແຄ້ນ

ຫລັງຈາກນັ້ນມາປ. ຕຣີຈັນທຣ໌ກໍເຫມືອນຜ້າພັບໄວ້ ເພາະເຂົາເມົາຫນັກຈຶ່ງຫລັບໄປ

ຕົ້ນເຊົ້າໄປເຮັດການພົບຫນັງສືລາປ່ວຍຂອງ ປ.ຈຸນ ລະມຸນຕຣີ ວ່າຂີ່ຣົຖລົ້ມຫົວຫູຖລອກປອກເປິກຫມົດ ແຕ່ມີ ສຽງຫວິດແຫວວມາວ່າ ຜິດກັບແມ່ເຮືອນຈັກວ່າອັນໃດຈະ ເປັນຄວາມຈິງກັນແທ້ !

ປະພຶດນອກຈາກຂີດຂອງພຣະຂອງເນນ ຊື້ສລາກກິນແບ່ງ ທ່ຽວໃນທີ່ອະໂຄຈອນ ຄືສະຖານທີ່ພຣະບໍ່ຄວນໄປ ເຊັ່ນ ບ່ອນແຂ່ງຂັນກິລາ ເຂົ້າໄປບຽດສີແຊກແຊງໃນຫມູ່ປະຊາຊົນ ໃນງານນັກຂັຕເລີກຕ່າງໆ ທ່ຽວແຊກແຊງໃນຕລາດນັດ ກໍ່ຄວາມລຳຄານແກ່ປະຊາຊົນ ເປັນທີ່ດູຫມິ່ນຂອງຄົນຕ່າງຊາດຕ່າງສາສນາ ຄ້າຂອງລັກພາສີ ບອກເບີ ຊື້ເບີເລກທ້າຍ ບອດເພື່ອຫາເງິນ ເພື່ອຮັ່ງມີ ເຂົ້າອອກຕາມກະຊວງທະບວງກົມຕ່າງໆ ເພື່ອຂໍຫນ້າທີ່ທຳການ

ເລື່ອງເຫລົ່ານີ້ ສະແດງໃຫ້ເຫັນວ່າ ຄົນປອມຕົວເປັນພຣະຫາກິນມີຫລາຍຂຶ້ນແລະສະຖາປະນາຕົນ ເອງ ເປັນພຣະມະຫາບາຣຽນປະໂຍກສູງໆ ບາງອົງກໍ່ສະແດງອະພິນິຫານ ບອກຄາຖາອາຄົມ ທາພຣະພຸທຮູປຕາມທາດ ເກົ່າທັກເພ ມາແຈກຢາຍຫລືຈຳຫນ່າຍເອົາ ເງິນ ຄຳ ຈາກ ຊາວບ້ານ ຕຳຣວຈ ທຫາຣ ລ້ວນແຕ່ເປັນໄພຕໍ່ພຣະສາສນາຢ່າງຍິ່ງ ເພາະເຮັດໃຫ້ປະຊາຊົນຜູ່ເຫລື່ອມໃສ ສັດ ທາ ຢູ່ ແລ້ວເສື່ອມຄວາມເຫລື່ອມໃສສັດທາລົງໄປ ເບື່ອຫນ່າຍພຣະບໍ່ຢາກພົບບໍ່ຢາກເຂົ້າໃກ້ປະຊາຊົນທີ່ໄດ້ເຫລື່ອມໃສ ໄປ ແ
ກໍ່ບໍ່ມີໃຈຈະເຫລື່ອມໃສອີກ ທັມມະດາຄົນລວງໂລກຍ່
ເປັນທີ່ລັງກຽຕຂອງສັງຄົມພຽງໃດ ຜູ່ທີ່ຢູ່ໃນເຄື່
ແບບຂອງພຣະໄປທ່ຽວລວງໂລກ ຍິ່ງເພີ່ມຄວາມລັງກ
ຂອງສັງຄົມຕື່ມຂຶ້ນອີກ ສະນັ້ນຂໍທ່ານຜູ່ເປັນພຣະດ້ວຍ
ມີສ່ວນໄດ້ເສັຽຮ່ວມກັນ ຈົ່ງຄວນຊ່ວຍກັນສອດສ່ອງປ
ກັນດ້ວຍ ເຖິງພວກຄະຣິຫັດທີ່ນັບຖືພຣະ ແລະນັບຖືພ
ພຸທສາສນາກໍ່ຄວນຊ່ວຍກັນສອດສ່ອງປ້ອງກັນດ້ວຍ
ເຊື່ອຄົນທີ່ຢູ່ໃນເຄື່ອງແບບພຣະງ່າຍຫລາຍ ເມື່ອເຫັນ
ນຸ່ງເຫລືອງຫົ່ມເຫລືອງ ກໍ່ຢ່າສຳຄັນວ່າເປັນພຣະສເມ
ຄວນທີ່ຈະພິຈາຣະນາໂດຍຮອບຄອບ ວ່າເປັນພຣະຈິງ
ພຣະປອມ ພຣະຈິງຍ່ອມຈະສັງວອນໃນຕົນ ເຄົາຣົພຄ
ເປັນພຣະຂອງຕົນ ບໍ່ລວງໂລກບໍ່ເອົ້າຕົວະ ບໍ່ມັກໄ
ປະຈົບຄະຣິຫັດ ບໍ່ເຫັນແກ່ກິນ ບໍ່ເຫັນແກ່ຊົມ

ຄວາມຈິງພຣະດີກໍ່ມີຫລາຍ ພຣະບໍ່ດີຫລືພຣະບ
ກໍ່ມີຫນ້ອຍ ແຕ່ວ່າ ພຣະບໍ່ດີຫລືພຣະປອມນັ້ນແລ້ວ ທີ່


# ສີເມືອງໂອສົຖ

**Simuong Osoth**

ຮ້ານຂາຍຢາຝຣັ່ງ ເຈົ້າສີສງວນ ວົງກົດ ເລຂທີ 298 ຖນົນສາມແສນໄທ ວຽງຈັນທ໌

No. 298 Rue Samsenthai ( Quartierde Simuong ) V.T.

ຈຳຫນ່າຍຢາຕ່າງປະເທສທຸກຊະນິດ ໃນຣາຄາຍ່ອມເຍົາວ໌

ດີຕ້ອງພອຍຖືກລ້າງກຽດໄປນຳ ເພາະສະນັ້ນ ພຣະດີ
ຈາຍ ຄວນຊ່ອຍກັນຣະມັດຣະວັງປ້ອງກັນຢ່າໃຫ້ມີ
ບໍ່ດີຢູ່ໃນວັດ ໃນໝູ່ຄນະຂອງຕົນ ຖ້າຫາກຜູ້ໃດໄປ
ບດ້ວຍພຣະບໍ່ດີພຣະປອມ ຜູ້ນັ້ນແລ້ວເປັນໄພຕໍ່ພຣະ
າສນາ ເພາະເຫັນແກ່ຄົນຫລາຍກວ່າທັມມະວິໃນ ຈຶ່ງ
ນ້າທີ່ຂອງອຸບາສົກອຸບາສິກາ ຈະຕ້ອງຊ່ອຍກັນກຳ
ໂດຍບໍ່ສນັບສນຸນບຳຣຸງດ້ວຍປັດໃຈສີ່ ຄືບໍ່ໃຫ້ກິນໃຫ້
ກ່ພຣະເຫລົ່ານັ້ນ ເປັນການຊ່ອຍຮັກສາພຣະສາສນາ
ຣະດີໄວ້

ອີກເຣື່ອງນຶ່ງ ຄືການບອກບຸນເລັ້ຽໄລຂອງພຣະ
ກັຈະອອກພັນສາ ຈະເຖິງເທສການທອດກະຖິນ
ທີ່ຫາຣາຍໄດ້ທາງເລັ້ຽໄລ ກໍພົມແຈ້ງຄວາມເປັນການ
ຊັກຊວນເຮັດບຸນ ເອົາຣົຖບັນທຸກເຄື່ອງຂະຍາຍສຽງ
ໄປຕາມທີ່ຊຸມນຸມຊົນ ຕາມຕລາດ ຕາມສະຖານທີ່ຣາຊ
ບອກບຸນເລັ້ຽໄລ ສ້າງກຸຕິວັດນັ້ນ ສິມວັດນີ້ ຫລື
ະຖິນວັດນັ້ນວັດນີ້ ພຣະບາງອົງ ເຖິງກັບແບມືຮັບ
ນດ້ວຍຕົນເອງ ຖ້າບໍ່ໄດ້ເງິນ ໄດ້ນ້ຳຫວານກາເຟ ກໍ
ການໂຄສນາດັ່ງນີ້ ຜູ້ໂຄສະນາກໍເປັນພຣະສ່ວນຫລາຍ
້ານຜູ້ເຫລື້ອມໃສໃນພຣະພຸທສາສນາ ເຫັນພຣະປະຕິ
ນັ້ນ ກໍເດືອດຮ້ອນອາຍຊາວຕ່າງປະເທສ ຕ່າງສາສ-
ເຂົາບໍ່ນັບຖືພຣະ ເປັນທ່ອງພຣະທີ່ດີຈະພອຍຖືກດູ
ປດ້ວຍ ການບໍຣິຈາກຊັບອຸດໜູນພຣະພວກເລັ້ຽໄລ
ທ່ຳກັບສນັບສນຸນພວກໂຈຣປຸ້ນສາສນາຖ້າຍັງມີຜູ້ໃຫ້
ໃດ ພວກໂຈນເຫລົ່ານີ້ ກໍບໍ່ຫຍຸດປຸ້ນ ເພາະສະນັ້ນ
ຈຶ່ງພິຈາຣະນາເລືອກໃຫ້ແຕ່ວັດ ຫລືພຣະທີ່ຕົນຮູ້ຈັກ
ກິນຈະທານ ກໍໃຫ້ສອບຖາມຫາຫລັກຖານ ຫລືໃບອະ
ເສັຽກ່ອນ.

ອີກປະການນຶ່ງ ເມື່ອມີໜັງສາຍຫລືກຳນຳເຣື່ອງ ເປີດຂຶ້ນໂດຍບໍ່ເສັຽຄ່າບ່ອນໃດ ມັກມີພຣະເນນພາກັນໄປຍາດແຍ້ງບ່ຽດສີກັບປະຊາຊົນ ຂໍ້ນີ້ ສະແດງໃຫ້ເຫັນວ່າ ຄວາມຍ່ອນຍານຂອງເຈົ້າອາວາດຕ່າງໆ ທີ່ປ່ອຍໃຫ້ພຣະເນນອອກນອກວັດ ໂດຍບໍ່ຕ້ອງລາ ຈຶ່ງຜິດຕໍ່ຣະບຽບການປົກຄອງຊຶ່ງພຣະສາສດາໄດ້ວາງໄວ້ ຄວາມເສື່ອມຈຶ່ງເກີດຂຶ້ນ ເມື່ອພຣະບວດເກົ່າເຮັດ ພຣະບວດໃໝ່ກໍ່ເຮັດ ພາໃຫ້ເສັຽໄປຕາມໆກັນ ຂໍ້ນີ້ ກໍເປັນໄພແກ່ສາສນາອີກປະການນຶ່ງ ຊຶ່ງທ່ານເຈົ້າອາວາດທັງຫລາຍ ບໍ່ຄວນເຫັນວ່າເປັນເຣື່ອງເລັກໆນ້ອຍໆ

ນອກຈາກນີ້ ຍັງມີອີກ ຍັງມີອີກ ຄືພຣະຍອມຕົວເປັນເຄື່ອງມືຂອງນັກການເມືອງ ແລະລັດທິອັນເປັນໄພຕໍ່ສາສນາ ຊ່ອຍໂຄສະນາເຜີຽແຜ່ໃຫ້ເຂົາ ເຫັນແກ່ຄວາມຍົກຍ້ອງໃຫ້ກຽດຂອງຕົນ ບໍ່ຄຳນຶງເຖິງຈິດໃຈຂອງພຸທສາສນິກຊົນທີ່ນັບຖືຕົນ ວ່າເຂົາຈະມີຄວາມໂທມະນັດນ້ອຍໃຈ ໃນເມື່ອພຣະພິກຂຸທີ່ເຂົານັບຖື ຍອມເປັນເຄື່ອງມືໂຄສະນາໃຫ້ລັດທິອື່ນ ຊຶ່ງຕັ້ງຕົວເປັນສັຕຣູຕໍ່ພຣະສາສນາ ພຣະຄວນສັງວອນໃຫ້ຫລາຍທີ່ສຸດ

ເມື່ອຮວມແລ້ວ ສິ່ງທີ່ເປັນໄພຕໍ່ສາສນາ ທີ່ກ່າວມານີ້ຄື .

1. ຄວາມແຕກກັນຂອງພຣະສົງ ເພາະບໍ່ມີສີນຄືປະພຶດພຣະທັມມະວິໃນບໍ່ສມ່ຳສເມີກັນ ເປັນເຫດໃຫ້ລັງກຽດຊຶ່ງກັນແລະກັນ .

2/ ພິກຂຸສາມເນນ ປະພຶດນອກທັມນອກວິໃນ ບວດແລ້ວບໍ່ຮຽນທັມວິໃນ .

3/ ພິກຂຸສາມເນນສແວງຫາລາບຜິດວິໃສຂອງເພດສະມະນະ ເຊັ່ນຊູ້ຫວຍເລກທ້າຍ ບອກຫວຍເລກທ້າຍແກ່ປະຊາຊົນ .

4/ ເຈົ້າອາວາດຜູ່ປົກຄອງວັດ ບໍ່ສັ່ງສອນອົບຮົມ ບໍ່ໃຫ້ການສຶກສາແກ່ພິກຂຸສາມເນນ ແລະສິດວັດບໍ່ດູແລ ຄວາມປະພຶດໃຫ້ດີ ບໍ່ຕັກເຕືອນວ່າກ່າວໃຫ້ສຳນຶກຜິດຊອບ ຊົ່ວດີ ປ່ອຍໃຫ້ທ່ຽວໄປໃນທີ່ໂຄຈອນ ໄປທາງໃດໄດ້ຕາມ ໃຈມັກ ບໍ່ຕ້ອງລາ

5/ ພຣະບໍ່ຮູ້ຈັກປະມານໃນການຂໍ ທ່ຽວເລັ້ຽໄລ ຣົບກວນປະຊາຊົນ ໂດຍບໍ່ມີຂອບເຂດ

6/ ພຣະພິກຂຸສາມເນນ ລະຖິ້ມກິຈວັດ ບໍ່ທັນວັດ ໄຫວ້ພຣະສວດມົນ ທ່ຽວຮຽນວິຊາອາຊີບຢ່າງຄະຣຶຫັດ ບໍ່ ສົນໃຈໃນທັມມະວິໃນ ທ່ຽວເບິ່ງໜັງ ລຳເຣື່ອງ ໝໍລຳ.... ອັນເປັນຂ້າເສິກແກ່ພົມມະຈັນ

7/ ພຍາຍາມເປັນເຄື່ອງມືຂອງນັກການເມືອງ ລັດທິທີ່ເປັນສັຕຣູຕໍ່ສາສນາ ໂຄສະນາໃຫ້ໂດຍເຫັນແ ຍົກຍ້ອງ ແລະປໂຍດສ່ວນຕົວ

ສະນັ້ນ ສິ່ງທີ່ກ່າວມານີ້ ຫວັງວ່າພຣະກໍດີ ສາມ ກໍດີ ຕລອດເຖີງອຸບາສົກອຸບາສິກາກໍດີ ຈົ່ງໄດ້ຊ່ວຍກັນ ກັນໄພ ໂດຍບໍ່ຈຸດໜຸນໃຫ້ກຳລັງແກ່ພິກຂຸສາມເນນ ມິດເປັນໄພຕໍ່ພຣະພຸທສາສນາ ຈົ່ງຊ່ວຍກັນກຳຈັດເສ ໝົດໄປ ເພື່ອໃຫ້ພຣະພຸທສາສນາຂອງເຮົາ ຈະເຣີ ເຣືອງສະຖາພອນ ເປັນປໂຍດເກື້ອກູນແກ່ສັດໂລກ ຕ ການະນານເທີນ.

□


# ຮ້ານຖ່າຍຮູບຟູຈິ ໂຟໂຕ Fuji Photo

ເລຂທີ 68 ຖນົນຂົວຫລວງ ວຽງຈັນທນ໌

□ ● □

ເປີດຮັບບໍຣິການຖ່າຍຮູບ ຂຍາຍຮູບໃຫຍ່ ຣະບາຍສີ ຮັບລ້າງຟີລ໌ມ ແລະອັດຮູບ ນອກສະຖານ ທີ່ດ້ວຍຣ

ຍ່ອມເຍົາວ໌ ໂດຍນາຍຊ່າງທີ່ຊຳນານງານ ຝີມືປານີດ ໄດ້ຮອດເຮົ້ວທັນໃຈ

● ຂໍຂອບຄຸນທຸກທ່ານທີ່ໃຫ້ຄວາມອຸປການະ ●

# ຕ່າປະເພນີ

● ຕໍ່ຈາກໜ້າ 22 ●

"ສົມພອນ....ເຊີນຕື້ ...ເພື່ອເປັນການສລອງ"

"ສລອງຫຍັງກະບໍ່ຮູ້....ລົງກະໄດ້ ຍ້ອນຂ້ອຍຢາກຮູ້

ມຈິງບໍ່ແມ່ນຍ້ານເຈົ້າດອກ....ຂໍໃຫ້ຮູ້ໄວ້ແດ່" ຍິງສາວ

ສຽງແຂງ....ຢ່າງຖືດີ....ຖ້ານາງເງີຍໜ້າຂຶ້ນເບິ່ງຊາຍ

ຍິງສາວຄົງຈະແລ່ນໜີໄປສຸດຂອບຟ້າ ເພາະຄຳກິ່ງ

ຢ່າງມີຄວາມໝາຍ

ຮ້ານອາຫານຊຸ້ມນັ້ງປາກົດວ່າ ບໍ່ມີໂຕະຫວ່າງເລີຍ

າວ ທັງສອງໄດ້ແຕ່ຢືນລັ້ງເລຢູ່ ສາຍຕາທຸກຄູ່ຈ້ອງເບິ່ງ

ັງສອງຢ່າງຈົມເຈີຍ....ຈົນສົມພອນຮູ້ສຶກໜ້າຮ້ອນວູບ

ຄິດເຫັນວ່າຄົນພວກນັ້ນຄິດແບບໃດ .... ພໍດີບອຍຄົນ

ເລ່ນມາເຊີນຂຶ້ນຊັ້ນເທິງ ເພາະຍັງມີບ່ອນຫວ່າງ ....ຊາຍ

ງກຫົວລັບ...ແລ້ວກໍເອົາມືແຕະຂໍ້ສອກ ສົມພອນໃຫ້

ຢ່າງເມື່ອເຫັນຍັງຢືນເສີຍ

ໂຕະອາຫານຂນາດກາງສະອາດທາງນອກ ຜ້າກັ້ງສີ

ອງອ່ອນອ້ອມລອບບັງຕາຄົນພາຍນອກໃດ້ເປັນຢ່າງດີ

າວລັງເລໃຈ.... ບໍ່ຢາກເຂົ້າໄປນັ້ງ.... ແຕ່ເຂົາຜູ້ຍາງ

ມຫລັງມັ້ນຕື້....ໃຊ້ ມືຍູ້ແອວຂອງນາງຄືບັງຄັບໃຫ້

ປ.... ສົມພອນຄາງຢູ່ໃນໃຈຢ່າງຄຽດແຄ້ນ" ຮືມ!

ທີຂອງເຈົ້າແລ້ວ....ໃວ້ທີ່ຂ້ອຍກ່ອນເທາະ !"

ທັງສອງນັ້ງລົງຄົນລະຟາກໂຕະຢ່າງມິດໆ.... ຄຳກິ່ງ

ໃຫ້ ຍິງສາວເປັນຜູ້ສັ່ງອາຫານ ຍິງສາວຍິ້ມຢູ່ໃນໃຈ

ເປັນໂອກາສນຶ່ງແລ້ວທີ່ຈະແກ້ແຄ້ນ ສະນັ້ນຊາຍໜຸ່ມ

ດ້ ຍິບລາຍຊື່ອາຫານທີ່ນາງສັ່ງກັບບ່ອຍຢ່າງຍືດຍາວ...

ເພາະມັນເປັນຕັ້ງສິບໆຢ່າງ....ເອົາລະຕື້ ນີ້ສົມພອນເຣີ່ມ

ແຜງຣິດໃສ່ລາວເຂົ້າແລ້ວ

ສົມພອນເຫລືອດສາຍຕາຂຶ້ນເບິ່ງທ້າລາວຢ່າງສົມໃຈ

ແຕ່ນາງກັບໃດ້ບັບຮ້ອຍຍິ້ມຢ່າງບໍ່ຮິສຸດ ຂອງລາວແລະຄຳ

ຖາມຊື່ໆວ່າ

"ຊິພໍກິນຫວະທີ່ນັ້ນ !"

"ບໍ່ພໍຄອຍສັ່ງໃໝ່ !" ນາງຕອບສຽງສູງເພາະກັ້ນ

ຄວາມໂມໂຫ.

"ເວົ້າຊື່ໆເທາະ ກິນຢູ່ນີ້ອິ່ມແລ້ວ.... ບໍ່ໄປກະໃດ້ຕວ່າ

ເນາະກິນລ້ຽງນະ !"

"ເອະເຈົ້ານີ້ ກະດຽວວ່າຍາມໃຫ້ໄປສົ່ງຂ້ອຍ... ແຕ່

ຖ້າເຈົ້າບໍ່ຢາກໄປກະໄດ້ຢູ່...ຂ້ອຍສິໄປເອງ ເຈົ້າເມືອນອນ

ຊະ !" ນາງມ້ອນທ້າຍເອົາງ່າຍໆເຮັດໃຫ້ຄຳກິ່ງຫົວຂຶ້ນເພາະ

ຮູ້ທັນຄວາມຄິດນາງ

"ອ້າວ ຊັ້ນຂ້ອຍກະຂັດຄຳສັ່ງຍາມເຈົ້າລະຕື້....ເພີ່ນ

ຕັ້ງໃຫ້ຂ້ອຍເປັນອົງຄະຣັກເຈົ້າ....ຂ້ອຍກໍຕ້ອງໄປ.... ແລະ

ໄປທຸກໆບ່ອນທີ່ເຈົ້າໄປ"

"ຣື....ຢ່າລືມວ່າເຂົາບໍ່ໄດ້ເຊີນເຈົ້າກະແລ້ວກັນ....ຊິ

ໜ້າດ້ານໄປກໍຕາມ... ແລະສິ່ງສຳຄັນຂ້ອຍບໍ່ໄດ້ຕ້ອງການ

ອົງຄະຣັກຄືເຈົ້າ...ຂໍໃຫ້ເຂົ້າໃຈໄວ້ !" ຍິງສາວບໍ່ຮູ້ຕົນເລີຍ

ວ່າ ເປັນຫຍັງຈຶ່ງສາມາຖເວົ້າຄຳຣຸນແຮງເຖິງພຽງນີ້ໄດ້....

ທັງໆທີ່ບໍ່ເຄີຍກັນດົນຊ້ຳ....ໜ້າດ້ານໄປ....ຕາຍແລ້ວ

ນີ້ເຂົາຈະວ່າເຮົາຄືແບບໃດກະບໍ່ຮູ້ ... ແຕ່ຊາຍໜຸ່ມບໍ່ໄດ້

ສແດງກິຣິຍາວ່າເຈັບແຄ້ນກັບວາຈາຂອງນາງ.... ກັບເວົ້າ

ດ້ວຍສີໜ້າຍິ້ມໆວ່າ

"ແຕ່ຂ້ອຍມີສິດຕິດຕາມເຈົ້າ....ສົມພອນ"

"ສິດ...ຣິ ...ສິດອິຫຍັງ ...ສິດທີ່ເຈົ້າຕັ້ງຂຶ້ນຜູ້ດຽວ

ໜັ້ນຕີ໊ !" ຍິງສາວສວນຄືນສຽງແຫລມສູງ

"ກົງກັນຂ້າມ ... ສົມພອນ ....ຍາມ່ເຈົ້າເປັນຜູ້ຕັ້ງໃຫ້ມອບໃຫ້ຂ້ອຍຢ່າງເຕັມໃຈ....ສິດທີ່ຂ້ອຍເປັນຄູ່ໝັ້ນ ຂອງເຈົ້າແລະຜູ້ທີ່ເຈົ້າຈະແຕ່ງງານກັບເຂົາ...."

"ອ້າຍຄຳກົ່ງ....!" ຍິງສາວຮ້ອງຢ່າງຕົກໃຈຫູນາງບໍ່ແວ່ໄປດອກ....ຄູ່ໝັ້ນ....ວ່າຊາຍໜຸ່ມຜູ້ນີ້ຫວະຈະເປັນຄູ່ຄອງໃນອານາຄົດ.... ສົມພອນຢາກມຸດດິນລົງບໍ່ໃຫ້ລາວເຫັນໜ້າແທ້ໆ....ຍິງສາວເບິ່ງຕອບສາຍຕາຄູ່ນັ້ນຢ່າງບໍ່ຢາກເຊື່ອ ຍິງສາວສິ່ງປະກາຍຄວາມຄຽດແຄ້ນແລະເຈັບອາຍຢ່າງ ສາໃຈ...ແຕ່ກໍຕ້ອງແຄັນໃຈຂົ້ນເມື່ອເຫັນວ່າເຂົາຜູ້ນັ້ນ ບໍ່ໄດ້ສະແດງວ່າເດືອດຮ້ອນຫລືວ່າດີໃຈ....ພໍໃຈທີ່ມີຄູ່ໝັ້ນສາວງາມປານນີ້ ! ແສງຕາຂອງເຂົານັ້ນບາດໃຈນາງຍິ່ງໜັກ... ທັງເຍີຍວ່າເຫັນບໍ່ຂ້ອຍແມ່ເຈົ້າແລ້ວ.... ສົມພອນສະບັດໜ້າໜີຈາກແສງຕາຄູ່ກ້າ...ພໍດີກັບອາຫານສັ່ງແລ້ວ....ຍິງສາວຫລຽວເບິ່ງອາຫານດ້ວຍຄວາມຊັງ.... ຊັງຜູ້ເຈົ້າຂອງລ້ຽງ ເອົາເຖາະເຖິງຢ່າງໃດເຮົາກະສິບໍ່ສແດງໃຫ້ເຂົາຮູ້ວ່າ ເສັຽໃຈ ຫລື ດີໃຈເປັນອັນຂາດທີ່ມີຄູ່ໝັ້ນສວ່າງງາມປານນີ້ ຣື ອົດໄດ້ກໍອົດໄປ.

ໜຸ່ມສາວທັງສອງລົງມືຮັບທານອາຫານຢ່າງມິດໆ ກິນໄປກິນມາ ຕ່າງກໍບໍ່ຍອມເຊົາກ່ອນ ຈົນອາຫານຈານສຸດທ້າຍເຫລືອອາຫານຈານດຽວ ທັງສອງຍື່ນມືເຂົ້າຈະຕັກພ້ອມກັນ ສົມພອນ ເລີຍຫົດມືຄືນກ່ອນ ຊາຍໜຸ່ມຕັກອາຫານໃສ່ຈານໃຫ້ສົມພອນຢ່າງມິດໆ ເມື່ອແລ້ວຈາກການຮັບທານອາຫານ ສອງໜຸ່ມສາວກໍລົງມາຂຶ້ນຣົຖ

"ບ້ານອະທິບໍດີສູນທອນ" ບອກສຽງສັ້ນບໍ່ຫັນໜ້າມາເບິ່ງຄູ່ໝັ້ນທີ່ເຮັດໜ້າທີ່ໂຊເຟີຣນັ້ນເລີຍ ບໍຣິເວນເດີ່ນບ້ານຮຸ່ງເຮືອງດ້ວຍແສງໄຟ ຜູ້ຄົນຄວັກໄຄວ່ສ່ວນຫລາຍແມ່ນພວກໜຸ່ມໆສາວໆທັງນັ້ນ ສົມພອນຢ່າງນຳໜ້າເຂົ້າ

ໄປໃນບ້ານຢ່າງໄດ້ທີ.

"ພອນ ເອ ພອນທາງນີ້!" ສຽງຮ້ອງແຊວໆ ຍິ
ງວາກໄປທາງສຽງ ກໍພົບກັບຄະນະຂອງໂຕ ຮ່ວມກັນຢ
ໃກ້ໆກັບພວກດົນຕຣີ ໜັນກັບໄປເບິ່ງຜູ້ມານຳ ຣື
ເຫງົກຫງາກຢູ່ຫັ້ນລະ ດີລະ ສົມນ້ຳໜ້າຢາກມານຳ ແລ
ກໍຍ່າງເຂົ້າໄປສົມທົບກັບພັກພວກຂອງຕົນດ້ວຍຄວາມ
ໃສ ຄິດດີໃຈທີ່ໄດ້ແກ້ແຄ້ນອົງຄະຣັກຜູ້ນັ້ນ "ເຣັະ
ຕົວະໃຫ້ໄປຮັບລ້າໆ" ສາວນ້ອຍໄວດຽວກັນແລ່ນເ
ຕ່ວ່າທັນທີ.

"ບອກມາໄປກັບໃຜປານນີ້ຄ່ອຍມາ ພວກອ້າ
ອ້າຍສອນ ຊິບ້າຕາຍຢູ່ແລ້ວນ໋ະ ຍ້ານໂຕບໍ່ມາ."

"ໂອຍັງຄ່ອຍໆແດ່.... ແລ້ວຊິເວົ້າໃຫ້ຟັງ :
ສາວໂບກມືໃຫ້ເຊົາ ອ້າຍເຮົາມາແຕ່ພົມເປັນເລີຍພ
ລ້ຽງກ່ອນ ນີ້ເຮົາກະອິ່ມມາແລ້ວໃດ!"

"ຣ້ະ.... ໂຕມີອ້າຍແຕ່ຫວ່າງໃດ" ຄຳໃສຜູ້ສ
ນັກຮຽນນອກໂດດເຂົ້າມາໄກ້ທັນທີ

"ບໍ່ແມ່ນອ້າ... ອ້າຍໆຄີງໆເຮົາດອກ ຫລານທ
ອາຍຸແກ່ກວ່າເຮົາຕັ້ງສິບປີເຮົາກະເລີຍຕ້ອງເອີ້ນວ່າ....

"ໃຫ້ເຮົາເປັນເອື້ອຍໃພ້ໂຕເນາະ" ສົມວັນຍິ້ມ
ເຂົ້າມາຖາມ ເຮັດໃຫ້ສົມພອນໃຈເຕັ້ນຢ່າງປລາດ
ອ້ອນແອ້ນວ່າ

"ເອົາແມ້ ເຮົາຍົກໃຫ້...."

"ບ້າ... ບ້າທີ່ສຸດໃນໂລກມີອ້າຍບໍ່ພາມາແນະ
ສົມຖວິນເຈົ້າພາບຮ້ອງຂຶ້ນ ໜຳບໍ່ຊ້າຍັງພາກັນໄປ
ສອງຄົນອີກ

"ຣິ.... ພອນເຮົາສິສົງໃສແລ້ວໃດນີ້"

"ເອະ.... ໜັ້ນເວົາອິຫຍັງ ພຸ້ນພວກນັ້ນຢ່າ
ແລ້ວເຮົາຂໍໂຕຂຶ້ນເທິງກ່ອນຂັດຫ້ອງແທ້ໆ ບາດເປີດບ

ບານ ຟ້ອນລຳວົງກັບນ້ອງສາວເພີ່ມຮອບນຶ່ງແລ້ວ ພໍ...
ແຂກທີ່ມາກໍອອກຟ້ອນຈົນເຕັມ ເວລາລຳວົງຍິງສາວທີ່ນັ່ງຢູ່
ກັບພວກຊາຍໜຸ່ມໂຕະໃກ້ພວກດົນຕຣີເບ່ປາກນ້ອຍໆແລ້ວ
ເວົ້າສຽງເບື່ອໜ່າຍ ວ່າ

" ຣື....ຈັກຟ້ອນກັນເຮັດຫຍັງລຳວົງນີ້ເສັຽເວລາຊື່ໆ "

" ພໍ່ຊື່ນີ້ຂ້ອຍກະວ່າດີເຈົ້າພອນ" ສົມສັກກ່າວສນັບສນູນ
ລາວຈ້ອງເບິ່ງສົມພອນດ້ວຍແສງຕາເປັນມັນສະແດງຄວາມ
ປາຖນາຢ່າງອອກນອກໜ້າ ຣົດເບັຽເຫລົ້າຕ່າງໆພາໃຫ້
ຄົນທີ່ບໍ່ມັກເວົ້າ ເວົ້າອອກໄດ້ດີນົກແກ້ວໂຕນຶ່ງ ສົມພອນ
ດື່ມເບັຽຮ່ວມກັບພວກເພື່ອນໄດ້ເປັນຢ່າງດີ

ພອນ....ຢູ່ຍັງໃຫວບໍ່ ພວກເຮົາມີຣາຍການຕໍ່ ໄປ
ປິກນິກ ........ ບຸນສວນໂງກໜ້າເຂົ້າມາຖາມໃກ້ໆ ກິຣິ
ຍາທີ່ຂະເຈົ້າສະແດງຕໍ່ກັນເປັນໄປຕາມທາງຕະເວັນຕົກຄືວິທີ
ໃຊ້ຕີນໃຊ້ມືປະກອບນຳ ດົນຕຣີປ່ຽນຈາກຈັງຫວະລຳວົງ
ລາວປ່ຽນໃສ່ຈັງຫວະສາກົນທີ່ຄົນບ້າເລືອດສ່ວນຫລາຍກຳ
ລັງນິຍົມ ໜຸ່ມສາວຫລາຍຄູ່ລຸກຂຶ້ນຈູງມືກັນອອກໄປໃຊ້ວໍ
ລອດລາຍຢ່າງເຖິງອົກເຖິງໃຈ ສົມພອນທົວຊື່ນຊົມກັບການ

[illegible]
ຮອດເຮົາຊໍ່າ ບໍ່ເບິ່ງວ່າເຂົາເກີດຫຍັງກັນ ຣື ສົມພອນ
ຈະເຮັດຢ່າງໃດດີ.... ເພື່ອຈະໃຫ້ຄູ່ໝັ້ນເຫັນເປັນທີ່ບາດ
ໃຈ ບາດຕາເຂົາ .

ຈອກເບັຽທີ່ວາງຢູ່ຕໍ່ໜ້າຖືກຍົກຂຶ້ນຈໍ່ປາກ ຍິງສາວ
ດື່ມເຂົ້າໄປອີກໃຫຍ່ ຣົດເບັຽຂົມໆ ເຮັດໃຫ້ເລືອດໃນ
ກາຍຮ້ອນເຮົ້າ ມີໃຈກ້າຂຶ້ນຢ່າງປລາດ ຍ້ອນສັງຄົມນີ້
ແຫລະພວກຍິງສາວລູກຜູ້ດີມີເງິນ ມີການສຶກສາສູງຕ້ອງ
ທຳຕົນເປັນນັກດື່ມນັກເຕັ້ນ ໃຈກວ້າງກັບຄົນທົ່ວໆໄປ
ວ່າສົມພອນກຳລັງຫລົງລືມປະເພນີເກົ່າ ນາງກຳລັງຖລຳໂຕ
ເຂົ້າໄປໃນວົງສັງຄົມທີ່ຫລອກລວງ ໃນຈັງຫວະຕໍ່ໆມາ
ນັກສັງຄົມທີ່ມາຮ່ວມໃນງານຈຶ່ງໄດ້ຊົມຍິງ ສາວ ຮ່າງ ອໍ ຣະ
ຊອນໃນຊຸດສີນ້ຳທະເລຜິວຂາວນວນ ໃບໜ້າແດງດ້ວຍຣົດ
ເບັຽຢູ່ກາງແສງໄຟ ຄົນໆນັ້ນອອກເຕັ້ນຢ່າງງົດງາມ ສຽງ
ລົມຕົບມື ສຽງຮ້ອງສນັບສນູນເຮັດໃຫ້ສົມພອນ ຫລົງ ໄຕ
ຍິ່ງຂຶ້ນ ຈົນມີການເສັງເຕັ້ນກັນ ໃນຈັງຫວະຕ່າງໆ
ຍິງສາວບໍ່ຍອມລົງເວທີ ຈົນຄູ່ອື່ນໆລົງໄປໝົດແລ້ວ

...ປະກາດກ້ອງ ... ສົມພອນ ກັບທ້າວສົມສັກ.... ຊາຍນຸ່ມລຸກຂຶ້ນຍືນ ຫັນໄປດຶງມືສົມພອນ

"ໄປ໋ພອນ....ເຂົາບອກໃຫ້ໄປເອົາຣາງວັນແລ້ວ !"

"ຮ໊.... ເຈົ້າໄປເອົາຜູ່ດຽວຊ໋ະ...." | ສົມພອນດຶງມືກັບ ແຕ່ສົມສັກບໍ່ຍອມວາງເສັຽແລ້ວ ... ສເນີສົມພອນເຖິງຫົວໃຈ ລາວພໍແຮງ.... ຢາກປະກາດໃຫ້ທຸກຄົນຮູ້ວ່າ ລາວເປັນເຈົ້າຂອງສົມພອນ

"ເຈົ້າຄູ່ເຕັ້ນຣຳຊະນະເລີດມາແລ້ວ ... ຕົບມືເປັນກຽຕ"

"ເອ້າ ...ຂໍເຊີນທ່ານດອກເຕີຣ ຄຳກິ່ງມາໃຫ້ຣາງວັນເພື່ອເປັນກຽຕ...." ໂຄສົກຮ້ອງເຊີນແລ້ວເຊີນອີກ ຮ່າງສູງໆຂອງດອກເຕີຣຄຳກິ່ງ ຈຶ່ງປາກົດຂຶ້ນກາງເວທີ ມັນເຮັດໃຫ້ສົມພອນຄິດກະດາກຢ່າງຕົກໃຈ.... ດອກເຕີຄຳກິ່ງຄູ່ໝັ້ນຄູ່ໝາຍ....ທີ່ນາງບໍ່ຕ້ອງການ

ສຽງຕົບມືດັງສນັ່ນຫວັ່ນໄຫວ....ເຮັດໃຫ້ສົມພອນຮູ້ເນື້ອໂຕວ່າ ຢູ່ຕໍ່ໜ້າແຂກຄົນຫລາຍຮ້ອຍ.... ຍິງສາວຍ້ ໂຕລ້າທຳ... ງບເຄົາຣົບກ່ອນຈະຮັບຂອງຂັວນ ຈາກມືເຂົາ

[illegible]

ເລີຍແມ່ນແຕ່ພໍ່ຜູ່ບັງເກີດເກົ້າຍັງບໍ່ເບິ່ງນາງດ້ວຍ ສາຍຕາແບບນີ້ ອັນນີ້ຫຍັງເຂົາເປັນຄົນອື່ນແທ້ໆ........ ແລະເຂົາບໍ່ແມ່ນຜູ່ອື່ນແລ້ວ ໃນເມື່ອບໍ່ຊ້ານີ້ ຣືຖ້າເປັນໄປໄດ້ ? ຣືຖ້າຢູ່ໝັ້ນເທາະ ສິໄດ້ເມືອຫລາຍ ຍິງສາວເບະສົບຄິດຮ້ອງແອະຢູ່ໃນໃຈ....ເມື່ອກັບມານັ່ງໂຕະເກົ່າແລ້ວຍິງສາວກໍຮ້ອງໃສ່ພອກເຊີຟນ້ຳວ່າ

"ຂໍວິສກີໂສດາທາງນີ້ເດ !" ມັກເຊີຟຜູ່ນັ້ນຫັນມາເ ຜູ່ສັ່ງ ຕາຄ້າງເມື່ອເຫັນວ່າຍິງສາວງາມປານເທພີ ສັ່ງວິສກີ

ເບິ່ງໜ້າເຮັດຫຍັງ? ບໍ່ເຄີຍເຫັນຫວະ " ຂ້ອຍຜູ່ມ ສເດີດຫັນໜ້າກັບທັນທີ" ບ່ະ...ງາມປານນີ້ເວົ້າບໍ່ມ່ອນກະຍັງມີເນາະ" ....ເຂົາຄິດຢ່າງຫົວໆ

ພອກຜູ່ຊາຍພາກັນເບະສົບເມື່ອເຫັນກິຣິຍາຂອງສາ ງາມຜູ່ເປັນດາຣາຂອງສັງຄົມ....ສົມສັກເອີ່ຍຊວນວ່າ

"ພອນຢູ່ໃນຫນີ້ຮ້ອນໂພດ....ເຈົ້າຈຶ່ງອາຣົມບໍ່ດີໄປຍ ຫລີ້ນຢູ່ແຄມສະພຸ້ນໄປ໊ !" ສົມພອນລຸກຂຶ້ນຢ່າງວ່າງ່າຍເພາ ຄິດຢາກຫລົບໜ້າຄູ່ໝັ້ນແດ່....ຍິງສາວບໍ່ສລຽວ ໃຈ ເລີຍ ວ່າສົມສັກຈະມີແຜນການຢ່າງໃດກັບນາງ

ເມື່ອອອກຈາກບໍລິເວນທີ່ມີໄຟສ່ວາງແສງ ສົມສັກກໍ່ຢຸດເອົາມືຈັບມືສົມພອນ

"ພອນເຮົາໄປນັ່ງແຄມສະພຸ່ມເນາະສົມພອນນັ້ນກຳລັງມືນຍ້ອນລິດເຫລົ້າ ຈຶ່ງບໍ່ສເດືອກໃຈສົມສັກພານາງຍ່າງລັດເລາະຕາມພຸ່ມໄມ້ຢ່າງວ່ອງໄວ....ທັງສອງນັ່ງຣຽງກັນສົມສັກເອົາມືໂອບບ່າໄລ່ຍິງສາວ ອຽງໜ້າເຂົ້າມາຈົນຕິດຂ້າງສົມພອນ....ເວົ້າສຽງອ້ແອ້ວ່າ

"ພອນເປັນຂອງຂ້ອຍເທາະເນາະ.... ຮູ້ບໍ່ວ່າຂ້ອຍຫລົງເຈົ້າ !"

"ສັກປ່ອຍ....ຂ້ອຍ" ຍິງສາວພຍາຍາມແກະມືອອກ

"ຣິ....ພອນ....ໃຜໆຈະສົງໃສແລ້ວວ່າຂ້ອຍກັບເຈົ້າຕ້ອງມີຫຍັງກັນ....ຣິ....ຈື່ສຽງເຈົ້າໝົດແລ້ວນ່ະ" ເວົ້າແລ້ວສົມສັກກໍ່ໃຊ້ມືໂອບຣັດຮ່າງນ້ອຍຂອງນາງເຂົ້າອີກ

"ປ່ອຍສັກເວົ້າບໍ່ຮູ້ເຣື່ອງຫວ່ະບອກໃຫ້ປ່ອຍ....ໃຜຊິວ່າຢ່າງໃດກໍ່ຕາມ....ເຈົ້າກະຮູ້ດີວ່າຂ້ອຍບໍ່ໄດ້ ເປັນ ຫຍັງ ກັບ ເຈົ້າ ຂ້ອຍຍັງບອກແລ້ວວ່າຂ້ອຍບໍ່ໄດ້ຮັກເຈົ້າ !"

"ຮັກບໍ່ຮັກເຈົ້າກໍ່ຕ້ອງເປັນຂອງຂ້ອຍ....ສົມພອນ!" ສົມສັກຄາງ ເຮັດໃຫ້ສົມພອນເກີດຄວາມຢ້ານຂຶ້ນທັນທີ ນາງໃຊ້ເຣື່ອແຮງທັງໝົດທີ່ມີຢູ່ ອອກດິ້ນ ຟິດສຸດແຮງ ແລ້ວນາງກໍຖລາລຸກຂຶ້ນເພື່ອແລ່ນໜີ ສົມສັກໂດດນຳຄວ້າຂານາງໄດ້ກໍດຶງ ເຮັດໃຫ້ຍິງສາວລົ້ມລົງກັບບ່ອນ ປ່ອຍສຽງຮ້ອງອອກໄປວ່າ

"ໂອ້ຍ ຊ່ອຍ....ຊ່ອຍແດ່....ໂອ້ຍ!" ຄວາມຕົກໃຈສຸດຂີດ ກ່ອນເຫດການຈະຮ້າຍແຮງກວ່ານັ້ນ ນາງກໍໄດ້ຍິນ
...ຣາບາດຕີນດົນແລ່ນເຂົ້າມາໃກ້ ສຽງອຸທານວ່າ

"... !"

...ສອງກໍ່ຕໍ່ສູ້ກັນ ດ້ວຍໝັດແລະກຳປັ້ນ

...ແລ້ວຈັ່ງຊິລົງ" ຍິງສ...

"...ມີຫວັງຈັ່ງຊິໃດພອນ...

ຍິງສາວເບີກຕາກວ້າງຢ່າງດີ...

ຄຳກິ່ງເປັນຝ່າຍໄດ້ປຽບເພາະໃຫຍ່ກວ່າ ພໍຟາດສົມສັກລົ້ມໝອບແລ້ວ ຊາຍໜຸ່ມກໍ່ຫັນມາດຶງເອົາແຂນສົມພອນຖາມວ່າ

"ຢ່າງໄດ້ບໍ່ ?" ຍິງສາວບໍ່ຕອບ ແຕ່ອອກຍ່າງຕາມແຮງດຶງຂອງເຂົາທັນທີ

ທັງສອງຂຶ້ນຣົຖແລ້ວ ຣົຖແລ່ນໄປຕາມທາງທີ່ມືດນັ້ນ ຄຳກິ່ງບໍ່ອອກປາກຖາມແນວໃດ ປ່ອຍໃຫ້ສົມພອນນັ່ງໜ້າມ້ານຢູ່ຈື່ໆ.... ຄວາມອັບອາຍ ຂາຍໜ້າ ເສັຽໃຈ ວຸ້ນຂຶ້ນມາ ຍິງສາວຖາມສຽງສັ້ນໆວ່າ

"ເຈົ້າ ເປັນຫຍັງຈຶ່ງໄປທາງນັ້ນ.... ຣິ ?!"

"ຂ້ອຍອອກໄປຍ່າງຫລິ້ນມັນຮ້ອນ ໄດ້ຍິນສຽງຮ້ອງໃຫ້ຊ່ອຍ ຄິດວ່າແມ່ນງແມ່ນງຽວຕີກັນດອກ ຄັນຮູ້ວ່າແມ່ນ...." ຄຳກິ່ງຢຸດເວົ້າຊື່ໆ ເຮັດໃຫ້ສົມພອນແຄ້ນໃຈຍິ່ງຂຶ້ນ

"ໂອ້ຍ ເຈົ້າບໍ່ຕ້ອງອ້າງບຸນອ້າງຄຸນໄປຊ່ອຍ ເຖິງຢ່າງໃດພອກຂ້ອຍກະບໍ່ເຮັດຊື່ຈ້ອປານນັ້ນດອກການທ່ຽວຂອງຂ້ອຍຄັ້ນເຮັດໃຫ້ເຈົ້າບໍ່ພໍໃຈແລ້ວຖອນໝັ້ນໂລດ ຊິຖືສິດເປັນຄູ່ໝັ້ນຈັ່ງໃດກະໄດ້ນ່ະຂ້ອຍບໍ່ຍອມດອກ ໄດ້ຍິນບໍ່ ດອກຕີຄຳກິ່ງ !" ຍິງສາວຮ້ອງສຽງແຫລມຢ່າງແຄ້ນໃຈທີ່ຝ່າຍນັ້ນບໍ່ເອົາຫົວຊາ .

"ອ້າວກະເວົ້າຕໍ່ໄປເທາະແມ່ຂ້ອຍກຳລັງຟັງມ່ວນດີ" ດອກຕີໜຸ່ມຫັນມາຕອບຊ້າໆ ນ້ຳສຽງທີ່ນັ້ນເກີດອາຣົມຮ້ອນຂອງນາງຢຸດລົງໄດ້ຢ່າງປລາດ .

"ຄົນເຮົາມີຄວາມຜິດແລ້ວມີຮ້ອນໂຕສເມີ ເຖິງວ່າເຂົາບໍ່ເວົ້າຈັ່ງໃດກໍຕາມ !" ຊາຍໜຸ່ມເວົ້າຂຶ້ນອີກ

"ໝາຍຄວາມວ່າຈັ່ງໃດ ?" ສົມພອນກັ້ນບໍ່ໃຫ້ສຽງສັ່ນຢ່າງລຳບາກ .

"ອ້າວຂ້ອຍຄິດວ່າເຈົ້າຄືຊິເຂົ້າໃຈແລ້ວ !" ດອກ.ຕີ

ໜຸ່ມຕອບສຽງໜັກ ເຮັດໃຫ້ສົມພອນອັບອາຍ ອົ້ນ ອີກ

"ຂ້ອຍຈະຖືວ່າມັນເປັນຄວາມຜິດຂ້ອຍເອງ ທີ່ປ່ອຍໃຫ້ເຫດການແບບນີ້ເກີດກັບຂ້ອຍ" ຍິງສາວຕອບ ສຽງສັ່ນ ແລ້ວເວົ້າຕໍ່ວ່າ "ແຕ່ສຳລັບເຣື່ອງອື່ນແລ້ວຂ້ອຍບໍ່ຖືເພາະທຸກຄົນເຮັດກັນແບບນັ້ນ ທຸກໆສັງຄົມເຂົາມີການຊຸມນຸມກັນ ຂ້ອຍບໍ່ເຂົ້າໃຈວ່າເປັນຫຍັງເຈົ້າເອງກໍເປັນຄົນໜຸ່ມຢູ່ຈຶ່ງບໍ່ມັກການເຕັ້ນຣຳ ຊຶ່ງພວກຂ້ອຍນ່ະຖືວ່າເປັນສິ່ງສຳຄັນທີ່ຈະຂາດບໍ່ໄດ້ຍາມມີບຸນ ຫລືວ່າເຈົ້າເປີດຫລາຍ"

"ສົມພອນ ເຈົ້າເວົ້າຫຍັງເປັນເດັກນ້ອຍໄປໝົດ ຮູ້ບໍ່ວ່ານັ້ນມັນແມ່ນເຫດຜົນຂອງພວກເຈົ້າຝ່າຍດຽວ"

"ຂ້ອຍບໍ່ເຫັນວ່າມັນເສັຽຫາຍອີຫຍັງ" ຍິງສາວຮ້ອງສຽງແຫລມຢ່າງບາດໃຈ ແຕ່ຄຳກົ່ງກໍຍັງເວົ້າຕໍ່ໄປຢ່າງສມ່ຳສເມີວ່າ,

"ເຈົ້າລອງຄິດເບິ່ງຜົນທີ່ໄດ້ຮັບເບິ່ງສົມພອນຈາກຄວາມສນຸກສຸກສຳຣານ ທີ່ເຈົ້າໄດ້ຮັບນັ້ນ ມັນຄຸ້ມກັບຄວາມເສັຽຫາຍທີ່ເກີດຂຶ້ນບໍ່ ຈົ່ງຊື່ລະ ຄິດຫວ່າງນີ້"

"ຢຸດ... ແມະ... ບໍ່ເວົ້າເຖິງເຣື່ອງຕົວຂ້ອຍ ເວົ້າແຕ່ສ່ອນຮອນ" "ຂ້ອຍຢາກໃຫ້ເຈົ້າຄິດເບິ່ງດັກໆສົມພອນພວກເຈົ້າໄປຫລິ້ນ ໄປມ່ວນ ລືມທຸກສິ່ງທຸກຢ່າງ ແມ່ນແຕ່ການຮັບຜິດຊອບໂຕເອງ ໄດ້ຜົນຫຍັງ ຮູ້ບໍ່ວ່າພໍ່ແມ່ພວກເຈົ້າຫວາດຫວັ່ນຢ້ານຈັກໜ່ອຍອູ້ມທ້ອງມາຫາ ຣິ... ອັນນີ້ຂ້ອຍເວົ້າຄວາມຈິງ ເຮັດໃຫ້ເພິ່ນຫ່ວງເພິ່ນທຸກນຳ ແລ້ວມັນດີບໍ່ລະ ລູກທີ່ເຮັດໃຫ້ພໍ່ແມ່ອຸກນຳ ເປັນລູກທີ່ດີບໍ່?"

"ຣິ... ແຕ່ຂ້ອຍບໍ່ເຫັນເພິ່ນເດືອດຮ້ອນອີຫຍັງນີ້ມາ ພໍ່ພວກຂ້ອຍໄປເພິ່ນກະນອນຫລັບຢູ່ເຮືອນສຳບາຍ" "ຮູ້ໄດ້ຈັ່ງໃດວ່າ ເພິ່ນນອນຫລັບສຳບາຍ?" ຖາມສຽງຫ້າວຈົນສົມພອນຢາກໂດດລົງຣົຖແລ່ນໜີ

"ຄວາມຈິງແລ້ວ ເພິ່ນເປັນຫ່ວງລູກສາວຄົນງາມຕັ້ງແຕ່ອອກຈາກບ້ານໄປພຸ້ນລ່ະ ບໍ່ຮູ້ຈະໄປເຮັດຈັ່ງໃດແດ່ ດີຊື່ແລ້ວ ຊິບໍ່ໃຫ້ເພິ່ນຫ່ວງຈັ່ງໃດ ໄປເຕັ້ນຣຳກັບໃຜແດ່ ໃຜໆເຂົາກະໄດ້ "ເພັຽະ! ເພັຽະ!" ສຽງຝ່າມືນ້ອຍຟາດລົງໃສ່ໜ້າຊາຍໜຸ່ມຊ້ອນໆກັນ... ແຕ່ຣົຖເບັນສີແດງຄັນງາມກໍຍັງແລ່ນໄປສມ່ຳສເມີ ສົມພອນຖອຍໂຕອອກມາຈົນຕິດປະຕູຣົຖ ແສງຕາຈ້ອງເບິ່ງໜ້າຄົນຂັບຢ່າງຈະກິນເລືອດກິນເນື້ອ ເວົ້າສຽງສັ່ນໆວ່າ

"ໂອ.... ເວົ້າອີກແມະ ຫຍາບຄາຍຕ່ຳຊ້າທີ່ສຸດບໍ່ມີໃຜໃນໂລກນີ້ຄິດຄືເຈົ້າດອກ ໃນເມື່ອໃຜໆເຂົາກະເຕັ້ນຍາມມີບຸນກິນລ້ຽງຈັ່ງຊີ້ ມີແຕ່ຄົນບ້ານນອກຄົນປ່າໜັ້ນລະທີ່ເຫັນວັທນະທັມຊາວຜິວຂາວວ່າເປັນສິ່ງໜ້າບັດສີນະ" ຍິງສາວດ່າຢ່າງບໍ່ເກງໃຈ

"ສົມພອນ.... ເວົ້າໆນະຖືກຕ້ອງທີ່ສຸດ ແມ່ນລະ ບໍ່ມີໃຜດອກໃນໂລກນີ້ຄິດຄືຂ້ອຍນະ ເພາະເຂົາພວກນັ້ນບໍ່ໃສ່ຈິນາເປັນ...ເອີ້ ຂໍໂທດ ຜົວເຈົ້ານະເຂົາກະບໍ່ໜ້າໂງ່ລະຕີ້ ໄດ້ກອດໄດ້ຕ້ອງສາວງາມຝຣັ່ງນະ ຫລືເຈົ້າຄິດວ່າພວກນັ້ນເຂົາພ້ອມທີ່ຈະດຸກເຂົ້າຂແຕ່ງດອງເຈົ້າ ແລະເວົ້າກະພ້ອມຍື່ນມືໃຫ້ເຂົາຈູບ ເຂົ້າເຮືອນນໍ້ຊຸ່ມເນາະ ຂ້ອຍນີ້ວ່າຄືຊິເປັນໄປບໍ່ໄດ້ ໃນເມື່ອເຈົ້າເປັນຮອດລູກສາວທ່ານຜູ້ແທນມີໜ້າມີຕາ ແລະມີກຽດ ມາເອົາກັບພວກທາກິນນ້ຳຕີນສົນຜູ້ຍິງນີ້ຫວະ – ຣິ ຣິ ພໍ່ຂອງເຈົ້ານະຢ້ານແທ້ຢ້ານວ່າ ຢ້ານບໍ່ໄດ້ຄ່າດອງ ນີ້ເປັນຄວາມແທ້ ໃດນີ້" ຊາຍໜຸ່ມເວົ້າຍ້ຳເນື້ອແມ່ເສືອສາວທັນມາ

"ບ້າ.... ເຈົ້າເປັນບ້າແລ້ວຫວະ ພ້ອມກັບຍົກມືຂຶ້ນຈະທຳຮ້າຍເຂົາ" ຄຳກົ່ງໄວກວ່າ

"ອ້າວ.... ເວົ້າດີໆຫາວ່າບ້າ ເຈົ້າຄິດເບິ່ງແມ້ຖ້າເຈົ້າປະພຶດຕົວແບບນີ້ຕໍ່ໄປກະມີຫວັງ ມີຫວັງບໍ່ໄດ້ຕອບບຸນແທນຄຸນເພິ່ນແທ້ໆ"

"ປ່ອຍ ໆ ໆ ມືຂ້ອຍແມ້" ຍິງສາວຮ້ອງທັງ
ງມືອອກ ບອກບໍ່ຖືກເອົາໂລດວ່າ ຮູ້ສຶກຢ່າງໃດ
ງຢຸດຢູ່ຕໍ່ໜ້າເຮືອນຍິງສາວໄຂປະຕູຣົຖແລ່ນຂຶ້ນ ບັນໃດ
ງທີ່ຢ່າງທີ່ຄອຍຖ້າທ່ານສຸພາບບຸຣຸດມາໄອ້ໃຫ້ສຽງບາດຕີນ
ງນ້ຳມາຕິດໆ.... ສົມພອນບໍ່ຍອມຫັນມາເບິ່ງເລີຍແຕ່ມີ
ພັນຫ້ອງອາຫາຣໄປເທົ່ານັ້ນ ... ກໍຮູ້ໂຕວ່າຖືກດຶງເຂົ້າໄປ
າອົກກວ້າງຂອງຝ່າຍນື້ງ ເງີຍໜ້າຂຶ້ນຫວັງຕໍ່ສູ້ໄອເກີນ
່າຈະປ້ອງກັນໂຕ ຮິມຝີປາກທີ່ອວບອິ່ມກໍໄດ້ຮັບການສັມ
ຢ່າງອ່ອນນ້ອມຈາກຝ່າຍຊາຍ ມັນຊາບຊຶ້ງແລະອາບ
າມຫົວໃຈຢ່າງບອກບໍ່ຖືກແກ້ມທີ່ເປັນນວນງາມກໍຖືກສອງ
ຂ້າປະຄອງຂຶ້ນຮັບການຈຸມພິດທຸກບ່ອນ ຍິງສາວສະບັດ
າ ພົ້ນຈາກໂອ້ງມືຫັນຫລັງແລ່ນຂຶ້ນເນືອສຽງຫົວໄລ່ຫລັງ
ວ່າ "ຝັນດີ ສົມພອນ ຣິ ຣິ !" ອັດປະຕູຫ້ອງນອນຢ່າງ
ພັນທາ ຍິງສາວພາໂຕມາຢືນຢູ່ຕໍ່ໜ້າ ແວ່ນໃຫຍ່ອີກ
ອນື້ງ ບໍ່ແມ່ນເພື່ອແຮງຄວາມງາມ ຄືກ່ອນຈະອອກຈາກ
ງໄປແຕ່ແຍງເພື່ອເບິ່ງຄວາມຜິດປົກຕິຂອງໂຕ ເຄີຍຖືກ
ກອດຈາກພວກໜຸ່ມເຕັ້ນຣຳການແສງໄຟການຊຸມຈົມແລະ
ງເພງ ອັນນີ້ເຂົາຈູບປາກແກ້ມໂອ້ຍ.....ໃບໜ້ານາງແດງ
 ດວງຕາແວວວາວໄປດ້ວຍຢາດນ້ຳຕາແຄ້ນໃຈຢ່າງບອກ
າ ຣິ ຄົນບ້າໆ ດ່າເຂົາຢູ່ແຫ້ໆກັບມາເຮັດແບບນີ້ ດູຖູກ
ຢ່າງຮ້າຍກາດ ຍິງສາວຄິດໄປພາງປ່ຽນເຄື່ອງນອນນ້າງ
ຍັນຈິງນາງງາມຈັກະວານອອກ ເຮັດຄືເຮົາຊື່ວປານຜູ້
າກິນຣີ
າໃຫລອາບແກ້ມ ສຽງເຍີຍຕ່າງດັງກ້ອງຫູຢ້ານພໍ່ບໍ່ໄດ້
ອງ ຣິ ມ້ອນຊິຖາມພໍ່ເບິ່ງວ່າ ຢາກໄດ້ຈັກແສນ ຄວາມ
າລາຍຢ່າງສັບສົນກັນ ຍິງສາວສະອື້ນໃຫ້ກັບໝອນ ຣີ
ແຕ່ໃດໆມາສົມພອນ ບໍ່ເຄີຍວ່າຈະເສັຽນ້ຳຕາຍ້ອນ

ອີຕາດອກເຕັ້ນເອງ ເຮົາຈຶ່ງຮ້ອງໃຫ້ປານນີ້ ນອນຫລັບດ້ວຍ
ຄວາມເມື່ອຍອ່ອນ ມາຮູ້ເມື່ອຄືງກໍເປັນເວລາທີ່ແສງແດດສີ
ເຫລືອງ ສອດສ່ອງເຂົ້າມາທາງປ່ອງຢ້ຽມຫົວບ່ອນນອນ ຍິງ
ສາວພິກຄິງ ຫັນໜ້າອອກໄປສືບອາກາດບໍຣິສຸດຂອງຍາມ
ຮຸ່ງອາຣຸນ ຄວາມຄິດລ່ອງລອຍໄປ ກຸຫລາບງາມສອງສາມ
ດອກ ກໍອວດຄວາມງາມຢູ່ຢ່າງຈອງຫອງ ສົມກຸຫລາບຈອ
ຫອງ ໄດ້ເພາະມັນບໍ່ຍອມໃຫ້ໃຜເດັດງ່າຍໆ ແລ້ວເຮົາລະ
ເປັນຄົນທີ່ໃຜຢາກເຮັດຈັ່ງໃດກະໄດ້ ເຈັບແສບເຂົ້າໄປທາງ
ໃນ ພວກນັ້ນບໍ່ໃຊ່ຊິມາເປັນຜົວເຈົ້າ ເຂົາກະບໍ່ໜ້າໄງ່ລະຕື້
ໄດ້ກອດສາວງາມ ມີແນວໃດອີກນ່າອັບອາຍກວ່ານີ້ ສຽງ
ເວົ້າຍັງດັງກ້ອງໃນຫູ ເຂົາເປັນຫຍັງບໍ່ວ່າ ພອນຂ້ອຍທອງ
ເຈົ້ານະ ບໍ່ຢາກໃຫ້ໃຜແຕະຕ້ອງເຈົ້ານອກຈາກຂ້ອຍ ເວົ້າ
ແບບນີ້ສົມພອນກໍຈະບໍ່ຍອມເຕັ້ນຣຳກັບໃຜດອກ ອັນນີ້ຫຍັງ

"ກ໊ອກໆໆ ກ໊ອກໆ" ສຽງເຄາະປະຕູຫ້ອງຢຸດຄວາມ
ຄິດທີ່ສັບສົນ ດ້ວຍດວງຕາທີ່ບວບຊ້ຳ ຍິງສາວລົງຈາກຕຽງ
ໄປໄຂປະຕູ ຮ້ອງຖາມນຳວ່າ

"ໃຜ ປ້າວັນດີຫວະ" ບິດດຽວ ບານປະຕູໄຂອອກ
ຮ່າງຜູ້ເຄາະຢືນສູງສງ່າຢູ່ຕໍ່ໜ້າ
ທັນທີທີ່ພົບໜ້າຄວາມແຄ້ນແໜ້ນໃຈຕ່າງໆກໍອັ່ງ ຂຶ້ນຈົນ
ສຸດທີ່ຈະທົນທານໄດ້ ສຽງຫ້າວໆຖາມໃຫ້ສະດຸ້ງວ່າ

"ສະບາຍດີຕອນເຊົ້າສົມພອນ" ຍິງສາວຖອຍຫລັງ
ນ້ຳຕາທີ່ຄິດວ່າມັນໝົດຕັ້ງແຕ່ຄືນນີ້ກັບມາລໍ່ຢູ່ເຕົ້າຕາ

"ອ້າວພອນ ມັນນ້ອງເປັນຫຍັງ! ນ້ອງ ຣີ" ເຂົາເອີ້ນ
ເຮົາວ່ານ້ອງ ຍິງສາວບໍ່ຍອມຕອບຫັນຫລັງໃຫ້ ຈຶ່ງບໍ່ຮູ້ວ່າ
ດອກເຕື້ໜຸ່ມໃດກ້າວຂາເຂົ້າມາໃນຫ້ອງຂອງນາງ

"ພອນນ້ອງ ນອນບໍ່ຫລັບຫວະ" ຊາຍໜຸ່ມຖາມສຽງ
ມ່ອນຄືບໍ່ມີເຣື່ອງບາດໝາງກັນ ແຕ່ສົມພອນບໍ່ຟັງເສີຍແລວ
ນາງຮ້ອງໃສ່ວ່າ

"ຂໍເຊີນອອກຈາກຫ້ອງຂ້ອຍ ອອກໄປດຽວນີ້" ຮ່າງນ້ອຍໃນຊຸດສົ້ງເສື້ອນອນສີເຫລືອງສົ້ນນ້ອຍໆ ເບີ່ງແລ້ວນາງຊ່າງບໍຣິສຸດ ພູດຜ່ອງຄືດັ່ງດອກກຸຫລາບຈູມ....ບໍ່ມີແບ່ງຜູ້ກາຍໃກ້ເທື່ອ ຜົມຍາວລະລົງກາງຫລັງໃບໜ້າຂາວຜ່ອງປາສຈາກສິ່ງຕົບແຕ່ງ ຂອບຕາແດງຊ້ຳເພາະຜ່ານການຮ້ອງໄຫ້ຊາຍໜຸ່ມກ້າວເຂົ້າໄປອີກບໍ່ຄິດຢ້ານຝ່າມືນ້ອຍ ທີ່ພ້ອມຈະຟາດລົງບົນໃບໜ້າເຂົາ

"ນ້ອງຄຽດໃຫ້ອ້າຍຫລາຍປານນັ້ນຫວະ!"

"ຍັງຈະມີໜ້າມາຖາມອີກ" ຍິງສາວຮ້ອງຢູ່ໃນໃຈແຕ່ຕອບອອກໄປສຽງຈິງຈັງວ່າ

" ສົມຄວນແລ້ວທີ່ເຈົ້າໃຫ້ຂ້ອຍແບບນີ້ ... ຖືກໝົດທຸກຢ່າງ ຂ້ອຍເປັນຄົນລືມປະເພນີ ລືມໂຕ ບໍ່ມີຣາຄາຫຍັງ ? ໃຜຢາກລ່ອງເກີນຈັ່ງໃດກໍໄດ້" ຊາຍນຸ່ມຍິ້ມເພາະເຂົ້າໃຈໃນຄວາມເວົ້າສຽດຂອງນາງ

" ພອນ ອ້າຍ.... ອ້າຍຂໍໂທດນຳຄົນນີ້ ນ້ອງອອດດີໂພດ!" ບັບບ່າໄລ່ຄ່ອຍໆຢ່າງເອົາໃຈ ຍິງສາວກັດແຂ້ວໄວ້ເພື່ອກົນກ້ອນສະອື້ນທີ່ແລ່ນຂຶ້ນມາຈຸກຢູ່ຄໍຫອຍ

"ພອນ ເອ.... ອ້າຍ....ເຮົາສິແຕ່ງດອງກັນໃນເດືອນໜ້ານີ້ ນ້ອງຕຽມເຄື່ອງທັນບໍ່...."

"ແຕ່ງດອງເດືອນໜ້າ....ຣິ?" ສົມພອນຄິດຢ່າງແຄ້ນໆວ່າເຂົາຫາຄ່າດອງບໍ່ໄດ້ ແລ້ວຍັງຈະມາແຕ່ງງານຫຍັງອີກແລ້ວເຣື່ອງຫຍັງຈິແຕ່ງໃນເມື່ອບໍ່ເຂົ້າໃຈກັນເຊັ່ນນີ້ "ຂ້ອຍຈິເອົາກັບຜູ້ທີ່ຂ້ອຍມັກ ແລະຜູ້ທີ່ເຂົາຮັກຂ້ອຍເທົ່ານັ້ນ!" ນາງຫັນໜ້າໄປເວົ້າທາງອື່ນຢ່າງງອນໆ

" ອ້າວ ແລ້ວກັນ ແລ້ວຜູ້ນັ້ນເດ ສົມພອນບໍ່ຮັກຫວະ? ຊາຍນຸ່ມຖາມກັນຫົວເຮັດສຽງເສົ້າໆ

" ເຣື່ອງອີ່ຫຍັງຂ້ອຍຈິໄປຮັກຄົນບໍ່ມີຫົວໃຈ?" ຜົມງາມຖືກລູບຄ່ອຍໆ ຍິງສາວປ່ອຍໃຫ້ເຂົາເຮັດຕາມໃຈຄືຈັ່ງເ
ນິນລະກົດ

"ແມ່ນແລ້ວ ຄົນຜູ້ນີ້ບໍ່ມີຫົວໃຈ ເພາະເອົາຝາກໄວ້ກ
ສົມພອນແຕ່ຄົນນັ້ນ!"

"ຣື!" ຍິງສາວຮ້ອງຄ່ອຍໆ.... ຫັນໜ້າມາເບິ່ງຜູ້ເ
ກໍພົບສາຍຕາປລາດ ເຕັມປ່ຽມດ້ວຍຄວາມຮັກຈ້ອງເບິ່ງຢູ

"ພອນເປັນດອກໄມ້ບໍ່ມີໜາມໃຜໆຢາກເດັດກໍໄດ
ຍິງສາວເວົ້າສຽງສັ່ນ ບໍ່ໝົດຄວາມນ້ອຍໃຈທີ່ຖືກຂົ່ມເ

"ນັ້ນຄົນເບິ່ງຈື່ໆ ...ຈຶ່ງບໍ່ຮູ້ວ່າມີໜາມແຫລມ....ຜ
ເດັດພັ້ນຈຶ່ງຮູ້...ນີ້ຮອຍຫຍັງນີ້ ?...." ຊາຍໜຸ່ມ ຊີໃຫ້ຮອ
ມຸດບົນໃບໜ້າລາວ....

"ແສບໝົດຄືນ....ເຮັດໃຫ້ຄິດຮອດເຈົ້າຂອງ ເລ
ພອນກະບໍ່ຫລັບ" ຍິງສາວຫັນມາ ສົ້ນແລ້ວຄວາມພະຍົດ
ວ່າໃນທີ່ສຸດນາງກໍພົບກັບຜູ້ທີ່ຈະໃຫ້ຄວາມກຸ້ມກັນ....ປົກຄ
ຜູ້ຍິງນະບໍ່ແມ່ນຈະເອົາຄູ່ດອງທີ່ເຄິຽ ປອກ ເຫລັມ ຄື ສ່ຽ
ດອກ....ເຂົາຕ້ອງການຜູ້ໃຫຍ່ກວ່າ....ມີທຸກ ສິ່ງ ທຸກ ຢ່າງ
ເໜືອກວ່າ....

"ພອນ" ....ເອີ....ອ້າຍກໍ່ງ....ພອນຮູ້ແລ້ວວ່າຕລອດ
ລາ ທີ່ຜ່ານມານີ້ ພອນບໍ່ສາມາຖຕັດສິນໃຈກັບໃຜໄດ້ຍ້ອ
ອ້າຍນີ້ເອງ....ເພາະພອນຄິດເຫັນອ້າຍແຕກ ທີ່ເອົາອົກເ
ໃຈພອນ....ບາງເທື່ອກໍຂັດຂວາງບໍ່ໃຫ້ພອນເຮັດ ແນວ ບໍ່
ພອກນັ້ນນະ... ມີແຕ່ພາມັນເອົາໃຈ.... ຍ້ອງພອນ.... ຍ
ໃຫ້ພອນທຸກຢ່າງບໍ່ວ່າເຮັດຫຍັງ....ພອນຈຶ່ງໄດ້ ໃຈເອົາດ
ໃຈໂຕ....ບໍ່ຟັງສຽງໃຜ

ບັດນີ້ພອນຮູ້ແລ້ວວ່າ....ພອນຕ້ອງການຜູ້ນຳເຮ
ວິຕພອນ....ເພາະໂລກທຸກວັນນີ້ວຸ້ນວາຍຫລາຍ ພອນບໍ່
ສາມາຖພາເຮືອຜ່ານໍ່ຣະສູນໄປໄດ້ຜູ້ດຽວ....ເບິ່ງແຕ່ ຄົນ
ຖ້າອ້າຍກໍ່ງບໍ່ໄປຊ່ອຍພອນ....ພອນຄົງ....ບໍ່

" ເຈົ້າເວົ້າເຣື່ອງທີ່ຜ່ານມາແລ້ວພອນ....ອ້າຍບໍ່ຖືດອກ ຫລືມມັນ....! " ຊາຍໜຸ່ມເອົາມືໂອບກອດຮ່າງຄູ່ໝັ້ນສາວ ໄວ້ຢ່າງຖນຸຖນອມ

" ພອນບໍ່ເຄີຍລືມດອກອ້າຍກິ່ງ ພອນຈະຂໍຈື່ໄວ້ຈົນ ງຕາຍ ຈື່ໄວ້ເປັນບົດຮຽນ ສຳຣັບການຫລົງໂຕ ພັຍອັນ ຣາຍຕ່າງໆ ອ້າຍກິ່ງ ພອນ ພອນຕ້ອງການຜູ້ຈູງພອນຕ່າງ ກບໍ່ແມ່ນຜູ້ທີ່ພອນຈະຈູງເຂົາ "

" ອ່າ ພອນ ນ້ອງຄົງເຂົ້າໃຈອ້າຍແລ້ວແມ່ນບໍ່ທີ່ ຍເຮັດທຸກສິ່ງທຸກຢ່າງລົງໄປນ໋ະເພື່ອນ້ອງຄົນດຽວເປັນທັນ ຢູ່ແລ້ວ ຄືຄວາມໂບຮານເພີ່ນວ່າ ເອີ ຜົວເປັນຊ້າງ ໜ້າພາໄປ ເມັຽເປັນຊ້າງເທົ້າຫລັງຄອຍຕາມ ແຕ່ຖ້າ ໃດເທົ້ານຶ່ງພິການຊ້າງນັ້ນກໍ່ຈະຍ່າງໄປບໍ່ໄດ້ ຄືກັນໃດ໋ ພອນ "

" ເອີ ພອນຢາກຮູ້ວ່າອ້າຍກິ່ງມາຮອດບ້ານແຕ່ຫວ່າງ ພໍ່ແມ່ບໍ່ບອກຫຍັງພອນ ຄັນຮູ້ພອນກະບໍ່ມີຊີໄປ" ເອີ ສາວເວົ້າສຽງໃສ

"ຊິໄປທ່ຽວແມ່ນບໍ່" ດອກເຕີຣ໌ຈັບປາຍຄາງແຫລມ ງຄູ່ໝັ້ນ ສາວເງີຍຂຶ້ນເບິ່ງເລິກເຂົ້າໄປໃນດວງຕາຄູ່ໝັ້ນ ຈິງຈັງ ຍິງສາວເບືອນໜ້າໜີ ຊົບລົງກັບເອິກກວ້າງ ເປັນສຸກ

ຣັດຈັ່ງໃດພອນຈຶ່ງຊິບອກພວກອຸດອນ, ສົມຖວິນ ຄຳໃສ ພວກຍິງສາວອື່ນທີ່ກຳລັງຫລົງໂຕ ລືມປະເພນີເກົ່າ ງເຮົາໄດ້ ? ຊິມີສຸພາບບຸຣຸດທ່ານໃດ ມາດຶງຂະເຈົ້າອອກ ຫລຸມ ຄືອ້າຍກິ່ງມາດຶງເອົາພອນຄືນມາພົບກັບຄວາມ າມ ແລະຄຸນຄ່າຂອງປະເພນີເຮົາ ຍິງກ່າວສຽງສັ່ນເມື່ອ ງຄິດເຖິງຄາວໄປມ່ອນ ໄ.ປີກນົກແລ້ວມີການຢອກ

● ອ່ານຕໍ່ໜ້າ 67 ●

## ບຸກຄົນສຳຄັນ

■ ຕໍ່ຈາກໜ້າ 50 ■

ໄດ້ໃຫ້ບົດຮຽນໃຫ້ແກ່ເຮົາຢ່າງຫລວງຫລາຍວ່າ ການຕໍ່ສູ້ ເພື່ອເອົາອິສຣະພາບນັ້ນບໍ່ຈຳເປັນທີ່ ຈະຕ້ອງໃຊ້ປືນຕລອດ ໄປເພາະນ້ຳໃຈທີ່ເຂັ້ມແຂງແລະຄວາມສາມັຄຄີ ຊຶ່ງກັນແລະ ກັນນັ້ນຍ່ອມຈະພາຊາດໄປສູ່ທີ່ປອດພັຍ.... ມັນສຳຄັນຢູ່ທີ່ ວ່າຄົນຜູ້ນຳນັ້ນມີຄວາມບໍຣິສຸດໃຈພຽງໃດ ບໍ່ແມ່ນວ່າຈະ ນັ່ງອອກແຕ່ຄຳສັ່ງຢ່າງດຽວຜູ້ນຳນັ້ນ ຕ້ອງເປັນຄົນເສັຽ ສລະທັ້ງກາຍແລະໃຈບໍ່ມົວເມົາໃນລາບຍົດຍອມກິນສຸກກິນ ດິບກັບເພື່ອນຮ່ວມຊາດຢ່າງບໍ່ຖືຕົວ...ແລະເຂົ້າເຖິງເພື່ອນ ຮ່ວມຊາດເຫລົ່ານັ້ນ ການຕໍ່ສູ້ຂອງຄົນເຖິງນີ້ຜູ້ຂຽນເຫັນ ພ້ອມກັບຂໍ້ຂຽນຂອງນັກການທູດທີ່ກ່າວໄວ້ວ່າ ມະນຸສຈະມີ ຊີວິດຢູ່ໃນໂລກໄດ້ດ້ວຍການຕໍ່ສູ້ຖ້າເຮົາບໍ່ຕໍ່ສູ້ກໍແປວ່າເຮົາ ຍອມຕາຍ....ເພາະການບໍ່ຕໍ່ສູ້ນັ້ນ ເປັນຄວາມຕາຍຢ່າງແທ້ ຈິງເປັນຄວາມຕາຍສຳຫລັບ ຊີວິດຂອງຄົນແຕ່ລະຄົນເປັນ ຄວາມຕາຍຕລອດເຖິງຊີວິດຂອງເຜົ່າພັນເຊື້ອຊາດ ແຕ່ລະ ຊາດ ການພຍາຍາມຫລົບຫລີກ ບໍ່ໃຫ້ຜົລໃນທາງປອດໄພ ຄວາມຈຳເປັນບັງຄັບໃຫ້ເຮົາຕ້ອງຕໍ່ສູ້ ການຫລົບໜີມີຜົນ ເທົ່າກັບການຍອມພ່າຍແພ້ຍອມຕາຍບໍ່ຜິດຫຍັງເລີຍ

ໃນການຕໍ່ສູ້ນັ້ນ ເຮົາຈະຕ້ອງມີເຄື່ອງມືສອງຢ່າງຄື ຄວາມອົດທົນທາງກາຍແລະໃຈ ທາງກາຍໝາຍເຖິງອະນາ ມັຍທີ່ເຮົາຈະຕ້ອງມີຢູ່ຢ່າງເຂັ້ມແຂງ ທາງໃຈໝາຍເຖິງ ຄວາມທົນຍາກລຳບາກທົນຢ່າງບໍ່ອ້າປາກຮ້ອງທຸກຫລືສແດງ ຄວາມອ່ອນໄຫວໃຫ້ໃຜເຫັນ ອີກແນວນຶ່ງຊຶ່ງເປັນຄວາມຈຳ ເປັນຄືມະນຸດເຮົາຕ້ອງມີເລັບຄືສັດ ມີເຄື່ອງມືຫລືລັກສນະໃນ ຕົວທີ່ສແດງໃຫ້ເຫັນວ່າ ຖ້າໃຜມາປະທຸສຮ້າຍເຮົາເຂົາ ເຂົາ ຈະຕ້ອງໄດ້ຮັບການຕອບແທນ ບໍ່ແມ່ນປະທຸສຮ້າຍໄດ້ລ້າໆ ເຣື່ອງເລັບນີ້ເປັນເຄື່ອງມືປ້ອງກັນຢ່າງດີທີ່ສຸດ. □

# ບໍຣິສັດ ດາຍດົງ

82–84 ຖນົນຫລວງພຣະບາງ ນະຄອນວຽງຈັນທນ໌ ໂທຣ. 2279

# SOCIETE DAIDONG

82–84 RUE LAUNGPRABANG VIENTIANE LAOS

*ຜູ້ຜລິດ ແລະ ຈຳຫນ່າຍ*

- ☐ ນ້ຳກ້ອນ
- ☐ ໂຊດາຈິດ
- ☐ ນ້ຳຫວານ, ນ້ຳອັດລົມ

*ບໍຣິການ* ▲ ຂາຍຍ່ອຍ ຕາມສົ່ງເຖິງເຮືອນ

▲ ຂາຍສົ່ງ ທັງໃນວຽງຈັນທນ໌ ແລະ ທົ່ວຣາຊອານາຈັກ

*ສົນໃຈ* ● ເຊີນຕິດຕໍ່ແລະສອບຖາມໄດ້ທີ່ ບໍຣິສັດເອງ ຕາມທີ່ຢູ່ຂ້າງເທິງນີ້

ແລະໃນໂອກາດດຽວກັນນີ້ ທາງບໍຣິສັດຂໍສແດງຄວາມຂອບອົກຂອບໃຈມາຍັງທຸກທ່ານ

ທີ່ໄດ້ໃຫ້ຄວາມອຸປະການະແລະສນັບສນຸນຜລິດຜົນຂອງບໍຣິສັດຕລອດມາ

"ປ່ອຍ ໆ ໆ ມືຂ້ອຍແມ້" ຍິງສາວຮ້ອງທັ
ງມືອອກ ບອກບໍ່ຖືກເອົາໂລດວ່າ ຮູ້ສຶກຢ່າງໃດ
ຖຢຸດຢູ່ຕໍ່ໜ້າເຮືອນຍິງສາວໄຂປະຕູຣົຖແລ່ນຂຶ້ນ ບໍ່ມີໃດ
ມທີ່ຢ່າງທີ່ຄອຍຖ້າທ່ານສຸພາບບຸຣຸດມາໄວ້ໃຫ້ສຽງບາດຕີນ
ມນ້ຳມາຕິດໆ.... ສົມພອນບໍ່ຍອມຫັນມາເບິ່ງເລີຍແຕ່ມີ
ະພັນທ້ອງອາຫານໄປເທົ່ານັ້ນ ... ກໍຮູ້ໂຕວ່າຖືກດຶງເຂົ້າໄປ
າອົກກວ້າງຂອງຝ່າຍນຶ່ງ ເງີຍໜ້າຂຶ້ນຫວັງຕໍ່ສູ້ໄວເກີນ
ວ່າຈະປ້ອງກັນໂຕ ຮິມຝີປາກທີ່ອວບອີ່ມກໍໄດ້ຮັບການສັມ
ຢ່າງອ່ອນນົ້ມຈາກຝ່າຍຊາຍ ມັນຊາບຊຶ້ງແລະອາບ
ານຫົວໃຈຢ່າງບອກບໍ່ຖືກແກ້ມທີ່ເປັນນວນງາມກໍຖືກສອງ
ຂ້າປະຄອງຂຶ້ນຮັບການຈຸມພິດທຸກບ່ອນ ຍິງສາວສະບັດ
າ້ ພົ້ນຈາກໂອ້ງມືຫັນຫລັງແລ່ນຂຶ້ນເມືອສຽງຫົວໄລ່ຫລັງ
ວ່າ "ຝັນດີ ສົມພອນ ຮິ ຮິ !" ອັດປະຕູຫ້ອງນອນຢ່າງ
ມັນໜາ ຍິງສາວພາໂຕມາຢືນຢູ່ຕໍ່ໜ້າ ແວ່ນໃຫຍ່ອີກ
ອນຶ່ງ ບໍ່ແມ່ນເພື່ອແຮງຄວາມງາມ ດີກ່ອນຈະອອກຈາກ
ງໄປແຕ່ແຍງເພື່ອເບິ່ງຄວາມຜິດປົກຕິຂອງໂຕ ເຄີຍຖືກ
ກອດຈາກພວກໜຸ່ມເຕັ້ນຣຳກາງແສງໄຟກາງຊຸມຊົນແລະ
ງເພງ ອັນນີ້ເຂົາຈູບປາກແກ້ມໂອ້ຍ....ໃບໜ້ານາງແດງ
ດວງຕາແວວວາວໄປດ້ວຍຢາດນ້ຳຕາແຄ້ນໃຈຢ່າງບອກ
າ ຮິ ຄົນບ້າໆ ດ່າເຂົາຢູ່ແທ້ໆກັບມາເຮັດແບບນີ້ ດູຖູກ
ປ່າງຮ້າຍກາດ ຍິງສາວຄິດໄປພາງປ່ຽນເຄື່ອງນອນນ້າງ
ຍັນຊິງນາງງາມຈັກະວານອອກ ເຮັດຄືເຮົາຊົ່ວປານຜູ້
າກິນຮິ
າໃຫລອາບແກ້ມ ສຽງເຍີຍຕ່າງດັງກ້ອງຫູຢ້ານພໍ່ບໍ່ໄດ້
ອງ ຮິ ນ້ອນຊິຖາມພໍ່ເບິ່ງວ່າ ຢາກໄດ້ຈັກແສນ ຄວາມ
າລາຍຢ່າງສັບສົນກັນ ຍິງສາວສະອື້ນໃຫ້ກັບໝອນ ຮື
ແຕ່ໃດໆມາສົມພອນ ບໍ່ເຄີຍວ່າຈະເສັຽນ້ຳຕາຍ້ອນ

ອີຕາດອກເຕີມເອງ ເຮົາຈຶ່ງຮ້ອງໃຫ້ປານນີ້ ນອນຫລັບດ້ວຍ
ຄວາມເມື່ອຍອ່ອນ ມາຮູ້ເມື່ອດຶງກໍເປັນເວລາທີ່ແສງແດດສີ
ເຫລືອງ ສອດສ່ອງເຂົ້າມາທາງປ່ອງຢ້ຽມຫົວບ່ອນນອນ ຍິງ
ສາວນຶກຄຶງ ຫັນໜ້າອອກໄປສືບອາກາດບໍຣິສຸດຂອງຍາມ
ຮຸ່ງອາຣຸນ ຄວາມຄິດລ່ອງລອຍໄປ ກຸຫລາບງາມສອງສາມ
ດອກ ກໍອວດຄວາມງາມຢູ່ຢ່າງຈອງຫອງ ສົມກຸຫລາບຈອ
ຫອງ ໄດ້ເພາະມັນບໍ່ຍອມໃຫ້ໃຜເດັດງ່າຍໆ ແລ້ວເຮົາລະ
ເປັນຄົນທີ່ໃຜຢາກເຮັດຈັ່ງໃດກະໄດ້ ເຈັບແສບເຂົ້າໄປທາງ
ໃນ ພວກນັ້ນບໍ່ໃຊ່ຊິມາເປັນຜົວເຈົ້າ ເຂົາກະບໍ່ໜ້າໂງ່ລະຕີ
ໄດ້ກອດສາວງາມ ມີແມວໃດອີກມ່າອັບອາຍກວ່ານີ້ ສຽງ
ເວົ້າຍັງດັງກ້ອງໃນຫູ ເຂົາເປັນຫຍັງບໍ່ວ່າ ພອນຂ້ອຍຫວງ
ເຈົ້ານະ ບໍ່ຢາກໃຫ້ໃຜແຕະຕ້ອງເຈົ້ານອກຈາກຂ້ອຍ ເວົ້າ
ແບບນີ້ສົມພອນກໍຈະບໍ່ຍອມເຕັ້ນຣຳກັບໃຜດອກ ອັນນີ້ຫຍັງ

"ກ໊ອກໆໆ ກ໊ອກໆ" ສຽງເຄາະປະຕູຫ້ອງຢຸດຄວາມ
ຄິດທີ່ສັບສົນ ດ້ວຍດວງຕາທີ່ບວມຊ້ຳ ຍິງສາວລົງຈາກຕຽງ
ໄປໄຂປະຕູ ຮ້ອງຖາມນຳວ່າ

"ໃຜ ປ້າວັນດີຫວະ" ບໍດດຽວ ພານປະຕູໄຂອອກ
ຮ່າງຜູ້ເຄາະຢືນສູງສງ່າຢູ່ຕໍ່ໜ້າ
ທັນທີທີ່ພົບໜ້າຄວາມແຄ້ນແໜ້ນໃຈຕ່າງໆກໍອັ້ງ ຂຶ້ນຈົນ
ສຸດທີ່ຈະທົນທານໄດ້ ສຽງຫ້າວໆຖາມໃຫ້ສະດຸ້ງວ່າ

"ສະບາຍດີຕອນເຊົ້າສົມພອນ" ຍິງສາວຖອຍຫລັງ
ນ້ຳຕາທີ່ຄິດວ່າມັນໝົດຕັ້ງແຕ່ຄືນນີ້ກັບມາລົ່ຢູ່ເຕົ້າຕາ

"ອ້າວພອນ ນັ້ນນ້ອງເປັນຫຍັງ! ນ້ອງ ຮື" ເຂົາເອີ້ນ
ເຮົາວ່ານ້ອງ ຍິງສາວບໍ່ຍອມຕອບຫັນຫລັງໃຫ້ ຈຶ່ງບໍ່ຮູ້ວ່າ
ດອກເຕີ້ໜຸ່ມໃດກ້າວຂາເຂົ້າມາໃນຫ້ອງຂອງນາງ

"ພອນນ້ອງ ນອນບໍ່ຫລັບຫວະ" ຊາຍໜຸ່ມຖາມສຽງ
ມ່ວນຄືບໍ່ມີເຣື່ອງບາດໝາງກັນ ແຕ່ສົມພອນບໍ່ຟັງເສັຽແລວ
ນາງຮ້ອງໃສ່ວ່າ

"ຂໍເຊີນອອກຈາກຫ້ອງຂ້ອຍ ອອກໄປດຽວນີ້" ຮ້າງນ້ອຍໃນຊຸດສົ້ງເສື້ອນອນສີເຫລືອງສັ້ນນ້ອຍໆ ເບິ່ງແລ້ວນາງຈ່າງບໍຣິສຸດ ພູດຜ່ອງຄືດັ່ງດອກກຸຫລາບຈູມ....ບໍ່ມີແປ່ງຜູ້ກາຍໃກ້ເຖື່ອ ຜົມຍາວລະລົງກາງຫລັງໃບຫນ້າຂາວຜ່ອງປາສຈາກສິ່ງຕົບແຕ່ງ ຂອບຕາແດງຊ້ຳເພາະຜ່ານການຮ້ອງໃຫ້ຊາຍຫນຸ່ມກ້າວເຂົ້າໄປອີກບໍ່ຄິດຢ້ານຝ່າມືນ້ອຍ ທີ່ພ້ອມຈະຟາດລົງບົນໃບຫນ້າເຂົາ

"ນ້ອງຄຽດໃຫ້ອ້າຍຫລາຍປານນີ້ຫວະ !"

"ຍັງຈະມີຫນ້າມາຖາມອີກ" ຍິງສາວຮ້ອງຢູ່ໃນໃຈແຕ່ຕອບອອກໄປສຽງຈິງຈັງວ່າ

"ສົມຄວນແລ້ວທີ່ເອົາໃຫ້ຂ້ອຍແບບນີ້ ... ຖືກຫມົດທຸກຢ່າງ ຂ້ອຍເປັນຄົນລືມປະເພນີ ລືມໂຕ ບໍ່ມີຣາຄາຫຍັງ ? ໃຜຢາກລ່ວງເກີນຈັ່ງໃດກໍໄດ້" ຊາຍນຸ່ມຍິ້ມເພາະເຂົ້າໃຈໃນຄວາມເວົ້າສຽດຂອງນາງ

"ພອນ ອ້າຍ.... ອ້າຍຂໍໂທດນຳຄົນນີ້ ນ້ອງອອດດີໂພດ !" ປີບປ່າໄລ່ຄ່ອຍໆຢ່າງເອົາໃຈ ຍິງສາວກັດແຂ້ວໄວ້ເພື່ອກັ້ນກ້ອນສະອື້ນທີ່ແລ່ນຂຶ້ນມາຈຸກຢູ່ຄໍຫອຍ

"ພອນ ເອີ້....ອ້າຍ....ເຮົາສິແຕ່ງດອງກັນໃນເດືອນຫນ້ານີ້ ນ້ອງຕຽມເຄື່ອງທັນບໍ່...."

"ແຕ່ງດອງເດືອນຫນ້າ....ຣື ?" ສົມພອນຄິດຢ່າງແຄ້ນໆວ່າເຂົາຫາຄ່າດອງບໍ່ໄດ້ ແລ້ວຍັງຈະມາແຕ່ງງານຫຍັງອີກແລ້ວເຣື່ອງຫຍັງຊິແຕ່ງໃນເມື່ອບໍ່ເຂົ້າໃຈກັນເຊັ່ນນີ້ "ຂ້ອຍຊິເອົາກັບຜູ້ທີ່ຂ້ອຍມັກ ແລະຜູ້ທີ່ເຂົາຮັກຂ້ອຍເທົ່ານັ້ນ !" ນາງຫັນຫນ້າໄປເວົ້າທາງອື່ນຢ່າງງອນໆ

" ອ້າວ ແລ້ວກັນ ແລ້ວຜູ້ນີ້ເດ ສົມພອນບໍ່ຮັກຫວະ ? ຊາຍນຸ່ມຖາມກັ້ນຫົວເຣັດສຽງເສົ້າໆ

"ເຣື່ອງອີ່ຫຍັງຂ້ອຍຊິໄປຮັກຄົນບໍ່ມີຫົວໃຈ ?" ຜົມງາມຖືກລູບຄ່ອຍໆ ຍິງສາວປ່ອຍໃຫ້ເຂົາເຮັດຕາມໃຈຄືຈັ່ງຖືນົມສະກົດ

"ແມ່ນແລ້ວ ຄົນຜູ້ນີ້ບໍ່ມີຫົວໃຈ ເພາະເອົາຝາກໄວ້ກັ
ສົມພອນແຕ່ຄົນພຸ້ນ !"

"ຣື !" ຍິງສາວຮ້ອງຄ່ອຍໆ.... ຫັນຫນ້າມາເບິ່ງຜູ້ເວົ
ກໍພົບສາຍຕາປລາດ ເຕັມປ່ຽມດ້ວຍຄວາມຮັກຈ້ອງເບິ່ງຢູ່

"ພອນເປັນດອກໄມ້ບໍ່ມີຫນາມໃຜໆຢາກເດັດກໍໄດ້
ຍິງສາວເວົ້າສຽງສັ່ນ ບໍ່ຫມົດຄວາມນ້ອຍໃຈທີ່ຖືກຂົ່ມເຫ

"ນັ້ນຄົນເບິ່ງຊື່ໆ ...ຈຶ່ງບໍ່ຮູ້ວ່າມີຫນາມແຫລມ....ຜູ້
ເດັດພຸ້ນຈຶ່ງຮູ້...ນີ້ຮອຍຫຍັງນີ້ ?...." ຊາຍຫນຸ່ມ ຊີ້ໃຫ້ຮອ
ມຸດບົນໃບຫນ້າລາວ....

"ແສບຫມົດຄົນ....ເຮັດໃຫ້ ຄິດຮອດເຈົ້າຂອງ ເລັ
ນອນກະບໍ່ຫລັບ" ຍິງສາວຫັນມາ ສິ້ນແລ້ວຄວາມພະຍົດຕ່
ວ່າໃນທີ່ສຸດນາງກໍພົບກັບຜູ້ທີ່ຈະໃຫ້ຄວາມກຸ້ມກັນ....ປົກຄ
ຜູ້ຍິງນະບໍ່ແມ່ນຈະເອົາຄູ່ດອງທີ່ ເຄີຽ ປອກ ເຫລັນ ຄື ສ່ຽ
ດອກ....ເຂົາຕ້ອງການຜູ້ໃຫຍ່ກວ່າ....ມີທຸກ ສິ່ງ ທຸກ ຢ່າງ
ເຫນືອກວ່າ....

"ພອນ" ....ເອີ....ອ້າຍກໍ່....ພອນຮູ້ແລ້ວວ່າຕລອດ
ລາ ທີ່ຜ່ານມານັ້ນ ພອນບໍ່ສາມາຖຕັດສິນໃຈກັບໃຜໄດ້ຍ້ອ
ອ້າຍນີ້ເອງ....ເພາະພອນຄິດເຫັນອ້າຍແຕ່ກີ້ ທີ່ເອົາອົກເອົ
ໃຈພອນ....ບາງເທື່ອກໍຂັດຂວາງບໍ່ໃຫ້ພອນເຮັດ ແນວ ບໍ່
ພອກນັ້ນນະ... ມີແຕ່ພານັ້ນເອົາໃຈ.... ຍ້ອງພອນ.... ຍອ
ໃຫ້ພອນທຸກຢ່າງບໍ່ວ່າເຮັດຫຍັງ....ພອນຈຶ່ງໄດ້ ໃຈເອົາແ
ໃຈໂຕ....ບໍ່ຟັງສຽງໃຜ

ບັດນີ້ພອນຮູ້ແລ້ວວ່າ....ພອນຕ້ອງການຜູ້ນຳເຣືອ
ວິຕພອນ....ເພາະໂລກທຸກວັນນີ້ວຸ້ນວາຍຫລາຍ ພອນບໍ່ສ
ສາມາຖພາເຣືອຜ່ານອຸຣະສູມໄປໄດ້ຜູ້ດຽວ....ເບິ່ງແຕ່ ຄົນ
ຖ້າອ້າຍກໍ່ງບໍ່ໄປຊ່ອຍພອນ....ພອນຄົງ....ບໍ່

" ເຈົ້າເວົ້າເຣື່ອງທີ່ຜ່ານມາແລ້ວພອນ.... ອ້າຍບໍ່ຖືດອກ ໃຫ້ລືມມັນ....!" ຊາຍໜຸ່ມເອົາມືໂອບກອດຮ່າງຄູ່ໝັ້ນສາວ ໄວ້ຢ່າງຖນຸຖນອມ

" ພອນບໍ່ມີມື້ລືມດອກອ້າຍກິ່ງ ພອນຈະຂໍຈື່ໄວ້ຈົນ ມຕາຍ ຈື່ໄວ້ເປັນບົດຮຽນ ສຳຣັບການຫລົງໂຕ ພັຍອັນ ຣາຍຕ່າງໆ ອ້າຍກິ່ງ ພອນ ພອນຕ້ອງການຜູ້ຈູງພອນຕ່າງ ກບໍ່ແມ່ນຜູ້ທີ່ພອນຈະຈູງເຂົາ"

" ອ່າ ພອນ ນ້ອງຄົງເຂົ້າໃຈອ້າຍແລ້ວແມ່ນບໍ່ທີ່ ຍເຣັດທຸກສິ່ງທຸກຢ່າງລົງໄປນ໋ະເພື່ອນ້ອງຄົນດຽວເປັນທັນ ຢູ່ແລ້ວ ຄືຄວາມໂບຮານເພີ່ນວ່າ ເອີ ຜົວເປັນຊ້າງ າໜ້າພາໄປ ເມັຽເປັນຊ້າງເທົ້າຫລັງຄອຍຕາມ ແຕ່ຖ້າ ໃດເທົ້ານຶ່ງພິການຊ້າງນັ້ນກໍ່ຈະຍ່າງໄປບໍ່ໄດ້ ດີກັນໃດ່ ພອນ"

"ເອີ ພອນຢາກຮູ້ວ່າອ້າຍກິ່ງມາຮອດບ້ານແຕ່ທ່ອງ ພໍ່ແມ່ບໍ່ບອກຫຍັງພອນ ຄັນຮູ້ພອນກະບໍ່ມີຊີໄປ" ເອີ ສາວເວົ້າສຽງໃສ

"ຊິໄປຫັຽວແມ່ນບໍ່ ດອກເຕີຣ໌ຈັບປາຍຄາງແຫລມ ງຄູ່ໝັ້ນ ສາວເງີຍຂຶ້ນເບິ່ງເລິກເຂົ້າໄປໃນດວງຕາຄູ່ນັ້ນ ຈິງຈັງ ຍິ່ງສາວເບືອນໜ້າໜີ ຊົບລົງກັບເອິກກວ້າງ ເປັນສຸກ

ຣັດຈັ່ງໃດພອນຈຶ່ງຊິບອກພວກລຸງອອນ, ສົມຖວິນ ຄຳໃສ ພວກຍິງສາວອື່ນທີ່ກຳລັງຫລົງໂຕ ລືມປະເພນີເກົ່າ ເຮົາໃດ້ ? ຊິມີສຸພາບບຸຣຸດທ່ານໃດ ມາດຶງຂະເຈົ້າອອກ ຫລຸມ ຄືອ້າຍກິ່ງມາດຶງເອົາພອນຄືນມາພົບກັບຄວາມ າມ ແລະຄຸນຄ່າຂອງປະເພນີເຮົາ ຍິ່ງກ່າວສຽງສັ່ນເມື່ອ ເດີດເຖິງຄາວໄປນ່ອນ ໄດ້ປົກນົກແລ້ວມີການຍອກ

● ອ່ານຕໍ່ໜ້າ 67 ●

## ບຸກຄົລສຳຄັນ

■ ຕໍ່ຈາກໜ້າ 50 ■

ໄດ້ໃຫ້ບົດຮຽນໃຫ້ແກ່ເຮົາຢ່າງຫລວງຫລາຍວ່າ ການຕໍ່ສູ້ ເພື່ອເອົາອິສຣະພາບນັ້ນບໍ່ຈຳເປັນທີ່ ຈະຕ້ອງໃຊ້ປືນຕລອດ ໄປເພາະນ້ຳໃຈທີ່ເຂັ້ມແຂງແລະຄວາມສາມັຄຄີ ຈິ່ງກັນແລະ ກັນນັ້ນຍ່ອມຈະພາຊາດໄປສູ່ທີ່ປອດພັຍ.... ມັນສຳຄັນຢູ່ທີ່ ວ່າຄົນຜູ້ນຳນັ້ນມີຄວາມບໍຣິສຸດໃຈພຽງໃດ ບໍ່ແມ່ນວ່າຈະ ມຸ້ງອອກແຕ່ຄຳສັ່ງຢ່າງດຽວຜູ້ນຳນັ້ນ, ຕ້ອງເປັນຄົນເສັຽ ສລະທັ້ງກາຍແລະໃຈບໍ່ມົວເມົາໃນລາບຍົດຍອມກິນສຸກກິນ ດິບກັບເພື່ອນຮ່ວມຊາດຢ່າງບໍ່ຖືຕົວ...ແລະເຂົ້າເຖິງເພື່ອນ ຮ່ວມຊາດເຫລົ່ານັ້ນ ການຕໍ່ສູ້ຂອງຄົນເຖິງນີ້ຜູ້ຂຽນເຫັນ ພ້ອມກັບຂໍ້ຂຽນຂອງນັກການທູດທີ່ກ່າວໄວ້ວ່າ ມະນຸສຈະມີ ຊີວິດຢູ່ໃນໂລກໄດ້ດ້ວຍການຕໍ່ສູ້ຖ້າເຮົາບໍ່ຕໍ່ສູ້ກໍ່ແປວ່າເຮົາ ຍອມຕາຍ....ເພາະການບໍ່ຕໍ່ສູ້ນັ້ນ ເປັນຄວາມຕາຍຢ່າງແທ້ ຈິງເປັນຄວາມຕາຍສຳຫລັບ ຊີວິດຂອງຄົນແຕ່ລະຄົນເປັນ ຄວາມຕາຍຕລອດເຖິງຊີວິດຂອງເຜົ່າພັນເຊື້ອຊາຕ ແຕ່ລະ ຊາດ ການພຍາຍາມຫລົບຫລີກ ບໍ່ໃຫ້ຜົລໃນທາງປອດໃພ ຄວາມຈຳເປັນບັງຄັບໃຫ້ເຮົາຕ້ອງຕໍ່ສູ້ ການຫລົບໜີນີ້ຜົນ ເທົ່າກັບການຍອມພ່າຍແພ້ຍອມຕາຍບໍ່ຜິດຫຍັງເລີຍ

ໃນການຕໍ່ສູ້ນັ້ນ ເຮົາຈະຕ້ອງມີເຄື່ອງມືສອງຢ່າງຄື ຄວາມອົດທົນທາງກາຍແລະໃຈ ທາງກາຍໝາຍເຖິງອະນາ ມັຍທີ່ເຮົາຈະຕ້ອງມີຢູ່ຢ່າງເຂັ້ມແຂງ ທາງໃຈໝາຍເຖິງ ຄວາມທົນຍາກລຳບາກທົນຢ່າງບໍ່ວ່າປາກຮ້ອງທຸກຫລືສແດງ ຄວາມອ່ອນໄຫວໃຫ້ໃຜເຫັນ ອີກແນວນຶ່ງຈຶ່ງເປັນຄວາມຈຳ ເປັນທີ່ມະນຸດເຮົາຕ້ອງມີເລັບຄືສັດ ມີເຄື່ອງມືຫລືລັກສນະໃນ ຕົວທີ່ສແດງໃຫ້ເຫັນວ່າ ຖ້າໃຜມາປະທຸສຮ້າຍເຮົາເຂົາ ເຂົາ ຈະຕ້ອງໄດ້ຮັບການຕອບແທນ ບໍ່ແມ່ນປະທຸສຮ້າຍໄດ້ລ້າໆ ເຣື່ອງເລັບນີ້ເປັນເຄື່ອງມືປ້ອງກັນຢ່າງດີທີ່ສຸດ. □

# ບໍຣິສັດ ດາຍດົງ

82–84 ຖຸນົນຫລວງພຣະບາງ ນະຄອນວຽງຈັນທນ໌ ໂທຣ. 2279

# SOCIETE DAIDONG

82–84 RUE LAUNGPRABANG VIENTIANE LAOS

*ຜູ້ຜລິດ ແລະ ຈຳໜ່າຍ*

- ☐ ມ້າກ້ອມ
- ☐ ໂຊດາຈິດ
- ☐ ມ້າທວາມ, ມ້າອັດລົມ

*ບໍຣິການ* ▲ ຂາຍຍ່ອຍ ຕາມສົ່ງເຖິງເຮືອນ

▲ ຂາຍສົ່ງ ທັ້ງໃນວຽງຈັນທນ໌ ແລະ ທົ່ວຣາຊອານາຈັກ

*ສົນໃຈ* ● ເຊີນຕິດຕໍ່ແລະສອບຖາມໄດ້ທີ່ ບໍຣິສັດເອງ ຕາມທີ່ຢູ່ຂ້າງເທິງນີ້

ແລະໃນໂອກາດດຽວກັນນີ້ ທາງບໍຣິສັດຂໍສແດງຄວາມຂອບອົກຂອບໃຈມາຍັງທຸກທ່ານ

ທີ່ໄດ້ໃຫ້ຄວາມອຸປະກາຣະແລະສນັບສນຸນຜລິດພົນຂອງບໍຣິສັດຕລອດມາ

# ແມ່

■ ຕໍ່ຈາກໜ້າ 3 ■

ຈະຊອກຫາເສື້ອຜ້າອັນໜານາມາຫຸ້ມຮ່າງກາຍ ໃຫ້ແກ່ເຮົາ ເວລາເຈັບໄຂ້....ນາງກໍມີຄວາມຮ້ອນໃຈໃນການຮັກສາພຍາບານໃຫ້ແກ່ເຮົາ....ອ້ອມກອດຂອງນາງຊ່າງມີຄວາມອົບອຸ່ນ ແລະຄອຍອຸ້ມເຮົາດ້ວຍຄວາມທະນຸຖນອມ — ຂນະທີ່ເຮົາຮ້ອງໃຫ້ກໍແມ່ນນາງນັ້ນເອງເປັນຜູ່ເຊັດນ້ຳຕາ

ຕອນນັ້ນເຮົາບໍ່ຮູ້ດອກວ່າ....ການທີ່ນາງກະທຳຕໍ່ເຮົາຢ່າງນັ້ນເພື່ອຜົນປະໂຍດອັນໃດກັນ... ເປັນດ້ວຍເຫດໃດນາງຈຶ່ງຮັກແພງເຮົາປານແກ້ວຕາຂອງນາງເອງ ເມື່ອເຮົາຮູ້ຄວາມຄົນແລ້ວເຮົາຈຶ່ງເອີ້ນນາງນັ້ນວ່າ... "ແມ່"

....ຄຳວ່າແມ່.... ມັນຊ່າງມີຄວາມໝາຍອັນເລິກແລບ ຄຸນງາມຄວາມດີທີ່ແມ່ເຮັດຕໍ່ລູກໂດຍບໍ່ຫວັງສິ່ງຕອບແທນນັ້ນ ແມ່ນເປັນການກະທຳຂອງມະນຸດຜູ່ມີໃຈປະເສີດໂດຍແທ້ ບຸນຄຸນທີ່ນາງສ້າງໄວ້ຍາກຍິ່ງທີ່ເຮົາຈະລືມໄດ້ຕລອດຈົນຊົ່ວຊີວິດ ນ້ຳໜັກຂອງທ່ອນຄຳຫລາຍໝື່ນພັນກິໂລ ເມື່ອນຳມາປຽບທຽບນ້ຳໜັກຄວາມດີທີ່ແມ່ສ້າງໄວ້ໃຫ້ແກ່ເຮົາແລ້ວ ເບິ່ງຄືວ່ານ້ຳໜັກຂອງທ່ອນຄຳນັ້ນເກືອບຈະໄຮ້ຄ່າ....ແມ່ນແລ້ວ.... ຊົ່ວຊີວິດຂອງຄົນນຶ່ງໆນັ້ນເຮົາມີແມ່ໄດ້ພຽງແຕ່ຄົນດຽວ ! ເຮົາມີຄວາມພາກພູມໃຈທີ່ເອີ້ນນາງວ່າແມ່.... ແລະນາງກໍມີຄວາມດີໃຈຢ່າງສຸດແສນທີ່ເອີ້ນເຮົາວ່າ.... "ລູກ"

ແມ່ກັບລູກເປັນສິ່ງອັນສັກສິດ ! ຊຶ່ງບໍ່ມີອຳນາດອັນໃດທີ່ຈະແຂງກ້າພໍທີ່ຈະດຶງແຍກສາຍເລືອດ ຣະຫວ່າງແມ່ກັບລູກໃຫ້ແຍກອອກຈາກກັນໄດ້.... ສາຍເລືອດທີ່ເກາະກ້ຽວພັວພັນຕິດຕໍ່ກັນນັ້ນເປັນສາຍເລືອດແທ້ ຊຶ່ງເຮົາຜູ່ເປັນລູກຈະຫາບໍ່ໄດ້ອີກແລ້ວໃນພື້ນພິພົບນີ້...ທຸກຄັ້ງທີ່ເຮົາກ້າວຍ່າງໄປສູ່ສຖານທີ່ໃດກໍຕາມ ນ້ຳໃຈຂອງແມ່ກໍໄດ້ສົ່ງກະແສຈິດອະທິຖານພາວະນາໃຫ້ລູກຈົ່ງພົ້ນຈາກໄພຍພັຍໃຫ້ມີໃຈຊຳນະໝູ່ມານທຸກກໍຣະນີໄປ.... ນ້ຳໃຈອັນປະເສີດສິ່ງນີ້ເຮົາຫາບໍ່ໄດ້ເລີຍນອກຈາກນ້ຳໃຈຂອງແມ່

*"ແມ່"*

ເປັນຄວາມເວົ້າໂດດໆ....ແຕ່ກໍມີຄວາມໝາຍເຫລືອຄະນາ ນາງເປັນທັງເທບທິດາ....ນາງເປັນຜູ່ ມີຄວາມເມຕຕາກະຣຸນາ....ນາງເປັນຣາຊິນີທີ່ສູງສັກນາງເປັນຍອດຊີວິຕ ແລະນາງເປັນຍອດບູຊາຂອງລູກ....ຄວາມຮັກຂອງນາງທີ່ມີຕໍ່ລູກຈະບໍ່ມີວັນເຫືອດຫາຍໄປຈາກຫົວໃຈ ຂອງນາງໄດ້ ແມ່ນແຕ່ນ້ອຍຄວາມເປັນຫ່ວງຕໍ່ລູກ ບໍ່ມີວັນສ້ຽງສຸດໄປຈາກຫົວໃຈຂອງນາງ ທຸກຄັ້ງເມື່ອໄດ້ຮູ້ຂ່າວວ່າລູກຢູ່ສຸກສບາຍດີມີໃຊສາມາຖສ້າງຖານະໄດ້ເທົ່າທຽມກັບເພື່ອນມນຸສຄົນອື່ນໆ ນາງກໍຍົກມືໄຫວ້ອ້ອນຕໍ່ເທວະດາຟ້າດິນຕລອດເຖິງສິ່ງສັກສິດທັງຫລາຍໃນສາກົລໂລກ ຈົ່ງຊ່ວຍປົກປ້ອງຮັກສາລູກຂອງຕົນຮັກສາຄຸນງາມຄວາມດີນັ້ນໃຫ້ໄປຕລອດຮອດຝັ່ງ ! ຮອຍຍິ້ມອັນສົດໃສຂອງນາງກໍຄືວັນແຫ່ງຄວາມສຸກຂອງລູກນັ້ນເອງ

*ແມ່ !*

ນາງເປັນແມ່ພຣະ ໃຫ້ຄວາມເຫັນໃຈແລະໃຫ້ຄວາມຍຸຕິທັມ ແກ່ລູກສເມີ ນາງບໍ່ມີຫົວໃຈຄຽດແຄ້ນຕໍ່ລູກເລີຍ ເຖິງແມ່ນວ່າລູກຈະລ່ວງເກີນສ້າງຄວາມກະທົບກະເທືອນໃຈມາໃຫ້ແກ່ນາງປານໃດກໍຕາມ ນາງກໍຍັງຫວັງຢູ່ສເມີວ່າ ລູກຈະເຂົ້າໃຈຊີວິດດີຍິ່ງຂຶ້ນແລະຈະປັບປຸງຕົວເອງໄດ້ໃນວັນນຶ່ງ ເຈຕນາຂອງນາງທີ່ມີຕໍ່ລູກມີແຕ່ເຈຕນາອັນບໍຣິສຸດຜຸດຜ່ອງ ແລະແຈ່ມໃສ..ສາຍຕາຂອງນາງເບິ່ງລູກດ້ວຍຄວາມຮັກແພງທີ່ເກາະສນິດແໜ້ນຢູ່ໃນຂົ້ວຫົວໃຈຂອງນາງຕລອດໄປ.... ຮັກນີ້ເປັນຮັກບໍຣິສຸດໃຈແລະເປັນຄວາມຮັກແທ້ ທີ່ຊົ່ວຊີວິດ

**ຂອງລູກໄດ້ອັບຈາກນາງ.....ທຸກຄັ້ງຄາວເມື່ອ ມີຂ່າວວ່າລູກ ຕົກທຸກໄດ້ຍາກນາງກໍຈະເປັນຕົວຕັ້ງຕົວຕີຣີບຟ້າວຟັ່ງ ມາ ຊ່ວຍເຫລືອລູກໂດຍທັນທີ.....ນາງຈະຊ່ວຍເຫລືອລູກໄປຈົນ ກວ່າລູກກ້າວໄປສູ່ສຖານທີ່ປອດພັຍ... ແລະເມື່ອນັ້ນລະນາງ ຈຶ່ງມີຄວາມພໍໃຈແລະດີໃຈຢ່າງສຸດແສນ...**

*ແມ່ !*

ໃນເມື່ອລູກກ້າວໄປສູ່ເສັ້ນທາງທີ່ຜິດພາດຂາດ ນ້ຳ ຕາຕົກ ນາງກໍຈະເປັນຄົນທຳອິດເຂົ້າມາຈົດຊ່ວຍປອບໃຈ ແລະຄອຍເຊັດນ້ຳຕາໃຫ້ຫລືບາງຄ້າລູກກາຍເປັນຜູ້ຮ້າຍ ຂ້າ ຄົນຕ້ອງໂທດ ຕາມຄວາມເນື່ອງທາຄວາມເຫັນໃຈຈາກໃຜບໍ່ ໄດ້ ສາຍຕາຂອງລູກກໍຈະເຫລືອບໄປເຫັນແມ່ຄອຍຢືນ ເບິ່ງດ້ວຍໃບໜ້າທີ່ນອງດ້ວຍນ້ຳຕາ ...ຈະເຫັນແລ້ວວ່ານາງ ເປັນຄົນຫວັງດີຕໍ່ລູກແລະໃຫ້ອະພັຍແກ່ລູກ ຈົນ ເຖິງວິນາທີ ສຸດທ້າຍ....

ບຸນຄຸນເຫລົ່ານີ້ ເຮົາຈະທົດແທນແນວໃດຈຶ່ງຈະສາ ສົມກັບນາງທີ່ໄດ້ມີຕໍ່ລູກ ! ຂໍໃຫ້ສັກປະເສີດທັງຫລາຍຈົ່ງ ພາກັນສລະເວລາກ່ອນນອນເພື່ອກຣາບຣະລຶກເຖິງບຸນ ຄຸນ ຂອງນາງເປັນປະຈຳທຸກວັນ ຢ່າງນ້ອຍທີ່ສຸດກໍເປັນການ ສະ ແດງຄວາມຄາຣວະທີ່ລູກຄວນມີຕໍ່ແມ່ ! ... ແມ່... ຍອດບູ ຊາຂອງລູກ ! ■

## ວິຈາຣກາຣເມືອງໃນປະເທສ

● ຕໍ່ຈາກໜ້າ 6 ●

ໃນທັສນະຂອງຂ້າພະເຈົ້າເຫັນວ່າ ກຸ່ມຄອມ ເລືອກວິທີການ ອັນທີ່ສອງຫລາຍກວ່າວິທີອື່ນ ເພາ ເປັນການປະຕິບັດທີ່ກົງກັນກັບຄຳສອນຂອງລັດທິຄອມ

ດັ່ງນັ້ນການຕົກລົງຂອງສາມກຸ່ມເພື່ອສ້າ ສັນຕິ ໃນຣາຊອານາຈັກລາວຈຶ່ງຖືກຂັດຂວາງໂດຍກຸ່ມຄອມມູ ສເມີນາ ອາດຈະມີບາງທ່ານໃຫ້ທັສນະວ່າ ໃນປະເທ ກິດ ຝຣັ່ງເສສ ແລະອີຕາລີ ມີກຸ່ມຄອມມູນິສຢ່າ ຕ້ອງຕາມກົດໝາຍ ຍັງຢູ່ຮ່ວມກັນກັບຝ່າຍອື່ນຢ່າງມີ ເປັນດ້ວຍເຫຕໃດກຸ່ມຄອມມູນິສໃນ າວ ຈຶ່ງຢູ່ຮ່ວ ກຸ່ມອື່ນບໍ່ໄດ້ .

ຄຳຕອບງ່າຍໆກໍຄື ກຸ່ມຄອມມູ ນິສ ໃນ ອັງ ຝຣັ່ງເສສ. ແລະອີຕາລີ. ເປັນກຸ່ມຄອມມູນິສຂອງ ຕົນເອງ ບໍ່ເປັນເຄື່ອງມືຫລືບໍຣິວານຂອງຜູ້ອື່ນ ແລະ ສແວງຫາອຳນາດໃນປະເທສກໍດຳເນີນ ໄປ ດ້ວຍ ວິ ທີ ເລືອກຕັ້ງ ກຸ່ມຄອມມູນິສດັ່ງກ່າວ ຈຶ່ງຢູ່ຮ່ວມກັບກຸ່ມ ໄດ້ໂດຍສັນຕິ ສ່ວນກຸ່ມຄອມມູນິສໃນລາວ ບໍ່ ກຸ່ມຄອມມູນິສຂອງຊາດ ເປັນພຽງແຕ່ເຄື່ອ ຂອງວຽດນາມເໜືອ ແລະຈີນແດງ ແລະກ ສແວງຫາອຳນາດພາຍໃນປະເທສ ກໍດຳ ໄປດ້ວຍວິທີການໃຊ້ກຳລັງ ຈຶ່ງເປັນເຫດໃ ຮ່ວມກຸ່ມອື່ນບໍ່ໄດ້ໂດຍສັນຕິ .


# ຮ້ານຊີບ ຊ່າງຕັດເຄື່ອງ

ເລຂທີ່ 42 C ຖນນສາມແສນໄທ (ສີຫອມ) ວຽງຈັນທນ໌

# TAILORING HONGKONG

No. 42 RUE SAMSENTHAI (SIHOM) VIENTIBNE (LAOS)

## ເບື້ອງຫລັງຂ່າວສັງຄົມ

□ ຕໍ່ຈາກໜ້າ 8 ...

ຣະມາດວາມດີ ຜູ່ໃຫຍ່ບໍ່ຄ່ອຍລືມໄດ້ງ່າຍໆ ແຕ່ໃນເອງດຽວກັນຄໍລັມສັງຄົມກໍເຄີຍເຮັດໃຫ້ເສັຽຜູ່ເສັຽຄົນຫລາຍແລ້ວ ຫາກວ່າຄົນຜູ່ນັ້ນໄປມີການກະທຳອັນເປັນເສັຽຫາຍຂອງສ່ວນຣວມເຂົ້າ ເພາະເຫຕນີ້ນັກຂຽນສັງຄົມຈຶ່ງມັກເປັນບຸກຄົນທີ່ຜູ່ອ່ານທັງຮັກທັງຊັງ ແລະກ່າວຂານຫລາຍກວ່າໝູ່ໃນວົງສັງຄົມ....

ໃນຂັ້ນດານັກຂຽນນຳກັນ ໃນສຳນັກງານໜັງສືພິມຕ່າງ ນັກຂ່າວສັງຄົມຈະເປັນຜູ່ທີ່ໄດ້ຮັບບັຕເຊີນໄປໃນງານນັ້ນງານນີ້ຢູ່ບໍ່ຂາດ ຖ້ານັກຂ່າວສັງຄົມຈະຕ້ອງອນທຸກງານແລ້ວ ບໍ່ມີທາງຈະເຮັດໄດ້... ຜູ່ຂຽນເຄີຍສມອງເມື່ອຖືກຕໍ່ວ່າບໍ່ໄປຮ່ວມໃນງານ ແຕ່ກໍ່ຂໍໃຫ້ຄິດຫາຣະທີ່ຮັບມອບໝາຍກໍໜັກມີຢູ່ແລ້ວ ເມື່ອມາພົບັຕນັດດຽວສາມສີ່ແຫ່ງ ກໍໄດ້ແຕ່ນັ່ງທ້ອຍຍັ້ນເຍື້ຍ.... ເພາະທີ່ຂຽນຂ່າວນັ້ນເປັນງານທີ່ຢູ່ໃກ້ກັບຜູ່ອ່ານຫລາຍທີ່ສຸດເສະນັ້ນຕົວບຸກຄົນ ທີ່ເຂົ້າຮັບໜ້າທີ່ນີ້ຈຶ່ງມີອິດທິພົນຈູງຫລາຍທີ່ສຸດ ດ້ວຍເຫຕນີ້ຜູ່ຈະອັນອາສາເຂົ້າມາຂຽນສັງຄົມນັ້ນ ຈະຕ້ອງເປັນຄົນມີໃຈກຸ້ມທ່ຽງ ໃຈໃຫຍ່ຮັກພັກພວກ ເບິ່ງມະນຸດໃນສາຍຕາທີ່ດີຢູ່ສເມີ....

ຫວັງວ່າຂໍ້ຂຽນພຽງແຕ່ສັ້ນໆເທົ່ານີ້ ຄົງເປັນແນວທີ່ແກ່ທ່ານຜູ່ສົນໃຈຂ່າວດ້ານນີ້ບໍ່ຫລາຍກໍນ້ອຍ.... □

## ຄ່າປະເພນີ

ຕໍ່ຈາກໜ້າ 63

ນຕ່າງໆ ຈົນເນີດຄົນຄູ່ນີ້ງເສັຽໄປ ເມື່ອກັບມາໄດ້ບໍ່ພໍສອງສາມເດືອນປາກົດວ່າ ຝ່າຍຍິງຫວັງພຽງທີ່ໃຜໆກໍຮູ້ວ່າຜູ່ຊາຍແມ່ນໃຜ ໝ່ນັ້ນກໍຍັງບໍ່ຮັແລະມີຄົນນອີກສົມພອນບໍ່ຄິດຈັກເມັດວ່າ ສົມສັກຄົນໜຶ່ງເຄີຍກັນຂມາດນີ້ຈະດຶດອະກຸສົນກັບນາງເຖິງພຽງນີ້ ໜ້າກາກສັງຄົມເຂົາແກວ່ງຖິ້ມໄວ້ກ້າຍເປັນຂ້າ ຍັງບຸດເຈົ້າເຊີຄອຍໂອກາສທີ່ຈະດຸບເຍື່ອ

"ພອນ" ສຽງຫ້າວມ່ວນຫູດັງຂຶ້ນຂ້າງໆ ດີຍິ່ງບອກໃຫ້ຮູ້ວ່າປອດໄພແລ້ວ ຍິງສາວເງີຍໜ້າຍິ້ມເບິ່ງເຂົາອາຍຈົນພືແກ້ມແດງຂຶ້ນ ເມື່ອພົບກັບສາຍຕາເຈົ້າຊູ້ ເຂົາສົມພອນບໍ່ຽງໄຕອອກຈາກອ້ອມກອດອັນອົບອຸ່ນນັ້ນຈູງມືອອກເຕີຣ໌ມາປະຕູຈູກເຂົາອອກແລ້ວເວົ້າວ່າ

ເມື່ອອ້າຍກໍ່ງເປັນຜູ່ເຮັດໃຫ້ພອນເຫັນຄຸນຄ່າ ປະເພນີເກົ່າເຮົາແລ້ວ ອ້າຍເອງກໍຢ່າເປັນຜູ່ທຳລາຍມັນເລີຍແລ້ວບານປະຕູກໍ່ງັບເຂົ້າ ສຽງເຂົາຮ້ອງເຂົ້າມາວ່າໃວເດີພອນ ພໍ່ໃຫ້ອ້າຍມານຳລົງໄປກິນເຂົ້າເຈົ້າແຕ່ຮີ....ຂີຫລັກແທ້ງສາວອັນນີ້ ຕ້າຍ....ຕາຍແລ້ວ ຍິງສາວຮ້ອງຜູ່ດຽວ ອາຍພໍ່ລະຕີບາດນີ້ ຣີ ອ້າຍກໍ່ງນີ້ ຍິງສາວຄິດຢ່າງເດືອດຮ້ອນແຕ່ກໍແຍງໄປດ້ວຍຄວາມສຸກຢ່າງປລາດເມື່ອຈັດການ ນຸ່ງເຄື່ອງຮຽບຮ້ອຍແລ້ວ ສົມພອນ ກໍຟ້າວລົງມາ ພົບພໍ່ແລະວ່າທີ່ລູກເຂີຍເພິ່ນກຳລັງລົມກັນຍາມພໍ່ໄອ້ໜັນມາເບິ່ງລູກສາວດ້ວຍຄວາມຮັກແລະອິດູ ຕົນ... ຍິງສາວ ຮ້ອງຖາມໃບໜ້າແດງວ່າ ?

"ນັ້ນພໍ່ຖ້າລູກເບາະ ຂນ້ອຍ....ລູກຂໍໂທດຫລາຍໆທີ່ຕື່ນສວາຍ,,ແຕ່ບັດນີ້ໄປ,,ລູກຈິບໍ່ໃຫ້ພໍ່ຖ້າມາເຂົ້າອີກແລ້ວ"

ສົມພອນເຫລືອດສາຍຕາໄປເບິ່ງຜູ່ນັ່ງຢູ່ຫົວໂຕະໜ້ອຍນຶ່ງຢ່າງນ້ອຍໃຈ..ເພາະຕັ້ງແຕ່ ນາງຍ່າງເຂົ້າໃນຫ້ອງອາຫານມາ. , ຍັງບໍ່ເຫັນເຂົາສົ່ງແສງຕາໃຫ້ຈັກເທື່ອ

•ເອີ,ຂອບໃຈ,.ຂອບໃຈ ລູກຫລາຍໆ,ສົມພອນ, ເອົ້າ

ກໍ່ງລົງມີເລີຍ.? ທ່ານໂສພັນທ໌ວຣິ.ຣິ,ຢ່າງອາຣົມດີ ເຮັດໃຫ້ລູກສາວລົມດຽວ ບໍ່ກ້າຂັດຂືນ..ຣິ..ນີ້ເຂົາຄົງຫລອກໃຫ້ເຮົາຫລົງເຊື່ອ.. ຫລອກດ່າຫລິ້ນ.ເວົ້າຈັ່ງໃດ ກໍ່ຢ່າເທາະ ສົມພອນຕັດສິນໃຈແລ້ວວ່າຈະເຊົາການປະພຶດໂຕດີແຕ່ກ່ອນ ເພາະເຫດການແລະແສງຕາປລາດທີ່ສົມສັກເບິ່ງນາງຕາມມາຫລອກຫລອນ..ໃຫ້ຢ້ານຢູ່ບໍ່ເຊົາ.

"ຂໍ້ວນັ້ນພອນ ..ຂອງກິນບໍ່ຖືກປາກຫວະ" ບິດາຜູ້ຮັກລູກສາວຫລາຍຖາມຂຶ້ນຢ່າງເປັນຫ່ວງ

"ຖືກຫມົດຂນອຍ. ແຕ່ຍັງຕັດສິນໃຈ ບໍ່ຖືກວ່າຈະກິນອັນໃດກ່ອນ ມີແຕ່ຂອງມັກ" ນາງພອນຕອບທ້ອງໆ

"ລອງອັນນີ້ກ່ອນຕີພອນ....ນາອ້າຍຕັກໃສ່ຖ້ວຍໃຫ້" ທ໌ວໃຈທີ່ທ່ຽວ ເພາະຄວາມນ້ອຍໃຈນັ້ນຊູ່ມຊູ່ມຂຶ້ນທັນທີທີ່ໃດຍິນສຽງຖາມ....ນີ້ລະພໍ່ເພິ່ນວ່າຄວາມຮັກມາ... ຍິງສາວເຫລືອດສາຍຕາເບິ່ງ ຫນ້າເຂົາຢ່າງ ຂອບໃຈ

ການຮັບທານອາຫານ ຜ່ານໃປຢ່າງດີ ຍາພໍ່ຂອງສົມພອນຊັກຖາມ ເຣື່ອງນັ້ນເຣື່ອງນີ້ ຢູ່ບໍ່ຂາດ....ແລະກ່ອນຈະລຸກອອກໄປຕະ ຍາພໍ່ຈຶ່ງໂງຖາມລູກສາວວ່າ

"ເອີ້ .... ພອນ.... ແລ້ວເຣື່ອງພວກລູກວິຊາຈັ່ງໃດກັນລະ?" ຍິງສາວເງີຍຫນ້າຂຶ້ນແນມບິດາດ້ວຍສຽງແຈ່ມໃສວ່າ

"ລູກຍັງບໍ່ຄິດເຖິງການແຕ່ງງານເທື່ອ.... ຍາພໍ່.... ຍາພໍ່....ຢາກຢູ່ເປັນໂສດໄປຈົນຕາຍ"

"ຮ້າ....ອ້າຍກໍ່ງເຂົ້າຊິຍອມເບາະ....ຣິ.... ແຕ່ລູກເຮີຍໂບຮານເພິ່ນວ່າ....ຊິຢູ່ຜູ້ດຽວລ້າໆນະບໍ່ໄດ້ດອກອີກຢ່າງນຶ່ງພໍ່ກໍຮູ້ໂຕວ່າເຖົ້າແກ່ລົງຫລາຍ.... ມີລູກກະຜູ້ດຽວ....ຢາກມີຫລານມີເຫລນນຳແລະ.... ແລ້ວພໍ່ຄືຊິຕາຍຢ່າງເປັນສຸກ"

ຊາຍຊຣາເວົ້າຈົບລົງແລ້ວກໍ່ຍ່າງອອກຫ້ອງອາຫານໄປ....ປ່ອຍໃຫ້ຫນຸ່ມສາວທັງສອງ ຢູ່ນຳກັນດ້ວຍຫົວໃຈຂອງເຂົາປາຖນາ

"ຣິ.... ຍາພໍ່ຈັກເວົ້າຫຍັງ ກະບໍ່ຮູ້" ຍິງສາວຈົ່ມໃ
ຫນ້າແດງເປັນສີກຸຫລາບ...ດ້ວຍຄວາມອາຍ

"ກະອ້າຍບອກເພິ່ນຫມົດແລ້ວນີ້" ເຂົາບອກແລ້
ຫນ້າບານດ້ວຍຄວາມສຸກ....ແສງຕາຄົມຂອງລາວບໍ່ລະຈາ
ໃບຫນ້າຂອງຍິງສາວຄູ່ຫມັ້ນ

"ເອະບອກຫຍັງຫີ ນາງຖາມສຽງຕື່ນໆ"

"ບອກວ່າສົມພອນຄວນແຕ່ງງານສາ.... ໃນເດືອ
ຫນ້ານີ້"

"ຕາຍແລ້ວ....ຈຶ່ງບອກແບບນັ້ນ....ຣີອ້າຍກົງນີ້"

"ອ້າວພອນ.... ຄວນຊິຂອບໃຈອ້າຍໃດຫັ້ນ...
ຕາມປະເພນີລາວເຮົານະຜູ້ຍິງບໍ່ຢູ່ເປັນໂສດດອກ ....ແລ
....ກະລູກເອີລູກທີ່ດີນະຄວນຟັງຄວາມພໍ່ແມ່.... ແລ້ວ
ເຫັນວ່າພອນເປັນລູກທີ່ດີຢູ່ແລ້ວຄົງຢາກສນອງຄວາມຕ້
ການຂອງເພິ່ນ.... ເມື່ອພໍ່ເຮົາເພິ່ນຢາກເຫັນຫນ້າຫລ
ໄວໆ...ເຮົາຄວນເອົາໃຈເພິ່ນ... ບໍ່ແມ່ນຫວະ....ຣິ...ຣິ?

ໃຫ້ອ້າຍກົງນີ້....ມີແຕ່ຂູເຂົາເລີຍ....ຈ້າງກະບໍ່
....ອວດດີວ່າເຂົາບໍ່ໄດ້ຄ່າດອງກໍ່ຢ່າມາແຕ່ງເລີຍ ຍິງສ
ເວົ້າຢ່າງແງ່ງອນ

"ອ້າວບໍ່ໃຫ້ແຕ່ງຊິເຮັດຈັ່ງໃດ.... ?ຊາຍຫນຸ່ມຖ
ຢ່າງສົງໃສ"

"ກະພອນຊິໂດດນ້ຳນີ້ມາ....ບໍ່ເອົາຫວະ" ຍິງສາວ
ປົນສຽງຫົວ....ເຮັດໃຫ້ດອກເຕີຫນຸ່ມ ອົດໃຈບໍ່ຟັງລຸກຂຶ້ນ
ມີນາງກຸມໃວ້ຢ່າງແຜ່ວເບົາ....ສຽງຫົວຫນຸ່ມສາວທັງສອງ
ປະສານກັນຂຶ້ນ.... ກ້ອງອອກໄປທາງຣະບຽງນອກ...
ຊາຍຊຣາຜູ້ນຶ່ງກຳລັງນັ່ງພັນຄ້ອນຢາ ຊ້າໆຢູ່ຢ່າງ ປັນສຸ
ກຸ່ມຄ້ວນຈາງຫາຍໄປໃນອາກາດ....ຄືກັນກັບຊີວິດຄົນ
ຕ້ອງດັບໄປເຫລືອແຕ່ເຖົ້າຖ່ານ.... ປອຍລູກ ...ນໄວ້
ຕຣະກູນຕໍ່ໄປ

## ກົດໝາຍ

( ຕໍ່ຈາກໜ້າ 39 )

...ອກສາມຄົບຖ້ວນ ເພື່ອສະແດງວ່າຜົວເກົ່ານັ້ນໄດ້ເສັຽຊີວິດ ...ະສະນັ້ນເພື່ອນຂອງທ່ານຈະຟ້ອງເມັຽຖາມນິສາຈານແລະຈະ ...ຟ້ອງເອົາເມັຽຄືນກໍ່ບໍ່ໄດ້ ເວັ້ນເສັຽແຕ່ວ່າຜູ່ເປັນຜົວທັງ ...ສອງຈະໄດ້ຕົກລົງກັນເອງ ແລ້ວຖາມຄວາມສມັກໃຈຂອງ ...ເມັຽເທົ່ານັ້ນ ( ຖ້າຫາກວ່າເປັນຜູ່ຊາຍໄປມີເມັຽສອງແລ້ວ ...ກໍ່ຍັງພໍຕົກລົງກັນໄດ້ ໂດຍແບ່ງຊັ້ນກັນເປັນເມັຽນ້ອຍ ແລະເມັຽຫລວງ ສ່ວນຜູ່ຍິງຈະເອົາຜົວນ້ອຍຜົວຫລວງ ...ແລ້ວມັນບໍ່ເຄີຍມີ ) ແນວໃດກໍ່ຕາມໃນທາງສ່ວນຕົວແລ້ວ ...ຖ້າຫາກຂ້າພະເຈົ້າເປັນຜົວໃໝ່ ຂ້າພະເຈົ້າຈະສລະເມັຽ ...ເກົ່າຂອງໝູ່ຄືນຢ່າງແນ່ນອນ ເພາະຜູ່ຍິງບໍ່ມີນາງຄົນດຽວ ໃນໂລກ .

ແຕ່ໃນແງ່ຂອງກົດໝາຍ ຖ້າຈະເອົາກັນຄັກໆແລ້ວ ກໍ່ຕ້ອງຖາມວ່າ ແມ່ນໃຜຢັ້ງຢືນວ່າ ເພື່ອນຂອງທ່ານຕາຍໄປສນາມຣົບ ຈຶ່ງເມັຽໄປແຕ່ງງານໃໝ່ .

ແຕ່ຖ້າຈະໃຫ້ຂ້າພະເຈົ້າຈາຣະໄນ ຄວາມ "ຊວຽ" ຂອງຜູ້ກ່ຽວໃນເຣື່ອງນີ້ແຕ່ລະຄົນ ແລ້ວຂ້າພະເຈົ້າວ່າ "ຜົວເກົ່າ" ຕົກຢູ່ໃນສພາບເຮັງ ຊວຽ ຮວຽໃໝ່ ເຮັງເພາະລອດ...າຽບາໄດ້ ຊວຽ: ເພາະເມັຽເອົາຜົວໃໝ່ ຮວຽ ເພາະຈະ...ໄດ້ເມັຽໃໝ່ຫລືເມັຽເກົ່າຄືນ ສ່ວນຜົວໃໝ່ ນັ້ນກໍ່ຢູ່ໃນສະ...ພາບດຽວກັນເພາະແຕ່ງງານແລ້ວຖືກຜົວເກົ່າມາ ທວງເອົາ...ເມັຽຄືນສ່ວນຜູ້ເປັນເມັຽນັ້ນ ຂ້າພະເຈົ້າວ່າ "ຊວຽ ຫລາຍກວ່າ" ເພາະຕົກຢູ່ໃນສພາບທີ່ວ່າຈະຖິ້ມກໍ່ເສັຽດາຽ ຈະບາຍຂີ້ດຽດຄັນຈະຖິ້ມທັງສອງກໍ່ອາໄລອາວອນຈະປະຜົວໃໝ່ຫລືຜົວເກົ່າກໍ່ເສັຽດາຽຖ້າຈະເອົາທັງສອງ ເປັນຜົວນ້ອຍຜົວຫລວງ ເພີ່ນກໍ່ວ່ານັ້ນຂອງນີ້ລະໝາ ພຣະພຸທະອົງ ຈຶ່ງໄດ້ຊົງຕັດວ່າ ທຸກໃຂ ທຸກຂັງ ອະນິດຈາ ອະນິດຈັງ ບໍ່ມີຫຍັງແນ່ນອນໃນໂລກສົງສາຣນີ້ "ດັ່ງນັ້ນທາງທີ່ດີທີ່ຄວນແລ້ວຂ້າພະເຈົ້າວ່າ ນາງຄວນສົ່ງລູກຜົວເກົ່າໃຫ້ຜົວເກົ່າ ແລະລູກຜົວໃໝ່ໃຫ້ຜົວໃໝ່ໄປລ້ຽງ ແລ້ວກັດກິຈສາບັນທາສຈະລູກແລະຜົວໄປ ບວຊຂາວເຊັຽກີວ່າ... ເພື່ອຮັກສາສັມພັນກະພາບຄວາມຮັກຂອງທັງຜົວເກົ່າແລະຜົວໃໝ່ໄວ້ ●

## ໝານ້ອຍ

( ຕໍ່ຈາກໜ້າ 45 )

ຣັສມີເຂດອັນຕຣາຍມາແລ້ວ ມັນກໍ່ວ່າຍໜ້າມາເບິ່ງຜູ່ເປັນນາຍ ເຫັນຢ່າງບໍ່ຄ່ອຍຖືກທາງ ສແດງວ່ານາຍຜູ່ເປັນມະນຸສກິນເຫລົ້າເມົາມາແລ້ວ

"ຄົນກິນເຫລົ້ານັ້ນກໍ່ເມົາຄືໝາກິນຂີ້ເຫລົ້ານັ້ນລະ" ບັກດຳຄິດເວົ້າຢູ່ໃນໃຈ ມັນບໍ່ໄດ້ຄິດຄຽດຕໍ່ການຣຸບຕີຂອງຜູ່ເປັນນາຍບໍ່ຫົວຊາຕໍ່ອາຣົມບ້າໆ ປະຈຳຕົວຂອງມນຸສ ມັນຄິດວ່າເມື່ອມະນຸສໝົດອາຣົມບ້າໄປແລ້ວອາຣົມດີກໍ່ຈະກັບຄືນມາເປັນປົກກະຕິເທົ່າເປັນດ້ວຍເຫດໃດ ມນຸສຜູ່ມີຄວາມຄິດສູງຈຶ່ງມັກຄິດທໍຣະຍົດຕໍ່ຊາດບ້ານເມືອງຖ້າມະນຸສຮູ້ຈັກກະຕັນຍູຄືກັບໝາທີ່ຮູ້ບຸນຄຸນຂອງຜູ່ລ້ຽງ ເທື່ອແລ້ວແຜ່ນດິນຂອງມະນຸສກໍ່ຈະເຕັມໄປດ້ວຍຄວາມສງົບສຸກຢ່າງບໍ່ຕ້ອງສົງໃສໃດໆອີກເລີຍ...." ●

## ເຂື່ອນນ້ຳງື່ມ

( ຕໍ່ຈາກໜ້າ 40 )

ຈະຈ່າຍກະແສໄຟຟ້າຊົ່ວຄາວໃຫ້ຈາກເຂື່ອນນ້ຳພອງ ເມື່ອສ້າງເຂື່ອນນ້ຳງື່ມເສັດແລ້ວ ຈະຕ້ອງໃຊ້ກະແສໄຟຄືນໃຫ້ແກ່ປະເທສໄທ ສາຍໄຟຟ້າທີ່ຈະໃຊ້ໃນການນີ້ເປັນຂອງອົງການພັທນາລຸ່ມແມ່ນ້ຳຂອງ

ເມື່ອສ້າງເຂື່ອນນີ້ເສັດແລ້ວ ກະວ່າຈະຜລິດໄຟຟ້າໄດ້ 120 ລ້ານວັດ ແລະຈະປ່ອຍນ້ຳເຂົ້ານາແລະທີ່ກະສິກັມອື່ນໆໄດ້ 32.000 ເຮັກຕ້າ ໃນການຈ່າຍນ້ຳເຂົ້ານາຈຳນວນ 5.000 ເຮັກຕ້າ ຈາກ 32.000 ເຮັກຕ້ານັ້ນ ຣັຖບານອິສຣາເອລຈະເປັນຜູ້ຈັດການທຳໃຫ້ ສຳຫຣັບເຣື່ອງໄຟຟ້ານັ້ນຈະມີການວາງສາຍຈາກເຂື່ອນນ້ຳງື່ມໄປສູ່ ເຂື່ອນນ້ຳພອງ ໃນປະເທສໄທສ່ວນການວາງສາຍໄຟໃນນະຄອນວຽງຈັນເພື່ອໃຫ້ມີໄຟຟ້າໃຊ້ໄດ້ສດວກແລະເປັນປະໂຍຊຕໍ່ການອຸສາຫະກັມຢ່າງແທ້ຈິງນັ້ນ ທາງລາວຈະຈັດວາງສາຍເອງໂດຍເງິນໃຊ້ຈ່າຍສ່ວນນີ້ຈະກູ້ຢືມຈາກເຢັຣະມັນຕະວັນຕົກ

ເຂື່ອນນ້ຳງື່ມນີ້ຈະເປັນເຂື່ອນໃຫຍ່ທີ່ສຸດ ແຫ່ງແຣກໃນຣາຊອານາຈັກລາວ ຈະນຳປະໂຍຊອັນມະຫາສານມາສູ່ພີ່ນ້ອງຊາວລາວເປັນຢ່າງມາກ.....ແລະກໍຄົງຈະລົບລ້າງຂໍ້ກ່າວ

## ສັນຕິພາບເປັນກາງ

■ ຕໍ່ຈາກໜ້າ 33 ■

ໄດ້ມະຫາດ ແລະຜູ້ຖືກລົ້ມຫາຍຕາຍໄປຈິງມາພາກັນດ
ຈົນບໍ່ຮູ້ທີ່ຈະສ້າງຢູ່ທາກິນ ເມື່ອລ້ຽງຊີພປະຈຳວັນ ເ
ຈະອາໃສສເດັດນາຍົກເຈົ້າສຸວັນນະພູມາ ໄປເຈຣະຈາກ
ລາວກໍບໍ່ໄດ້ຮັບຜົລແລ້ວແນວລາວ ຍັງຄົງປັກຫລັກກັບ

ຫາ ຫລັກການໃສ່ຮ້າຍປ້າຍສີຂອງພວກແນວລາວຮັກຊ
ວ່າ ການສ້າງເຂື່ອນນີ້ເປັນການຂ້າປະຊາຊົນທັງປະເທ
ຍາກອນທັມຊາດຈະຫາຍໄປ ນ້ຳຈະຖ້ວມບ້ານຖ້ວມ
ຈົນພິນາສຈິບຫາຍ ຊຶ່ງເປັນຂອງທັມດາ ຈະມີບໍຣິເວ
ຖ້ວມເປັນເນື້ອທີ່ກວ້າງໃຫຍ່ " ປ່າໄມ້ " ອັນເປັນຊ
ກອນ ທັມຊາດດ້ວຍເຂົ້າໃຈວ່າຣັຖບານຄົງໄດ້ຫາວິທີ
ໄວ້ລ່ວງໜ້າແລ້ວ ຮວມທັງຖິ່ນຖານບ້ານຊ່ອງຂອງ
ຊົນທີ່ຈະຖືກນ້ຳຖ້ວມດ້ວຍ

ຈະຢ່າງໃດກໍແລ້ວແຕ່ ຄຸນຄ່າອັນມະຫາສານທີ່
ລາວຈະໄດ້ຮັບຈາກພລັງຂອງເຂື່ອນນີ້ ທັງນ້ຳທັງໄຟ
ຈະທຳໃຫ້ຖານະການເສຖກິຈ ການອາຊີພຂອງປະຊ
ໄດ້ດີຂຶ້ນກວ່າທີ່ເປັນຢູ່ໃນຂນະນີ້ຢ່າງແນ່ນອນ

ຂ່າວດີ !

ບຳອາ [ທ້າວບຸນແປງ]

△ *ນັກກິລາ ນັກສຶກສາ ໂຜດຊາບ !*

**ຮ້ານບຳອາ** ( ທ້າວບຸນແປງ ) ຈຳໜ່າຍເຄື່ອງຮຽນ ເຄື່ອງຂຽນ ທຸກຊະນິດ ເຄື່ອງກິລາທຸກປະເພ
ແລະແຜ່ນສຽງ ໂດຍຣາຄາຍ່ອມເຢົາ ເມື່ອທ່ານຕ້ອງການຂໍໄດ້ໂຜດແວະຊົມທີ່ຮ້ານ ບຳອາ (ທ້າວບຸນແປ
ເລຂທີ່ 26 ຖນົນເຈົ້າອະນຸ ວຽງຈັນທນ໌ ໂທຣ. 2507

ງ້ອ ທຳການຕໍ່ສູ້ຕໍ່ໄປ ຈຶ່ງເປັນການປຽບຍ່ຳທຳລາຍສັນ ະຈີເນວປີ 1962 ຢ່າງຮ້າຍແຮງ ເປັນການປ່ອຍໃຫ້ ຣຣັບຣາຂ້າພົນໃນລາວຍຶດເຍື້ອອອກ ແລະນັບມື້ນັບຮ້າຍ ງຍິ່ງຂຶ້ນໄປເປັນລຳດັບເມື່ອເຫັນເປັນໄປດັ່ງນັ້ນ ປະຊາ ຣາສດອນຈຳນວນບໍ່ນ້ອຍນີ້ ຈຶ່ງພາກັນຄິດວ່າຈະນຳກາບ ພຣະບາດສົມເດັດພຣະເຈົ້າມະຫາຊີວິດ ຈົ່ງຊົງປົງພຣະ ຣຽກເຈົ້າລາວທັງສາມກຸ່ມມາປະຊຸມຈ້ອງພະພັກຂອງພະອົງ ະໃຫ້ທັງສາມເຈົ້າລາວກາບທູລອງຕໍ່ພຣະອົງ ເຖິງເຣື່ອງທີ່ ກຕ້ອງຄ່ອງກັນ ເພື່ອໃຫ້ພຣະອົງຊົງລົງພຣະທາລີໄທແກ້ ລາວສາມຝ່າຍມີຄວາມເຂົ້າໃຈແລະຖືກ ຕ້ອງປອງດອງກັນ

ມາໃນປີໃໝ່ນີ້ ອັນເປັນປີທີ່ພວກເຮົາເລືອກເອົາຜູ້ ນຣາສດອນຜູ້ໃໝ່ເຂົ້າມານັ່ງໃນສະພາ ຜູ້ແທນຊຸດນີ້ ເວົ່າຈະມີຜູ້ແທນເກົ່າ ໄດ້ຖືກຮັບເລືອກກໍດີ ແຕ່ແນວ ແລະວິທີການທີ່ຈະແກ້ໄຂບັນຫາລາວເຮົາໃຫ້ທຸເລົາເບົາ ງລົງນັ້ນ ອາຈມີໃໝ່ຢູ່ຫລາຍຢ່າງ ດັ່ງນັ້ນພວກເຮົາຈຶ່ງ ເຍຕິດຕາມ ການດຳເນີນງານຂອງຜູ້ແທນຊຸດນີ້ ຢ່າງໃກ້ ທີ່ສຸດ ແຕ່ເທົ່າທີ່ໄດ້ຕິດຕາມມານີ້ບໍ່ທໍ່ໃດອັນ ກໍມີສິ່ງທີ່ ໃຫ້ພວກເຮົາໂລ່ງອົກໂລ່ງໃຈແດ່ເລັກນ້ອຍຢູ່ແລ້ວ ຄືໃນ ກາສເປີດກອງປະຊຸມໃຫຍ່ຂອງສະພາເມື່ອຕົ້ນເດືອນກຸມ ມີເອງ ປະທານສະພາຄືພະນະທ່ານພຸຍ ຊນະນິກອນ ໄດ້ ນກ່າວຄຳປາໃສຕໍ່ໜ້າບັນດາສມາຊິກສພາຜູ້ແທນຣາສດຣ ງຍືດຍາວ ແຕ່ສິ່ງທີ່ເປັນໜ້າຄິດ ແລະດີໃຈນຳນັ້ນກໍຄື ເຕອນນຶ່ງພະນະທ່ານໄດ້ກ່າວວ່າ " ເຮົາຕ້ອງຍຶດໝັ້ນແລະ ະຕິບັດໃຫ້ຖືກຕ້ອງ ຕາມສັນຍາເຈນີເນວປີ 1962 ການແກ້ ຂບັນຫາລາວນີ້ຕ້ອງແກ້ໄຂກັນ ດ້ວຍສັນຕິວິທີ ດີກ່ວາຈະ ຊ້ອາວຸດເຂົ້າປະຫັດປະຫານກັນຖ້າ ຈຳເປັນຕ້ອງໃຊ້ກໍເພື່ອ ອງກັນຕົວທັ້ນ" ເມື່ອ ພວກເຮົາໄດ້ ຍິນຄຳດັ່ງກ່າວນັ້ນກໍ າໃຫ້ພວກເຮົາຄິດໄດ້ໂດຍເຫັນໂລດວ່າໂສມໜ້າຂອງການ ເມືອງຂອງ ລາວເຮົາໃນ ປີນີ້ອາດປ່ຽນ ໄປໃນແງ່ດີຫລາຍ ກວ່າ ແງ່ຮ້າຍ ແລະຈະມີວິທີການແກ້ໄຂ ຢ່າງຄ່ອງແຄ້ວດີ ກວ່າສໄໝຊຸດຜູ້ແທນປັນຍາຊົນທີ່ຜ່ານໄປແລ້ວ

ຄືດັ່ງພວກທ່ານໄດ້ຮູ້ຢູ່ແລ້ວວ່າ ໃນປັດຈຸບັນນີ້ທຸກ ມຸມໂລກຕ່າງກໍພາກັນຮຽກຮ້ອງໃຫ້ແກ້ໄຂບັນຫາວຽດນາມ ໂດຍສັນຕິວິທີ ປະຊາຊົນໃນໂລກຕ່າງກໍພາກັນອອກສຽງ ປະນາມ ແລະຄັດຄ້ານສົງຄາມຢູ່ວຽດນາມເວລານີ້ວ່າເປັນ ວິທີການສົກະປົກໂສໂຄກເປັນໜ້າຄຽດໜ້າໜ່າຍລະອາຍ ທີ່ສຸດ ດັ່ງນັ້ນການທີ່ພະນະທ່ານປະທານສະພາແຫ່ງຊາດໃຫ້ ທັສນະວ່າ ຕ້ອງແກ້ໄຂບັນສຸດທ້າຍໂດຍສັນຕິວິທີນັ້ນເປັນ ການຖືກຕ້ອງທີ່ສຸດແລ້ວ ກັບຄວາມມຸ້ງມາດປາຖນາຂອງ ປະຊາຊົນລາວ ແລະປະຊາຊົນຜູ້ຮັກຫອມສັນຕິພາບໃນໂລກ ນຳດ້ວຍ ເພາະການເຮັດໃຫ້ລາວມີຄວາມສັນຕິແລະເປັນ ກາງນັ້ນ ເປັນການສົ່ງພົນສະທ້ອນອັນດີໃຫ້ແກ່ການສ້າງ ສັນຕິພາບໃນພາກພື້ນອາຊີອາຄະເນແລະໃນໂລກອີກດ້ວຍ ດັ່ງນັ້ນການທີ່ລາວເຮົາຈະຕ້ອງປະຕິບັດສັນຍາເຈນີເນວ ປີ– 1962 ເພື່ອໃຫ້ລາວເຮົາມີສັນຕິພາບແລ້ວຕັ້ງໝັ້ນຢູ່ໃນ ຄວາມເປັນກາງຢ່າງເຄັ່ງຄັດ ແລະເພື່ອໃຫ້ລາວມີຄວາມຖືກ ຕ້ອງປອງດອງຊາດນັ້ນ ຈຶ່ງຖືເປັນຍອດແຫ່ງຄວາມປາຖ– ນາອັນແຮງກ້າ ແລະຖືກຕ້ອງຂອງປະຊາຊົນ □

## ຕອບບັນຫາຫົວໃຈ

□ ຕໍ່ຈາກໜ້າ 35 □

ຄັ້ງແຣກກໍຄົງຈະທຸກໃຈຍ້ອນຄິດຮອດຄິດເຖິງແຕ່ບໍ່ ກາຍ 1 ເດືອນຫລືສອງເດືອນໄປແລ້ວ ຄວາມຮັກອັນ ຈອມປອມນັ້ນກໍຈະຈືດຈາງໄປເອງ ຂໍຕອບເປັນຄຳຖາມ ເປັນຂໍ້ໆດັ່ງນີ້ ,

1. ຄ. ຮັກຍານ້ອງດີ ຄ. ຮັກເນັຽຄົນທຳ ອິດ

## ບາງເປັນຄົນຂີ້ຫລັບ

( ອ່ານຕໍ່ໜ້າ 39 )

ຕອບອີກວ່າ ບາດັ້ນບໍ່ແມ່ນເຈົ້າຈະແຕ່ງໃຫ້ຜົວນຸ້ນຂຶ້ນອ້ອຍ ຮັ່ງລຸ້ມຢູ່ມາ

ຄຳມາຈຶ່ງຮູ້ໄດ້ທັນທີວ່າ ມີນັກເລງແອບມາຫລອຍຂອງດີເມັຽຕົນເສັຽແລ້ວ ຍ້ອນເມັຽຕົນເປັນຄົນຂີ້ຫລັບຂີ້ນອນນັ້ນເອງຈຶ່ງມາໃຫ້ເມັຽຕົນເສັຽທ່ານັກເລງດີດາວນັ້ນບໍ່ໄດ້ ຈຳຈະຕ້ອງໄປແຈ້ງເຈົ້າໜ້າທີ່ ໃຫ້ຈັບແມວ ອະໄນຍປາຍ້າງ ມາລົງໂທສໃຫ້ໄດ້ວ່າແລ້ວຕົນເຊົາ ຈຶ່ງມາແຈ້ງໃຫ້ເຈົ້າໜ້າໄດ້ຊາບຄວາມດັ່ງກ່າວ ●

ນັ້ນແລ້ວ ຫວັງວ່າຍານ້ອງຄົງເຂົ້າໃຈຄວາມໝາຍດີ .

2. ຍານ້ອງຢ່າໄດ້ຍ່າງເຂົ້າໄປຫາຂວ່າກ ທາ ໜານ ຊີວິຕຂອງຍານ້ອງຍັງໄປໄກອະນາຄົດຍັງສົດໃສ ຍານ້ອງລືມເຂົາເສັຽໃຫ້ ຄິດວ່າມັນເປັນຝັນຮ້າຍທີ່ຜ່ານ ມາ ໃນ ມື້ຄືນນີ້ເທົ່ານັ້ນ ຖ້າຍານ້ອງໄປຢູ່ນຳເຂົາຈະຕ້ອງທຸກໃຈເທົ່າຕາຍເພາະ ຄ. ເປັນຄົນເຈົ້າຊູ້ປະຕູດິນ

3. ຈະໄປຢູ່ຕ່າງແຂວງອ້າຍເຈົ້າກໍຂໍສນັບ ສນູນ ນຳ ແຕ່ບໍ່ຢາກໃຫ້ອອກໂຮງຮຽນ .

4. ຈະຟ້າວແຕ່ງງານເຮັດຫຍັງ ຍານ້ອງກໍຍັງເປັນນັກຮຽນຢູ່ກໍຕັ້ງໃຈຮຽນຈົນສຳເຣັດຈະບໍ່ດີກວ່າບໍ ຢ່າຟ້າວຢາກໄດ້ຜົວແຕ່ນ້ອຍເທາະ ຂໍໃຫ້ຍານ້ອງຮຽນຊີວິຕອັນຮ້າຍແປດພັນຫລ່ຽມນີ້ໃຫ້ພຽງພໍເສັຽກ່ອນຄ່ອຍແຕ່ງ ງານ ຄືນວ່າຍານ້ອງຍັງໂຊກດີຢູ່ ທີ່ບໍ່ມີຫລັກຖານພະຍານອອກມາໃຫ້ ໂລກຮູ້ເຫັນນຳ....ຈົ່ງໝັ່ນຮຽນລືມ ຄ. ເສັຽໃຫ້ສນິດຕັ້ງຕົ້ນຊີວິຕໃໝ່ ຄິດເສັຽວ່າມັນເປັນຄວາມຝັນຮ້າຍຜູ້ຊາຍຍັງມີເຕັມໃຫ້ຍານ້ອງເລືອກເຟືອຄວາມ ສຸກ ສົດຊື່ນໃນຊີວິຕ .

ໂອກາດໜ້າພົບກັນໃໝ່

## ຈາກບັນນາທິການ

ຕໍ່ຈາກໜ້າ 10

ຜູ້ອ່ານທຸກທ່ານ ພວກເຮົາຄນະຜູ້ຈັດທຳທຸກຄົນຕ່າງຮູ້ສຶກພາກພູມໃຈ..... ແລະຂໍຖືໂອກາສຂອບຂອບຄຸນມາໃນໂອກາສນີ້ດ້ວຍ

ຊາດລາວສບັບທີ 2 ທີ່ໄດ້ມີນັກຂຽນຈຸນກີຕົນເລັກຫລາຍທ່ານໃຫ້ຄວາມສນັບສນູນ ຈົນເຖິງກັບອຸທິດເວລາຂຽນເລື່ອງສົ່ງມາຮ່ວມກັບຄນະຂອງເຮົາ

ມີອາທິເຊັ່ນ ໄພຍ໌ແລະທາງເລືອນຂອງມຸກສາລັນ ຕອບບັນຫາທາງດ້ານກົດໝາຍ ລາວເປັນສນາມແຂ່ງລົດທີທາງການເມືອງ ເຫລົ່ານີ້ເປັນຕົ້ນນອກນັ້ນກໍຍັງມີນິຍາຍສຽດສີການເມືອງຂອງສລອກກອກ ເຣື່ອງໜ້າສອນຄົນ ອ່ານແລ້ວທ່ານຈະໄດ້ຮັບອາຣົມຍາກຫຍິ່ງແຂ້ວ ແລະອາຣົມຄິດ .

ແນວໃດກໍຕາມ ເຮົາຄນະຜູ້ຈັດທຳ " ຊາດລາວ ຣາຍເດືອນ " ທຸກຄົນ ປາຖນາຢາກຮັບຟັງຄວາມຕິຈາກທ່ານຫລາຍກວ່າຊົມ ດັ່ງທີ່ເຮົາໄດ້ຖແລງມາແລ້ວວ່າ ໜັງສືພິມຊາດລາວບໍ່ມີທີ່ປຶກສາແລະທີ່ປຶກສາຂອງເຮົາກໍຄືທ່ານຜູ້ອ່ານທຸກທ່ານໂພດຊ່ວຍກັນຕິເພື່ອຊາດລາວຣາຍເດືອນຈະໄດ້ປັບປຸງຕົວເອງຂຶ້ນເພື່ອເປັນເຄື່ອງມື ເປັນເວທີສະແດງທັສນະແລະບໍຣິການຄວາມບັນເທີງໃຫ້ທ່ານຜູ້ອ່ານໃນໂລກແຫ່ງການຂີດຂຽນຫລືບັນນະພົບ....ຕໍ່ໄປ

ຂໍໄດ້ຮັບຄວາມນັບຖືຈາກເຮົາຄນະຜູ້ຈັດທຳທຸກຄົນດ້ວຍ

ພຣ ຈັນທຣາຊ

□




# Cool Clean Consulate

ຊຸ່ມຄໍ ເຢັນໃຈ ໃນເມື່ອທ່ານສູບຢາຄອງຊູລເລດ
ທີ່ປະສົມດ້ວຍ ມັງໂຕນ  ຄອງຊູລເລດມິຣົດສດ ຊື່ນ

ລິມຊຽງຫວດຜູ່ເທນຈຳຫນ່າຍແຕ່ຜຸ່ດຽວ
ໃນປະເທສລາວ

ຕາລາວ

ສະບັບ ວິຈາຣນ໌
ຣາຍເດືອນ



# ຂ່າວດີ ຂ່າວໃຫມ່




*ຮຽນທ່ານຜູ້ອ່ານທີ່ເຄົາຣົພ*

ບໍຣິສັທຢາສູບລາວ ມີຄວາມຍິນດີທີ່ຈະຂໍເຊີນທ່ານໄດ້ທົດລອງສູບ DIAMOND ກອກຢາຊນິດໃຫມ່ທີ່ໄດ້ປັບປຸງແລະຜລິດອອກມາໄດ້ທັດທຽມກັບກອກຢາຕ່າງປະເທສ ແລະພ້ອມກັນນັ້ນທາງບໍຣິສັທຢາສູບລາວ ກໍ່ມີຄວາມພູມໃຈ ທີ່ຈະຂໍຟັງຄວາມຄິດເຫັນຂອງທ່ານອີກດ້ວຍວ່າ ກອກຢາ DIAMOND ທີ່ເຮົາຜລິດອອກມາໃຫມ່ນີ້ ເຫມາະສົມກັບທ່ານພຽງໃດ ? ຫລືທ່ານມີສິ່ງໃດ ທີ່ຈະໃຫ້ທາງບໍຣິສັທຢາສູບລາວແກ້ໄຂປ່ຽນແປງໃຫມ່ ຂໍທ່ານໂປດຂຽນຄຳຄິດເຫັນຂອງທ່ານ ແລ້ວສົ່ງໄປທີ່ຜແນກໂຄສນາຂອງບໍຣິສັທ 555 ວຽງຈັນ ທາງເຮົາພ້ອມສເມີ ທີ່ຈະມອບຂອງສົມນາຄຸນໃຫ້ແກ່ທ່ານ ແລະຂ້າງໃນຊອງຂອງ DIAMOND ກອກຢາຊນິດໃຫມ່ນີ້ ຍັງມີສລາກຣາງວັລວິທະຍຸ ໄວ້ຄອຍຕອບສນອງທ່ານດ້ວຍ.

ໂປດຢ່າລືມເລືອກສູບ DIAMOND ເສັຽແຕ່ວັນນີ້ ແລ້ວທ່ານຈະມີໂຊຄແລະຕິດອົກຕິດໃຈຕລອດໄປ....

*ຜແນກໂຄສນາບໍຣິສັທ 555*